United Nations
Educational, Scientific and
Cultural Organization

Japan
Funds-in-Trust

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ

## ວິທີສິດສອນ

ປຶ້ມຄູ່ມື ກ່ຽວກັບການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ

5

ປື້ມຄູ່ມື ກ່ຽວກັບການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ

5

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ
# ວິທີສິດສອນ


ໂດຍ: ອຽນ ກັບລານ (Ian Kaplan) ແລະ

ອິງກຣິດ ລີວິສ (Ingrid Lewis)

Published in 2014 by the United Nations Educational, Scientific and Cultural Organization
7, place de Fontenoy, 75352 Paris 07 SP, France

and

UNESCO Bangkok Office

© UNESCO 2014

ISBN 978-92-9223-489-8 (Print version)
ISBN 978-92-9223-490-4 (Electronic version)

This publication is available in Open Access under the Attribution-ShareAlike 3.0 IGO (CC-BY-SA 3.0 IGO) license (http://creativecommons.org/licenses/by-sa/3.0/igo/). By using the content of this publication, the users accept to be bound by the terms of use of the UNESCO Open Access Repository (http://www.unesco.org/open-access/terms-use-ccbysa-en).

The designations employed and the presentation of material throughout this publication do not imply the expression of any opinion whatsoever on the part of UNESCO concerning the legal status of any country, territory, city or area or of its authorities, or concerning the delimitation of its frontiers or boundaries.

The ideas and opinions expressed in this publication are those of the authors; they are not necessarily those of UNESCO and do not commit the Organization.

Open Access is not applicable to non-UNESCO copyright photos.

Copy-editing: Sandy Barron
Design/Layout: Warren Field

TH/DOC/APL/14/042-300

# ສາລະບານ


ພາກສະເໜີ ........................................................ 1

ວິທີສິດສອນໝາຍຄວາມວ່າແນວໃດ? ........................................................ 1

ເປັນຫຍັງວິທີສິດສອນການສຶກສາຮຽນຮ່ວມຈຶ່ງເປັນປະເດັນສຳຄັນສຳລັບການໂຄສະນາສິ່ງເສີມ?........2

ບັນຫາທ້າທາຍ 1: ການຍອມຮັບຄວາມແຕກຕ່າງທີ່ຫຼາກຫຼາຍຂອງຜູ້ຮຽນ........................................................ 4

ການວິເຄາະສະພາບການ ........................................................ 4

ເປົ້າໝາຍຂອງການໂຄສະນາສິ່ງເສີມ........................................................ 5

ບັນຫາທ້າທາຍ 2: ທັກສະໃນການສອນ ແລະ ວິທີສິດສອນ ........................................................ 14

ການວິເຄາະສະພາບການ........................................................ 14

ເປົ້າໝາຍຂອງການໂຄສະນາສິ່ງເສີມ........................................................ 18

ບັນຫາທ້າທາຍ 3: ການປະຕິບັດຕົວຈິງ, ການສ່ອງແສງຄືນ ແລະ ການສະໜັບສະໜູນ ......... 29

ການວິເຄາະສະພາບການ........................................................ 29

ເປົ້າໝາຍຂອງການໂຄສະນາສິ່ງເສີມ........................................................ 31

ຈະຮູ້ໄດ້ແນວໃດວ່າວຽກງານໂຄສະນາສິ່ງເສີມນັ້ນມີຜົນກະທົບດ້ານບວກ ........................................................ 37

ເອກະສານຊ້ອນທ້າຍ ........................................................ 38

# ພາກສະເໜີ

ປຶ້ມຄູ່ມືເພື່ອການໂຄສະນາສົ່ງເສີມສະບັບນີ້ ເຊິ່ງມີຫົວຂໍ້ກ່ຽວກັບ *"ວິທີສິດສອນ"* ເປັນສະບັບທີ 5 ຂອງຊຸດປຶ້ມຄູ່ມືທັງໝົດ 5 ເຫຼັ້ມທີ່ສ້າງຂຶ້ນເພື່ອ *"ສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ"*. ປຶ້ມຄູ່ມືດັ່ງກ່າວນີ້ ແມ່ນສາມາດນຳໃຊ້ໄດ້ເລີຍ ຫຼື ຈະໃຊ້ປະກອບກັບປຶ້ມຄູ່ມືອີກ 4 ເຫຼັ້ມທີ່ຍັງເຫຼືອ ຄື: ເຫຼັ້ມທີ 1 *'ພາກສະເໜີ'*, ເຫຼັ້ມທີ 2 *'ນະໂຍບາຍ'*, ເຫຼັ້ມທີ 3 *'ຫຼັກສູດ'* ແລະ ເຫຼັ້ມທີ 4 *'ວັດຖຸອຸປະກອນ'*.

ໃນນີ້ ປຶ້ມຄູ່ມືເຫຼັ້ມນີ້ ແມ່ນໄດ້ເນັ້ນໜັກໃສ່ບັນຫາສິ່ງທ້າທາຍ ແລະ ອຸປະສັກຕ່າງໆໃນຂົງເຂດວິທີການສິດສອນທີ່ນຳໃຊ້ໃນການສ້າງຄູ. ນອກຈາກນີ້ ຍັງໄດ້ສະເໜີຍຸດທະສາດ ແລະ ວິທີການແກ້ໄຂບັນຫາຕ່າງໆໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນທີ່ກ່ຽວຂ້ອງທາງດ້ານການສຶກສາ ເພື່ອໂຄສະນາສົ່ງເສີມສະໜັບສະໜູນການປັບໃຫ້ແທດເໝາະ, ການພັດທະນາ ແລະ ການຈັດຕັ້ງປະຕິບັດວິທີສິດສອນການສຶກສາຮຽນຮ່ວມ.

## ວິທີສິດສອນໝາຍຄວາມວ່າແນວໃດ?

ປຶ້ມຄູ່ມືສົ່ງເສີມການສຶກສາຮຽນຮ່ວມເຫຼັ້ມນີ້ ໄດ້ຄົ້ນຄວ້າ ກ່ຽວກັບວິທີສິດສອນຢູ່ໃນການສ້າງຄູ ແລະ ຜ່ານການສ້າງຄູກ່ອນໄປປະຈຳການ, ໝາຍຄວາມວ່າ ວິທີສິດສອນທີ່ໃຊ້ສອນຢູ່ໃນສະຖາບັນສ້າງຄູ ແລະ ວິທີສິດສອນທີ່ຄາດຫວັງວ່ານັກຮຽນຄູ ຈະຕ້ອງໄດ້ນຳໃຊ້ວິທີສິດສອນໃນເວລາລົງຝຶກ ຫັດສອນ ແລະ ສອນຕົວຈິງໃນເວລາເປັນຄູສອນ. ຄຳວ່າວິທີສິດສອນໃນປຶ້ມຄູ່ມືເຫຼັ້ມ ແມ່ນໝາຍເຖິງວ່າ 'ຈະສອນຄືແນວໃດ' ເຊັ່ນ: ຈະວາງແຜນການຮຽນ-ການສອນ, ການຈັດຕັ້ງການສອນ, ການດຳເນີນການສອນ, ການປະເມີນການສອນຢູ່ໃນສະຖາບັນການສ້າງຄູ, ໂຮງຮຽນ ແລະ ຊຸມຊົນເປັນໄປຄືແນວໃດ. ວິທີສິດສອນນີ້ ແມ່ນກ່ຽວຂ້ອງໂດຍກົງກັບວິທີເອົາການສຶກສາຮຽນຮ່ວມເຂົ້າສູ່ "ໂລກແຫ່ງຄວາມເປັນຈິງ" ຂອງສະຖາບັນສ້າງຄູ, ຂອງໂຮງຮຽນ ແລະ ຊຸມຊົນ.

ວິທີສິດສອນນີ້ແມ່ນມີສ່ວນພົວພັນ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ກັບຫຼັກສູດການສຶກສາຮຽນຮ່ວມ. ໝາຍຄວາມວ່າ ຫຼັກສູດການສຶກສາຮຽນຮ່ວມສະໜອງຂອບວຽກລວມ ເຊິ່ງໃນຂອບວຽກລວມນີ້ ວິທີສິດສອນການສຶກສາຮຽນຮ່ວມໄດ້ຖືກປະຕິບັດ (ລາຍລະອຽດເພີ່ມເຕີມກ່ຽວກັບຫຼັກສູດໃຫ້ເບິ່ງປຶ້ມຄູ່ມືກ່ຽວກັບ *ການໂຄສະນາສົ່ງເສີມ ເຫຼັ້ມທີ 3*). ເຖິງວ່າຄູອາດຈະມີຫຼັກສູດທີ່ມີເນື້ອໃນ ແລະ ໂຄງສ້າງຂອງການສຶກສາຮຽນຮ່ວມ "ທີ່ຄົບຖ້ວນ" ແລ້ວກໍຕາມ, ຖ້າຫາກຄູບໍ່ຮູ້ວິທີການສິດສອນການສຶກສາຮຽນຮ່ວມ ກໍຖືວ່າການຮຽນ-ການສອນການສຶກສາຮຽນຮ່ວມບໍ່ສາມາດດຳເນີນໄປໄດ້ຕາມຄວາມເປັນຈິງຂອງຫ້ອງຮຽນ.

ໃນປຶ້ມຄູ່ມື ສົ່ງເສີມການສຶກສາຮຽນຮ່ວມເຫຼັ້ມນີ້ ຈະລົງເລິກໃສ່ວິທີສິດສອນການສຶກສາຮຽນຮ່ວມທີ່ມີສ່ວນພົວພັນກັບ:

- ວິທີ ແລະ ທັກສະໃນການສິດສອນ- ໃນນີ້ຕ້ອງຮັບປະກັນວ່າວິທີການຮຽນ-ການສອນໃນການສ້າງຄູ ແລະ ຜ່ານການສ້າງຄູແມ່ນສາມາດມີຄວາມຍືດຍຸ່ນໄດ້, ແມ່ນການເອົານັກຮຽນເປັນໃຈກາງ ແລະ ແມ່ນການຮຽນຮ່ວມຂອງນັກຮຽນທີ່ມີຄວາມຕ້ອງການທີ່ແຕກຕ່າງກັນ; ນັກຮຽນຄູໄດ້ຮັບ

ການຊຸກຍູ້ໃຫ້ສ້າງຊັບພະຍາກອນທີ່ພົວພັນກັບທ້ອງຖິ່ນຂອງພວກເຂົາເອງ, ຊຸກຍູ້ໃຫ້ເຂົ້າໃຈ ແລະ ປະຕິບັດຮູບແບບ ການປະເມີນຄວາມຮູ້ຂອງນັກຮຽນໃນເວລາຮຽນ;

- ການປະຕິບັດຕົວຈິງ, ການສ່ອງແສງຄືນ ແລະ ການສະໜັບສະໜູນ-ຕ້ອງຮັບປະກັນວ່າ ນັກຮຽນຄູມີໂອກາດໃນການສິດສອນຕົວຈິງ ແລະ ໄດ້ມີການສ່ອງແສງສະທ້ອນຄືນ ໂດຍນຳໃຊ້ ການວິໄຈພາກປະຕິບັດ ແລະ ນັກຮຽນຄູຕ້ອງໄດ້ຮັບການຊຸກຍູ້ສົ່ງເສີມຢ່າງຖືກຕ້ອງ ແລະ ຕໍ່ເນື່ອງ ຕະຫຼອດໄລຍະການຮຽນຂອງພວກເຂົາ, ນັກຮຽນຄູຕ້ອງໄດ້ຮຽນທັກສະການສິດສອນ ສະເພາະເພື່ອເຮັດໃຫ້ການສິດສອນຂອງພວກເຂົາມີການຮຽນຮ່ວມກັນຫຼາຍຂຶ້ນ ເຊັ່ນ: ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ເດັກພິການ, ພາສາ ແລະ ອື່ນໆ.

## ເປັນຫຍັງວິທີສິດສອນການສຶກສາຮຽນຮ່ວມຈຶ່ງເປັນປະເດັນສຳຄັນ ສຳລັບການໂຄສະນາສົ່ງເສີມ?

ໃນທີ່ສຸດ ການສຶກສາຮຽນຮ່ວມແມ່ນຂຶ້ນກັບການປະຕິບັດຕໍ່ກັນຂອງມະນຸດ (ຄົນ) ທີ່ເກີດຂຶ້ນພາຍໃນ ລະບົບການສຶກສາ ແລະ ສັງຄົມ. ສ່ວນໃຫຍ່ວິທີສິດສອນແມ່ນສຶກສາ ແລະ ບົ່ງບອກເຖິງການປະຕິບັດ ຕໍ່ກັນຂອງຄົນທີ່ເກີດຂຶ້ນ ຢູ່ໃນສະຖາບັນສ້າງຄູ, ໂຮງຮຽນ ແລະ ຊຸມຊົນ ແລະ ເປັນພື້ນຖານທີ່ສຳຄັນ ຂອງການສຶກສາຮຽນຮ່ວມ ພ້ອມທັງເປັນເນື້ອໃນຫຼັກໆ ທີ່ຕ້ອງໄດ້ໂຄສະນາສົ່ງເສີມ. ວິທີສິດສອນຂອງ ການສຶກສາຮຽນຮ່ວມເປັນວິທີທາງທີ່ຄູສອນສາມາດນຳເອົາແນວຄວາມຄິດ, ທິດສະດີ ແລະ ເຕັກນິກການ ສຶກສາຮຽນຮ່ວມເຂົ້າໃນການສິດສອນຕົວຈິງ. ແຕ່ວິທີການສິດສອນດັ່ງກ່າວ ແມ່ນຍັງເປັນສິ່ງທີ່ທ້າທາຍ ໃນການປະຕິບັດການສິດສອນຕົວຈິງຢູ່ (ໂດຍສະເພາະແມ່ນຄູ ແລະ ນັກຮຽນຄູຜູ້ທີ່ມີປະສົບການໜ້ອຍ ທາງດ້ານການສິດສອນໃນການຮຽນເປັນຄູຂອງພວກເຂົາ). ວິທີສິດສອນການສຶກສາຮຽນຮ່ວມ ຕ້ອງໄດ້ຮັບ ການປະຕິບັດຕົວຈິງ ແລະ ຕ້ອງໄດ້ຮັບການສະໜັບສະໜູນໄປຄຽງຄູ່ກັບການໂຄສະນາສົ່ງເສີມ, ຕ້ອງຮັບ ປະກັນໃຫ້ການສຶກສາຮຽນຮ່ວມໄດ້ມີການຮັບຮູ້, ເຂົ້າໃຈ, ນຳໃຊ້ຢ່າງກວ້າງຂວາງ ແລະ ລະອຽດອ່ອນ. ໃນທີ່ສຸດການສຶກສາຮຽນຮ່ວມຕ້ອງມີປະສິດທິຜົນທີ່ດີ.

ການສຶກສາຮຽນຮ່ວມພົວພັນກັບທຳມະຊາດ ແລະ ຄຸນນະພາບຂອງການຮຽນ-ການສອນ. ຄວາມຈິງແລ້ວ 'ວິທີການແມ່ນຂໍ້ຄວາມ'. ໝາຍຄວາມວ່າເມື່ອວິທີການສິດສອນເປັນການຮຽນຮ່ວມໃນ ດ້ານຮູບແບບ ແລະ ໜ້າທີ່, ການປະຕິບັດວິທີການສິດສອນດັ່ງກ່າວໄດ້ກາຍເປັນວິທີການໂຄສະນາ ການສຶກສາການຮຽນຮ່ວມ ແລະ ເປັນແຮງດັນໜຶ່ງຂອງແນວຄວາມຄິດ ແລະ ຄາດໝາຍຜົນໄດ້ຮັບຂອງ ປະສົບການໃນການຮຽນທີ່ມີຄຸນນະພາບເພື່ອທຸກຄົນ. ຕົວຢ່າງ: ຖ້າຄູຜູ້ໜຶ່ງສາມາດສອນນັກຮຽນທີ່ມີ ຄວາມສາມາດແຕກຕ່າງກັນຢູ່ໃນຫ້ອງຮຽນ (ຮູ້ວິທີການສິດສອນການສຶກສາຮຽນຮ່ວມເປັນຫຼັກ) ເຊິ່ງນັກ ຮຽນທີ່ມີຄວາມສາມາດແຕກຕ່າງກັນສາມາດໃຫ້ການຊ່ວຍເຫຼືອເຊິ່ງ ແລະ ກັນ. ຄວາມສາມາດສອນໃນທີ່ນີ້ ບໍ່ພຽງແຕ່ຈະເປັນການຊຸກຍູ້ນັກຮຽນ ແລະ ພັດທະນາການຮຽນໃນຕົວຈິງ, ແຕ່ຍັງເປັນການສາທິດໃຫ້ເຫັນ ເຖິງຄວາມສາມາດ ແລະ ຜົນປະໂຫຍດຂອງນັກຮຽນທີ່ມີຄວາມສາມາດແຕກຕ່າງກັນໃນການຮຽນຮ່ວມ ກັນເຊັ່ນ: ຄວາມສາມາດນີ້ເປັນແບບຢ່າງໃນການສິດສອນການສຶກສາຮຽນຮ່ວມຕົວຈິງ.

ເພື່ອບັນລຸວິທີສິດສອນສຶກສາຮຽນຮ່ວມທີ່ສອດຄ່ອງກັບຫຼັກສູດ ແລະ ໃຫ້ການສະໜັບສະໜູນ ຫຼັກສູດ, ບັນດາວິທີການສິດສອນຕ້ອງໄດ້ບັນລຸຈຸດປະສົງທີ່ວາງໄວ້. ໃນພາກຕໍ່ໄປຂອງປຶ້ມຄູ່ມືນີ້ ແມ່ນ

ຈະໄດ້ຍົກໃຫ້ເຫັນຈຸດປະສົງຈຳນວນໜຶ່ງທີ່ໄດ້ຄົ້ນພົບຢູ່ໃນບົດຄົ້ນຄວ້າ[1] ຫວ່າງບໍ່ດົນມານີ້. ຈຸດປະສົງດັ່ງກ່າວນີ້ປະກອບມີຄື:

- ການນຳໃຊ້ວິທີການທີ່ເປັນລະບົບ ເພື່ອຍອມຮັບຄວາມແຕກຕ່າງທີ່ຫຼາກຫຼາຍຂອງຜູ້ຮຽນ ແລະ ການກຳນົດອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມ;
- ການສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການສິດສອນໂດຍເອົານັກຮຽນເປັນໃຈກາງ;
- ນຳໃຊ້ວິທີການຮຽນ-ການສອນທີ່ຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງນັກຮຽນ ແລະ ຫຼີກເວັ້ນການໃຊ້ວິທີການສິດສອນຫຼາຍເກີນໄປເຊິ່ງບໍ່ເໝາະສົມກັບນັກຮຽນຈຳນວນໃດໜຶ່ງ;
- ນຳໃຊ້ວິທີການສິດສອນທີ່ຊຸກຍູ້ຄູສອນໃຫ້ມີຫົວຄິດປະດິດສ້າງ ແລະ ດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນການຮຽນ-ການສອນ ໃຫ້ເໝາະສົມກັບສະພາວະຄວາມເປັນຈິງຂອງທ້ອງຖິ່ນ;
- ປະຕິບັດຮູບການປະເມີນຜົນການຮຽນເພື່ອປັບປຸງ ແລະ ການປະເມີນຜົນການຮຽນຕາມສະພາບຕົວຈິງຂອງເດັກ[2];
- ການສ້າງວິທີການຮຽນດ້ວຍຕົນເອງໃຫ້ແກ່ນັກຮຽນ;
- ການຮັບປະກັນການໃຫ້ຄຳປຶກສາ ແລະ ການຊ່ວຍເຫຼືອທີ່ມີຄຸນນະພາບໃຫ້ແກ່ນັກຮຽນຄູ;
- ການຮັບປະກັນການລົງຝຶກຫັດສອນຂອງນັກຮຽນຄູໃຫ້ພຽງພໍ;
- ນຳໃຊ້ການລົງຝຶກຫັດສອນຕົວຈິງທີ່ສະທ້ອນໃຫ້ເຫັນເຖິງຄວາມຮູ້ຄວາມສາມາດ ແລະ ການສິດສອນທີ່ກ້າວໜ້າ (ນັກຮຽນມີສ່ວນຮ່ວມນຳ) ເພື່ອເສີມຂະຫຍາຍສະມັດຖະພາບໃນການສອນການສຶກສາຮຽນຮ່ວມ.

ໃນເມື່ອການສົ່ງເສີມຫາກດຳເນີນໄປໄດ້ດີແລ້ວ ທ່ານຈຳເປັນຈະຕ້ອງໄດ້ສຶກສາຢ່າງລະອຽດວ່າແມ່ນບັນຫາທ້າທາຍໃດທີ່ມີຢູ່ໃນສະພາບການສະເພາະດ້ານຂອງທ່ານ ແລະ ມີການປ່ຽນແປງຫຍັງແດ່ທີ່ທ່ານຈະຕ້ອງໄດ້ຊຸກຍູ້ຕື່ມ. ຂໍ້ມູນຕ່າງໆ ທີ່ພວກເຮົາສະໜອງໃຫ້ໃນປຶ້ມຄູ່ມືນີ້ ແມ່ນເປັນຄຳແນະນຳເພື່ອສົ່ງເສີມວິທີການສິດສອນການສຶກສາຮຽນຮ່ວມເທົ່ານັ້ນ, ບໍ່ແມ່ນການກຳນົດລະອຽດຕາຍຕົວ.

[1] Forgacs, R. 2012. *ການສ້າງຄວາມເຂັ້ມແຂງໃຫ້ແກ່ການສ້າງຄູ ເພື່ອໃຫ້ບັນລຸເປົ້າໝາຍການສຶກສາເພື່ອທຸກຄົນພາຍໃນປີ 2015. ນັກຮຽນຄູໄດ້ຮຽນແນວໃດແດ່ ເພື່ອປັບປຸງທັດສະນະຄະຕິຕໍ່ການສຶກສາຮຽນຮ່ວມ ແລະ ການປະຕິບັດຕົວໃນເມື່ອພວກເຂົາເລີ່ມສິດສອນ? ການວິເຄາະ ແລະ ວິໄຈການທົບທວນລະບົບການສ້າງຄູກ່ອນປະຈຳການຢູ່ປະເທດ ບັງກະລາເດດ, ກຳປູເຈຍ, ຈີນ, ສ.ປ.ປ ລາວ, ມົງໂກເລຍ, ໄທ ແລະ ປະເທດຫວຽດນາມ (2008-2011).* ບາງກອກ, UNESCO.

[2] ການປະເມີນຜົນການຮຽນຕົວຈິງແມ່ນການປະເມີນແບບເອົານັກຮຽນເຂົ້າຮ່ວມນຳຂະບວນການປະເມີນ. ຕົວຢ່າງການພັນລະນາ: '…ໃຫ້ນັກຮຽນເຂົ້າຮ່ວມໃນການປະເມີນຜົນສຳເລັດຂອງພວກເຂົາເອງ. ການປະເມີນທີ່ແທ້ຈິງແມ່ນອີງໃສ່ການປະຕິບັດຕົວຈິງ, ອີງໃສ່ຄວາມເໝາະສົມທີ່ເປັນຈິງແລະຕາມການສິດສອນ,' ຢູ່ໃນປຶ້ມຂອງອຸຍເນັດສະໂກ. 2004. *ການຮວບຮວມເອົາຄວາມຫຼາກຫຼາຍ: ຊຸດເຄື່ອງມືໃນການສ້າງສິ່ງແວດລ້ອມຂອງການສຶກສາຮຽນຮ່ວມ, ສິ່ງແວດລ້ອມການຮຽນແບບເປັນມິດ-ປຶ້ມຫົວທີ 5- ການຄວບຄຸມຫ້ອງຮຽນຂອງການສຶກສາຮຽນຮ່ວມແບບເປັນມິດກັບຜູ້ຮຽນ.* ບາງກອກ, ອີງການ ອຸຍເນັດສະໂກ, ໜ້າທີ 43.

# ບັນຫາທ້າທາຍ 1

## ການຍອມຮັບຄວາມແຕກຕ່າງທີ່ຫຼາກຫຼາຍຂອງຜູ້ຮຽນ

### ການວິເຄາະສະພາບການ

*ຂໍ້ຈຳກັດຂອງວິທີການທີ່ເປັນລະບົບ ເພື່ອຍອມຮັບຄວາມແຕກຕ່າງທີ່ຫຼາກຫຼາຍຂອງຜູ້ຮຽນ ແລະ ການກຳນົດອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມ*

ເມື່ອຄູສອນບໍ່ໄດ້ຮັບການຊຸກຍູ້ໃຫ້ຄົ້ນຄວ້າເບິ່ງບັນຫາທີ່ມີຢູ່ໃນລະບົບ, ໃນໂຮງຮຽນ ແລະ ຫ້ອງຮຽນຂອງພວກເຂົາທີ່ເປັນອຸປະສັກທີ່ແທ້ຈິງຕໍ່ການສຶກສາຮຽນຮ່ວມ ແມ່ນຈະມີຄວາມສ່ຽງຢູ່ບ່ອນວ່າທຸກບັນຫາແມ່ນຂຶ້ນກັບນັກຮຽນ. ສິ່ງດັ່ງກ່າວນີ້ ສົ່ງຜົນເຮັດໃຫ້ຄູສອນພະຍາຍາມຈັດນັກຮຽນເຂົ້າໃນລະບົບທີ່ບໍ່ໄດ້ມາດຕະຖານແທນທີ່ຈະເຮັດວຽກ ເພື່ອປັບປຸງລະບົບໃຫ້ສອດຄ່ອງກັບຜູ້ຮຽນ. ວິທີການດັ່ງກ່າວນີ້ແມ່ນເປັນການຍັດຄວາມຮັບຜິດຊອບກ່ຽວກັບການສຶກສາຮຽນຮ່ວມໃຫ້ແກ່ນັກຮຽນຢ່າງບໍ່ຍຸຕິທຳ. ຖ້າຄູສອນຫາກບໍ່ໄດ້ຮັບການສະໜັບສະໜູນໃນການຊອກໃຫ້ເຫັນອຸປະສັກທີ່ມີຢູ່ໃນລະບົບເຂົາເຈົ້າກໍຕ້ອງໄດ້ພະຍາຍາມຮັບມືກັບນັກຮຽນທີ່ມີຄວາມຕ້ອງການທີ່ຫຼາກຫຼາຍຢູ່ໃນໂຮງຮຽນ ແລະ ຫ້ອງຮຽນຂອງພວກເຂົາເຈົ້າ. ແຕ່ຖ້າຫາກຄູສອນ ເອົາໃຈໃສ່ແຕ່ອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມ ກໍເຫັນວ່າເປັນການເນັ້ນໜັກຫຼາຍເກີນໄປໃນທາງລົບ ແລະ ເຮັດວຽກຂັດກັບບົດບາດທີ່ສຳຄັນຂອງຄູໃນ ການຍອມຮັບຄວາມແຕກຕ່າງທີ່ຫຼາກຫຼາຍຂອງນັກຮຽນ, ການຮັບຮູ້ ແລະ ການສົ່ງເສີມທ່າແຮງທີ່ມີຄວາມຫຼາກຫຼາຍ ແລະ ອີງໃສ່ຄວາມຫຼາກຫຼາຍດັ່ງກ່າວນີ້ ເພື່ອພັດທະສິ່ງແວດລ້ອມໃນການຮຽນຮ່ວມໃຫ້ມີການປັບປຸງແປງໃໝ່. ດັ່ງທີ່ໄດ້ກ່າວຢູ່ໃນ *ປື້ມຄູ່ມືເພື່ອການສົ່ງເສີມເຫຼັ້ມທີ 1: ພາກສະເໜີ*, ແມ່ນມີຄວາມຈຳເປັນຕ້ອງກຳນົດ ແລະ ແກ້ໄຂອຸປະສັກຕ່າງໆທີ່ມີຢູ່ໃນລະບົບ ເຊິ່ງອາດຈະກີດຂວາງການເຂົ້າຮຽນຮຽນຂອງນັກຮຽນ.ການມີສ່ວນຮ່ວມໃນຂະບວນການຮຽນຂອງນັກຮຽນ ແລະ ການບັນລຸເປົ້າ ໝາຍຄວາມສາມາດທີ່ດີທີ່ສຸດຂອງພວກເຮົາ (ທາງດ້ານວິຊາການ ແລະ ທາງສັງຄົມ). ອຸປະສັກເຫຼົ່ານີ້ອາດພົວພັນເຖິງ ທັດສະນະຄະຕິ (ຄວາມນຶກຄິດ), ການປະຕິບັດຕົວຈິງ, ກຳລັງວັດຖຸ ຫຼື ເງິນ, ນະໂຍບາຍຕ່າງໆ ຫຼື ສິ່ງແວດລ້ອມ. ດັ່ງທີ່ເຫັນຢູ່ເລື້ອຍໆ ອຸປະສັກທາງດ້ານລະບົບທີ່ມີຕໍ່ການສຶກສາຮຽນຮ່ວມ ແມ່ນມີຫຼາຍ, ເກາະກ່າຍກັນ ຫຼື ຊ້ຳຊ້ອນກັນຫຼາຍ. ຕົວຢ່າງ: ທັດສະນະຄະຕິ (ຄວາມນຶກຄິດ) ໃນທາງລົບຂອງພໍ່ແມ່, ຄອບຄົວ ຫຼື ຊຸມຊົນຕໍ່ກັບການເຂົ້າຮຽນຂອງເດັກຍິງບວກກັບຄວາມທຸກຍາກ (ຢູ່ເຂດທີ່ເດັກທີ່ມີອາຍຸໃນເກນເຂົ້າຮຽນຕ້ອງໄດ້ເຮັດວຽກ ເພື່ອຊ່ວຍຄອບຄົວໃນການຊອກຫາອາຫານ ແລະ ເງິນ ເພື່ອຄວາມຢູ່ລອດຂອງຄອບຄົວ)ອາດສົມທົບເຮັດໃຫ້ເດັກຍິງທີ່ມາຈາກຄອບຄົວທີ່ທຸກຍາກ, ຈາກເຂດຊົນນະບົດບໍ່ໄດ້ເຂົ້າໂຮງຮຽນ. ທັດສະນະຄະຕິ (ຄວາມນຶກຄິດ) ມີຜົນກະທົບຕໍ່ການປະຕິບັດຕົວຈິງຢ່າງຫຼີກລ່ຽງບໍ່ໄດ້ ຕົວຢ່າງ: ຖ້າຄູຜູ້ໜຶ່ງຫາກມີທັດສະນະຄະຕິໃນທາງລົບ ກ່ຽວກັບຄວາມສາມາດຂອງເດັກພິການ/ຄວາມຫຍຸ້ງຍາກໃນການຮຽນ ເຊັ່ນ: ຄົນພິການ ແລະ ອື່ນໆ ໃນການຮຽນ ແລະ ການມີສ່ວນຮ່ວມໃນໂຮງຮຽນ, ຄູຜູ້ນັ້ນອາດຈະບໍ່ມີຄວາມອົດທົນພະຍາຍາມສົ່ງເສີມການຮຽນຮ່ວມຂອງເດັກພິການ/ທີ່ມີຄວາມຫຍຸ້ງຍາກ ໃນການເຂົ້າຮ່ວມເຮັດກິດຈະກຳໃນຫ້ອງຮຽນ ຫຼື ອາດບໍ່ໃຫ້ເດັກເຫຼົ່ານັ້ນເຂົ້າຮຽນໃນບົດຮຽນໃດໜຶ່ງ. ຍິ່ງໄປກວ່ານັ້ນ, ອຸປະສັກດັ່ງກ່າວນັ້ນ ພັດຍັງພົວພັນເຖິງຄວາມບໍ່ເທົ່າທຽມກັນທາງດ້ານໂຄງສ້າງໃນສັງຄົມຢ່າງກວ້າງຂວາງ ຕົວຢ່າງ: ຄອບຄົວທີ່ທຸກຍາກຄອບຄົວໜຶ່ງທີ່ບໍ່ມີໂອກາດເຂົ້າເຖິງການສຶກສາທີ່ມີຄຸນນະພາບອາດເປັນ

ການຫຼຸດຜ່ອນໂອກາດຂອງລູກໃນຄອບຄົວໃນການມີອິດທິພົນ ແລະ ມີຖານະໃນສັງຄົມ[3],ຫຼຸດຜ່ອນໂອກາດຂອງຄອບຄົວດັ່ງກ່າວ ໃນດ້ານການເຄື່ອນໄຫວທາງສັງຄົມ ແລະ ເຮັດໃຫ້ວົງຈອນຄວາມທຸກຍາກໝູນວຽນໄປຕະຫຼອດ (ບໍ່ຮັ່ງມີຈັກເທື່ອ) ເຊິ່ງເສີມຂະຫຍາຍຄວາມບໍ່ເທົ່າທຽມກັນທາງດ້ານສັງຄົມ, ເສດຖະກິດລະຫວ່າງຄອບຄົວທີ່ທຸກຍາກ, ຄອບຄົວທີ່ຮັ່ງມີ ແລະ ຄອບຄົວທີ່ມີອິດທິພົນເໜືອກວ່າ.

ຄຳຖາມທີ່ທ່ານສາມາດຖາມ ເພື່ອຊ່ວຍເຫຼືອທ່ານໃນການວິເຄາະສະຖານະການໃນສະພາບຄວາມເປັນຈິງຂອງທ່ານກ່ອນຈະເລີ່ມປະຕິບັດການສົ່ງເສີມ

- ທ່າແຮງຂອງນະໂຍບາຍການສຶກສາແຫ່ງຊາດ ທາງດ້ານການສົ່ງເສີມການສຶກສາຮຽນຮ່ວມແມ່ນຫຍັງ? ນະໂຍບາຍການສຶກສາໄດ້ສົ່ງເສີມການສຶກສາຮຽນຮ່ວມບໍ?
- ສະຖາບັນສ້າງຄູໄດ້ສົ່ງເສີມໃຫ້ນັກຮຽນຄູ ກຳນົດອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມໃນລະບົບ, ໃນໂຮງຮຽນ ແລະ ໃນຫ້ອງຮຽນກ່ອນໄປເປັນຄູ ເຊິ່ງກົງກັນຂ້າມກັບການເລັ່ງໃສ່ອຸປະສັກທີ່ມີໃນຕົວຂອງນັກຮຽນເອງບໍ? (ຖິ້ມໂທດໃສ່ນັກຮຽນ)
- ໄດ້ຊຸກຍູ້ໃຫ້ນັກຮຽນຄູເອົາໃຈໃສ່ເຖິງທ່າແຮງ, ທັດສະນະຄະຕິໃນທາງບວກ ແລະ ການປະຕິບັດຂອງນັກຮຽນ/ໂຮງຮຽນ/ຊຸມຊົນທີ່ມີຢູ່ໃນປັດຈຸບັນ ແລະ ໄດ້ວາງຍຸດທະສາດໃນການແກ້ໄຂໂດຍອີງໃສ່ທັກສະ ແລະຊັບພະຍາກອນຂອງທ້ອງຖິ່ນບໍ?

# ເປົ້າໝາຍຂອງການສົ່ງເສີມ

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 1

*"ອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມແມ່ນລະບົບ ແລະ ໂຮງຮຽນ ບໍ່ແມ່ນນັກຮຽນແຕ່ຢ່າງໃດ"*

ຂໍ້ຄວາມຂອງການໂຄສະນາສົ່ງເສີມວິທີສິດສອນ 1 ຂ້າງເທິງນີ້ພົວພັນກັນຢ່າງໃກ້ຊິດກັບຂໍ້ຄວາມທີ 2 ແລະ ທີ 3 ຂ້າງລຸ່ມນີ້. ຖ້າທ່ານຫາກເຂົ້າຫາການສຶກສາເລີ່ມແຕ່ຈຸດຢືນທີ່ວ່າ ອຸປະສັກທັງໝົດທີ່ມີຕໍ່ການສຶກສາຮຽນຮ່ວມແມ່ນເກີດມາຈາກບັນຫາຕ່າງໆທີ່ມີຢູ່ໃນລະບົບໃນການຕອບສະໜອງທ່າແຮງ ແລະ ຄວາມຕ້ອງການຕ່າງໆຂອງນັກຮຽນ ເຊິ່ງອຸປະສັກດັ່ງກ່າວນັ້ນບໍ່ແມ່ນເກີດມາຈາກນັກຮຽນ. ສະນັ້ນ, ທ່ານຢືນຢູ່ໃນຕຳແໜ່ງທີ່ດີແລ້ວ ໃນການວິເຄາະອຸປະສັກຕ່າງໆ, ຮຽນຮູ້ທ່າແຮງ (ໃນລະບົບ ແລະ ໃນແຕ່ລະຄົນ) ແລະ ຍອມຮັບຄວາມຫຼາກຫຼາຍໃນລັກສະນະທີ່ເປັນລະບົບດັ່ງທີ່ຈະໄດ້ຄົ້ນຄວ້າຢູ່ຂ້າງລຸ່ມນີ້:

[3] ທ່ານ Ridge ໃຫ້ຂໍ້ສັງເກດວ່າ: 'ຜົນກະທົບທີ່ກ່ຽວຂ້ອງກັບຄວາມທຸກຍາກທີ່ທ່ານ Room (1995) ໄດ້ກຳນົດເປັນການເຂົ້າຮ່ວມທາງດ້ານສັງຄົມທີ່ບໍ່ພຽງພໍ, ຂາດການປະກອບສ່ວນ ແລະ ຂາດອິດທິພົນທີ່ມີ ຜົນສະທ້ອນສະເພາະຕໍ່ຊີວິດຂອງເດັກ' (ibid: ໜ້າ. 435). ທ່ານ Ridge, T. 2006. ເຂົ້າຮ່ວມ ແລະ ຮ່ວມໃນ': ການພົວພັນທາງສັງຄົມ ແລະ ປະກອບສ່ວນທາງດ້ານສັງຄົມ. ຢູ່ໃນປຶ້ Lauder, H., Brown, P., Dillabough, J. ແລະ Halsey, A. H. (eds). ການປ່ຽນແປງທາງດ້ານການສຶກສາ, ຂອງໂລກ ແລະ ທາງດ້ານສັງຄົມ. ອອກຟອດ, ສື່ຂາວຂອງມະຫາວິທະຍາໄລອອກຟອດ.

ຕົວຢ່າງ ຈາກ ສ.ປ.ປ ລາວ

*ຫົວຂໍ້: ອຸປະສັກຂອງການສຶກສາຮຽນຮ່ວມ*



## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 2

*ການແກ້ໄຂອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມຕ້ອງມີວິທີການທີ່ເປັນລະບົບ ເຊິ່ງລວມມີດັ່ງນີ້:*

*1) ກຳນົດອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມ;*
*2) ວາງຍຸດທະສາດໃນການແກ້ໄຂອຸປະສັກເຫຼົ່ານັ້ນ;*
*3) ເຮັດວຽກເພື່ອປ່ຽນແປງລະບົບຕາມລຳດັບ".*

ການນຳເອົາວິທີການທີ່ເປັນລະບົບ ເພື່ອຄົ້ນຄວ້າພິຈາລະນາອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມ ເປັນການຮັບປະກັນວ່າອຸປະສັກສະເພາະກໍຄືບັນຫາທີ່ຊ້ຳຊ້ອນກັນ ແລະ ວິທີການຕ່າງໆທີ່ນຳໄປສູ່ການກີດຂວາງການຮຽນຮ່ວມ ແມ່ນສາມາດກຳນົດໄດ້, ວາງແຜນໄດ້ ແລະ ແກ້ໄຂໄດ້ ເພື່ອຮັບປະກັນວ່ານັກຮຽນທຸກຄົນໄດ້ເຂົ້າຮຽນຮ່ວມ. ການເຂົ້າຮ່ວມໃນຂະບວນການນີ້ ແມ່ນເປັນພາກສ່ວນທີ່ສຳຄັນອັນໜຶ່ງຂອງວິທີສິດສອນການສຶກສາຮຽນຮ່ວມ ເຊິ່ງເສີມຂະຫຍາຍຄວາມຕ້ອງການ ເພື່ອປັບປຸງລະບົບຕ່າງໆໃຫ້ສອດຄ່ອງກັບຜູ້ຮຽນ ເຊິ່ງກົງກັນຂ້າມກັບວິທີການອື່ນໆ. ການເຫັນໄດ້ອຸປະສັກຕ່າງໆແມ່ນບາດກ້າວທຳອິດ, ແມ່ນສິ່ງຈຳເປັນໃນການເຮັດວຽກ ເພື່ອປ່ຽນແປງລະບົບ ແລະ ການສິດສອນຕົວຈິງຢູ່ໃນໂຮງຮຽນ ແລະ ໃນສະຖາບັນສ້າງຄູຕ່າງໆ.

ຕາຕະລາງຕໍ່ໄປນີ້ແມ່ນປະເພດຂອງລະບົບອຸປະສັກຕົ້ນຕໍພ້ອມດ້ວຍຕົວຢ່າງຂອງອຸປະສັກສະເພາະ ແລະ ວິທີແກ້ໄຂຈຳນວນໜຶ່ງ. ອຸປະສັກໃດ/ວິທີການແກ້ໄຂໃດທີ່ມີຢູ່ໃນສະພາວະຄວາມເປັນຈິງຂອງທ່ານ?

## ກໍລະນີສຶກສາຈາກ ສ.ປ.ປ ລາວ

*ຫົວຂໍ້: ໂຄງການສິດທິໃນການຮຽນຮູ້ ໂດຍນຳໃຊ້ການສຶກສາຮຽນຮ່ວມ ເມືອງ ໄຊບົວທອງ ແຂວງຄຳມ່ວນ*

ເພື່ອໃຫ້ບັນລຸເປົ້າໝາຍສະຫັດສະຫວັດ ເພື່ອການພັດທະນາ ແລະ ການສຶກສາເພື່ອໝົດທຸກຄົນ ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ ແລະ ອົງການ CRS ໄດ້ຮ່ວມມືກັນຈັດຕັ້ງປະຕິບັດໂຄງການ ການຮຽນຮ່ວມ ເຊິ່ງມີຈຸດປະສົງ ເພື່ອເພີ່ມຄວາມເຂົ້າໃຈ ແລະ ປູກຈິດສຳນຶກໃຫ້ແກ່ຜູ້ບໍລິຫານການສຶກສາ, ຄູ-ອາຈານ ແລະ ພໍ່-ແມ່ຜູ້ປົກຄອງໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມຈຳເປັນຕ້ອງໃຫ້ເດັກທຸກຄົນໄດ້ເຂົ້າຮຽນພ້ອມທັງສ້າງໂອກາດ ແລະ ເງື່ອນໄຂຕ່າງໆແກ່ກຸ່ມທີ່ດ້ອຍໂອກາດໄດ້ເຂົ້າຮຽນ, ໂດຍສະເພາະຜູ້ຮຽນທີ່ເປັນຄົນພິການ, ແນໃສ່ການຫຼຸດຜ່ອນສິ່ງກີດຂວາງເຊັ່ນ: ທັດສະນະຄະຕິໃນແງ່ລົບຕໍ່ຄົນພິການ, ເດັກຊົນເຜົ່າ, ເດັກຍິງ, ສະພາບແວດລ້ອມພາຍໃນໂຮງຮຽນເປັນຕົ້ນອາຄານສະຖານທີ່, ຫ້ອງນ້ຳ, ນ້ຳໃຊ້, ວິທີການສິດສອນ ແລະ ອື່ນໆ ທີ່ເຫັນວ່າເປັນອຸປະສັກຕໍ່ການເຂົ້າເຖິງການສຶກສາຮຽນຮ່ວມ. ສະນັ້ນ, ໂຄງການດັ່ງກ່າວຈຶ່ງໄດ້ ລິເລີ່ມຈັດຕັ້ງປະຕິບັດກິດຈະກຳໂຄງການໃນສົກປີ 2012-2013 ໂດຍເລີ່ມຈາກການເກັບກຳຂໍ້ມູນໃນ 40 ບ້ານ ແລະ ກວດຄວາມເປັນພິການ ພ້ອມທັງສະໜອງເຄື່ອງຄ້ຳຊູເຊັ່ນ: ຜູ້ທີ່ມີຄວາມບົກຜ່ອງທາງດ້ານການໄດ້ຍິນ ພວກເຮົາກໍຈັດຫາເຄື່ອງຊ່ວຍຟັງໃຫ້, ຜູ້ທີ່ມີຄວາມບົກຜ່ອງທາງດ້ານການເບິ່ງເຫັນ ກໍມີແວ່ນຕາໃຫ້ ແລະ ສຸດທ້າຍຜູ້ທີ່ມີຄວາມບົກຜ່ອງທາງດ້ານຮ່າງກາຍກໍມີລໍ້ເລື່ອນ, ມຸມນັ່ງ, ເຄື່ອງແອບຍ່າງ, ແອບຢືນພ້ອມກັບການເຝິກອົບຮົມ ກ່ຽວກັບການນຳໃຊ້ ແລະ ບຳລຸງຮັກສາ ເພື່ອການເຂົ້າຮ່ວມຢ່າງມີປະສິດທິພາບໃນການດຳລົງຊີວິດປະຈຳວັນໃນຕໍ່ສັງຄົມ ແລະ ການສຶກສາ.



© DTE, MOES, Lao PDR

ເພື່ອແນໃສ່ການປັບປຸງຄຸນນະພາບຂອງການສຶກສາທີ່ມີຄຸນນະພາບຈຶ່ງໄດ້ຈັດກອງປະຊຸມຝຶກອົບຮົມກ່ຽວກັບບວງການສຶກສາຮຽນຮ່ວມ ໂດຍເນັ້ນການສ້າງທັດສະນະຄະຕິທີ່ດີ, ການສ້າງສະພາບແວດລ້ອມທີ່ເປັນເພື່ອມິດ, ປອດໄພ, ວິທີສິດສອນ ແລະ ການຜະລິດອຸປະກອນການສອນໂດຍນຳໃຊ້ຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນເປັນຫຼັກ ໃຫ້ແກ່ຜູ້ອຳນວຍການ, ຄູສອນ, ຄະນະພັດທະນາການສຶກສາຂັ້ນບ້ານ ໃນ 40 ບ້ານ, 51 ໂຮງຮຽນ ແລະ ພໍ່ແມ່ເດັກພິການ ແລະ ມີການແບ່ງງານ ແລະ ໜ້າທີ່ຮັບຜິດຊອບຢ່າງຊັດເຈນຂອງແຕ່ລະພາກສ່ວນເພື່ອຄວາມຍືນຍົງ.

| ປະເພດຂອງ ອຸປະສັກ | ຕົວຢ່າງ | ວິທີການແກ້ໄຂ |
|---|---|---|
| *ທັດສະນະຄະຕິ* | • ມີອະຄະຕິຕໍ່ຄົນພິການ, ຊົນເຜົ່າທີ່ມາຈາກກຸ່ມທີ່ມີຊົນຊັ້ນວັນນະຕ່ຳໃນສັງຄົມ ( ໃນສະພາບຄວາມເປັນຈິງບາງບ່ອນ) ຢູ່ໃນໂຮງຮຽນ ແລະ ສະຖາບັນສ້າງຄູຕ່າງໆ<br>• ມີຄວາມເຊື່ອທີ່ວ່ານັກຮຽນຜູ້ທີ່ຮຽນຊ້າ (ຮັບຮູ້ຊ້າ) ແມ່ນບໍ່ຄຸ້ມຄ່າໃນການເສຍເວລາ.<br>• ມີທັດສະນະຄະຕິທາງລົບຕໍ່ກັບການສຶກສາຂອງເດັກຍິງ ແລະ ຜູ້ຍິງຢູ່ໃນໂຮງຮຽນ ແລະ ສະຖາບັນສ້າງຄູ<br>• ມີຄວາມເຊື່ອທີ່ວ່າເດັກຕ້ອງໄດ້ເຮັດວຽກຊ່ວຍຄອບຄົວຢູ່ເຮືອນ ຫຼື ຢູ່ໃນຊຸມຊົນ (ຫຼື ຫຼາຍກວ່ານັ້ນ)<br>• ມີຄວາມເຊື່ອທີ່ຜິດພາດວ່າບໍ່ແມ່ນເດັກທຸກຄົນຈະສາມາດຮຽນຮູ້ໄດ້ | • ຕ້ອງຍອມຮັບທັດສະນະຄະຕິຕໍ່ເດັກ ແລະ ຜູ້ໃຫຍ່ທຸກຄົນທີ່ວ່າຄວາມຫຼາກຫຼາຍເປັນໂອກາດທີ່ສຳລັບການສຶກສາ, ແຕ່ບໍ່ແມ່ນເປັນບັນຫາແຕ່ຢ່າງໃດ<br>• ຕ້ອງເຊື່ອວ່າການຊ່ວຍເຫຼືອນັກຮຽນຜູ້ທີ່ຮຽນຊ້າ (ຮັບຮູ້ຊ້າ) ແມ່ນມີຄຸນຄ່າ ແລະ ກຸ້ມຄ່າເທົ່າກັນກັບການຊ່ວຍເຫຼືອນັກຮຽນຜູ້ທີ່ຮຽນໄວ (ຮຽນເກັ່ງ)<br>• ຕ້ອງຊອກຫາວິທີຊຸກຍູ້ສົ່ງເສີມໃຫ້ເດັກຍິງໄດ້ເຂົ້າຮຽນ ແລະ ຈະເລີນຮຸ່ງເຮືອງຢູ່ໃນໂຮງຮຽນ ແລະ ສະໜັບສະໜູນໃຫ້ຜູ້ຍິງໄດ້ເຂົ້າຮຽນ ແລະ ຈະເລີນຮຸ່ງເຮືອງຢູ່ໃນສະຖາບັນສ້າງຄູ.<br>• ສົ່ງເສີມໃຫ້ພໍ່ແມ່/ຄອບຄົວເຂົ້າໃຈເຖິງຄຸນຄ່າຂອງການສຶກສາຂອງລູກພວກເຂົາ. |
| *ການປະຕິບັດການສອນຕົວຈິງ* | • ການຮຽນ ແລະ ການສອນແບບທ່ອງຈຳ<br>• ວັດທະນະທຳ ທາງດ້ານການສຶກສາແບບເອົາການສອບເສັງເປັນໃຈກາງ<br>• ມີຄວາມເຂົ້າໃຈວ່າຄູເປັນຜູ້ຖ່າຍທອດຄວາມຮູ້<br>• ການຈັດບ່ອນນັ່ງນັກຮຽນແບບຄົງທີ່ ແລະ ຕາຍຕົວ, ບໍ່ສົ່ງເສີມໃຫ້ນັກຮຽນທຸກຄົນມີສ່ວນຮ່ວມນຳ ແລະຮຽນຮູ້ແບບຕັ້ງໜ້າ<br>• ຂາດວິທີການສິດສອນ ແລະ ເຮັດກິດຈະກຳ ໂດຍໃຫ້ນັກຮຽນມີສ່ວນຮ່ວມນຳ<br>• ລົງໂທດນັກຮຽນດ້ວຍການຕີ, ການຂູ່ຂູ່ນ<br>• ການໃຊ້ພາສາທີ່ນັກຮຽນ ສ່ວນຫຼາຍບໍ່ສາມາດເຂົ້າໃຈໄດ້ | • ຈັດການຮຽນເປັນກຸ່ມ ແລະ ເປັນລາຍບຸກຄົນແລະເຮັດໃຫ້ການຮຽນມີຄວາມມ່ວນຊື່ນ,ມີລັກສະນະປະຕິສຳພັນເຊິ່ງກັນແລະກັນ, ມີສ່ວນຮ່ວມແລະນັກຮຽນໄດ້ເຮັດກິດຈະກຳເຊັ່ນ: ແຕ້ມຮູບ,ຮ້ອງເພງ, ສະແດງບົດບາດສົມມຸດແລະອື່ນໆ<br>• ລົງໂທດແບບສ້າງສັນ (ທາງບວກ)<br>• ສອນແບບນຳໃຊ້ຫຼາຍພາສາ |

| ປະເພດຂອງອຸປະສັກ | ຕົວຢ່າງ | ວິທີການແກ້ໄຂ |
|---|---|---|
| *ການປະຕິບັດການສອນຕົວຈິງ* | • ມີສະຕິ ຫຼື ບໍ່ມີສະຕິຕໍ່ບົດບາດຍິງ-ຊາຍໃນເວທີການຮຽນ-ການສອນ<br>• ບໍ່ມີຄວາມເຕັມໃຈ/ບໍ່ມີຄວາມສາມາດສອນເດັກພິການໃນໂຮງຮຽນ ແລະ ໃນສະຖາບັນສ້າງຄູ | • ການປະຕິບັດຕໍ່ເດັກຍິງ ແລະ ເດັກຊາຍຢູ່ໃນໂຮງຮຽນຢ່າງຍຸດຕິທຳ ແລະ ເທົ່າທຽມກັນ(ຜູ້ຍິງ ແລະ ຜູ້ຊາຍຢູ່ໃນສະຖາບັນສ້າງຄູກໍເຊັ່ນດຽວກັນ)<br>• ຕັ້ງໃຈສອນເດັກພິການ ແລະ ຜູ້ໃຫຍ່ພິການ (ສ້າງທັກສະທີ່ເໝາະສົມ) ເພື່ອໃຫ້ເດັກພິການໄດ້ຮຽນຢ່າງເຕັມສ່ວນ |
| *ຊັບພະຍາກອນ (ອຸປະກອນ)* | • ຂາດເຂີນໂຕະ, ຕັ່ງ, ປື້ມແບບຮຽນ<br>• ຂາດການໃຫ້ຄຳແນະນຳເດັກ ແລະ ຜູ້ໃຫຍ່ຜູ້ທີ່ມີຄວາມຕ້ອງ ການຄຳແນະນຳ.<br>• ຂາດວັດຖຸອຸປະກອນທີ່ມີຄວາມລະອຽດອ່ອນຕໍ່ບົດບາດຍິງ-ຊາຍ; ການເຂົ້າຮຽນຂອງເດັກ/ຜູ້ໃຫຍ່ ແລະ ເດັກພິການ, ການເຂົ້າຮຽນຂອງເດັກ,ຜູ້ໃຫຍ່ທີ່ມາຈາກເຂດ ແລະ ພາສາຊົນເຜົ່າທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ອື່ນໆ. | • ຕ້ອງມີງົບປະມານ ແລະ ການສະໜັບສະໜູນໃນການຊື້ຕັ່ງ, ໂຕະຄູ ແລະ ອຸປະກອນການຮຽນ-ການສອນ.<br>• ສ້າງອຸປະກອນການຮຽນ-ການສອນທີ່ກ່ຽວຂ້ອງກັບທ້ອງຖິ່ນນັ້ນ ແລະ ສາມາດເອົາມານຳໃຊ້ໄດ້ |
| *ນະໂຍບາຍ* | • ນະໂຍບາຍທີ່ບໍ່ສົ່ງເສີມຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ<br>• ນະໂຍບາຍທີ່ອະນຸຍາດສອນພຽງແຕ່ພາສາແຫ່ງຊາດພາສາດຽວເທົ່ານັ້ນ (ເຊິ່ງກົງກັນຂ້າມກັບພາສາແມ່ຂອງຜູ້ຮຽນ)<br>• ນະໂຍບາຍທີ່ບໍ່ສົ່ງເສີມເດັກພິການແລະຜູ້ໃຫຍ່ພິການ (ຄົນພິການ)<br>• ນະໂຍບາຍທີ່ບໍ່ສົ່ງເສີມການພັດທະນາບົດບາດຍິງ-ຊາຍທີ່ມີຄວາມລະອຽດອ່ອນ, ການມີຫຼັກສູດທີ່ນຳໃຊ້ພາສາທີ່ແທດເໝາະ ແລະ ພົວພັນກັບທ້ອງຖິ່ນ ແລະ ຫ້ອງຮຽນ | • ຕ້ອງມີນະໂຍບາຍທີ່ສົ່ງເສີມຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ<br>• ຕ້ອງມີນະໂຍບາຍທີ່ສົ່ງເສີມການສ້າງຄູໃນການສອນຫຼາຍພາສາ ແລະ ການສອນພາສາແມ່<br>• ຕ້ອງມີນະໂຍບາຍທີ່ສົ່ງເສີມການເຂົ້າຮຽນໃນໂຮງຮຽນ ແລະໃນສະຖາບັນສ້າງຄູສຳລັບຜູ້ຮຽນທີ່ມີຄວາມເປັນພິການ<br>• ຕ້ອງມີນະໂຍບາຍທີ່ສົ່ງເສີມໃຫ້ຄູດັດປັບຫຼັກສູດ ແລະ ອຸປະກອນໃຫ້ສອດຄ່ອງກັບຄວາມຕ້ອງການຂອງທ້ອງຖິ່ນ ແລະ ສະພາວະຄວາມເປັນຈິງທີ່ພົວພັນເຖິງຊຸມຊົນ ແລະ ຫ້ອງຮຽນ |

| ປະເພດຂອງອຸປະສັກ | ຕົວຢ່າງ | ວິທີການແກ້ໄຂ |
|---|---|---|
| *ສິ່ງແວດລ້ອມ* | • ບໍ່ສາມາດເຂົ້າເຖິງຫ້ອງຮຽນໄດ້ ເຊັ່ນ: ອາຄານຮຽນມີຫຼາຍຊັ້ນໂດຍບໍ່ມີທາງຂຶ້ນໃຫ້ແກ່ເດັກທີ່ມີສິ່ງທ້າທາຍໃນການເຄື່ອນໄຫວ, ຂາດທາງເນີນ (ຂັ້ນໃດ) ແລະ ຂາດເຂີນຫ້ອງນ້ຳສຳລັບຄົນພິການ<br><br>• ຂາດນ້ຳສະອາດ ແລະ ຫ້ອງນ້ຳ (ບໍ່ມີການແຍກຫ້ອງນ້ຳຍິງ, ຫ້ອງນ້ຳຊາຍ) | • ເອົາໃຈໃສ່ການສ້າງໂຮງຮຽນ ແລະ ສະຖາບັນສ້າງຄູ ແລະ ຫ້ອງຮຽນໃຫ້ຄົນພິການສາມາດນຳໃຊ້ໄດ້ຢ່າງເຕັມສ່ວນ (ເຊິ່ງບໍ່ຂຶ້ນກັບ ແຫຼ່ງທຶນເຊັ່ນ: ການສ້າງທາງເນີນສາມາດສ້າງ ໃນລາຄາຖືກໆໂດຍນຳໃຊ້ອຸປະກອນທີ່ມີຢູ່ໃນທ້ອງຖິ່ນ, ບໍ່ຈຳເປັນໃຊ້ອຸປະກອນທີ່ມີລາຄາສູງທີ່ນຳເຂົ້າຈາກປະເທດອື່ນ)<br><br>• ແຫຼ່ງທຶນ (ເຊັ່ນ: ເງິນ, ເວລາ ແລະ ຄວາມພະຍາຍາມ) ທີ່ໃຊ້ເພື່ອຮັບປະກັນໂຮງຮຽນທຸກແຫ່ງສາມາດເຂົ້າເຖິງນ້ຳ ແລະ ຫ້ອງນ້ຳທີ່ສະອາດ |

**ກໍລະນີສຶກສາຈາກ ສ.ປ.ປ ລາວ**

*ຫົວຂໍ້: ນ. ວະລິດາ ຄຳດາລານິກອນ*

ຂ້ອຍ ຊື່ ນາງ ວະລິດາ, ອາຍຸ 18 ປີ. ເປັນນັກຮຽນຢູ່ໂຮງຮຽນມັດທະຍົມເພຍວັດ, ນະຄອນຫຼວງວຽງຈັນ. ຂ້ອຍອາໃສຢູ່ນະຄອນຫຼວງວຽງຈັນ ກັບແມ່ເຖົ້າ, ປ້າ ແລະ ລຸງຂອງຂ້ອຍ. ຂ້ອຍແມ່ນຫຼານສາວຫຼ້າໃນຈຳນວນເອື້ອຍນ້ອງ 3 ຄົນ; ຂ້ອຍເກີດມາພ້ອມກັບພະຍາດກະດູກຜ່ອຍ ເຊິ່ງໝາຍເຖິງໂປຼຕີນທີ່ເຂົ້າມາຊ່ວຍໃນລະບົບກະດູກຂອງຂ້ອຍມີບັນຫາ ຈຶ່ງເຮັດໃຫ້ກະດູກຂອງຂ້ອຍບໍ່ແຂງແຮງ ແລະ ຜ່ອຍກວ່າປົກກະຕິ. ຂ້ອຍສາມາດເຮັດທຸກສິ່ງທຸກຢ່າງໄດ້ຄືກັນກັບເດັກນ້ອຍ ແລະ ໄວລຸ້ນອື່ນໆ, ແຕ່ວ່າບາງຄັ້ງຂ້ອຍຕ້ອງຊອກຫາທາງອື່ນທີ່ແຕກຕ່າງຈາກຜູ້ອື່ນ ເພື່ອເຮັດສິ່ງນັ້ນ. ຄອບຄົວຂອງຂ້ອຍພະຍາຍາມຊ່ວຍຂ້ອຍຫຼາຍຢ່າງ ເພື່ອໃຫ້ຂ້ອຍມີຄວາມຫວັງວ່າຈັກມື້ໜຶ່ງຂ້ອຍອາດຈະກາຍເປັນຄົນປົກກະຕິຄືຜູ້ອື່ນ ເຊັ່ນ: ເຂົາເຈົ້າ ຕ້ອງການໃຫ້ຂ້ອຍເຂົ້າຮັບການຜ່າຕັດ ແຕ່ວ່າເລືອດຂອງຂ້ອຍແມ່ນໝວດເລືອດພິເສດຄື ໂອ ລົບ ເຊິ່ງເປັນເລືອດທີ່ຊອກຍາກຫຼາຍຢູ່ປະເທດລາວ. ໃນທີ່ສຸດເຂົາເຈົ້າກໍ່ຕັດສິນໃຈບໍ່ໃຫ້ຂ້ອຍເຂົ້າຜ່າຕັດ.



© DTE, MOES, Lao PDR

ນີ້ແມ່ນຮູບຂອງຂ້ອຍ ຕອນທີ່ຂ້ອຍຮຽນຢູ່ໂຮງຮຽນປະຖົມ ໃນເດືອນມີນາ 2001. ທ່ານສາມາດເຫັນໄດ້ເລີຍວ່າຂ້ອຍຈະມີຕັ່ງເສີມພິເສດ ເພື່ອທີ່ຂ້ອຍຈະໄດ້ນັ່ງໃນທ່າທີ່ເໝາະສົມກັບຄວາມສູງຂອງໂຕະ. ຂ້ອຍຮັກການຮຽນ, ທີ່ໂຮງຮຽນປະຖົມ ຄູຂອງຂ້ອຍສອນໃຫ້ຂ້ອຍຮຽນຮູ້ຫຼາຍຢ່າງ. ຂ້ອຍມີໝູ່ຫຼາຍຄົນ ແລະ ມີການຮຽນທີ່ກ້າວໜ້າຢູ່ໂຮງຮຽນນັ້ນ.

ແມ່ເຖົ້າຂອງ ວະລິດາ ເວົ້າກ່ຽວກັບການເລີ່ມຕົ້ນຮຽນໜັງສືຂອງ ວະລິດາ: ໃນປີ 1996 ຕອນທີ່ວະລິດາ ອາຍຸ 6 ປີ, ຂ້ອຍໄດ້ຍິນຂ່າວວ່າມີໂຮງຮຽນປະຖົມທີ່ລິເລີ່ມຮັບເອົາເດັກນ້ອຍພິການ ເຂົ້າໂຮງຮຽນ ຕັ້ງຢູ່ໃກ້ກັບບ້ານທີ່ພວກເຮົາອາໃສຢູ່.

ຂ້ອຍພາ ວະລິຕາ ໄປຫາຜູ້ອຳນວຍການໂຮງຮຽນ ແລະ ຖາມເພິ່ນວ່າ ວະລິຕາ ສາມາດເຂົ້າຮຽນໄດ້ຄືກັບເດັກຄົນອື່ນໆ ຫຼື ບໍ່? ເພິ່ນຕອບວ່າ "ໄດ້" ແລະ ພວກເພິ່ນຈະພະຍາຍາມສຸດຂີດ ເພື່ອຊ່ວຍເຫຼືອ ວະລິຕາ. ຂ້ອຍດີໃຈຫຼາຍທີ່ໄດ້ຕັດສິນໃຈແນວນັ້ນ ເພາະວ່າຫຼາຍໆຄົນແນະນຳຂ້ອຍບໍ່ໃຫ້ສົ່ງວະລິຕາເຂົ້າໂຮງຮຽນ. ແຕ່ເບິ່ງວະລິຕາດຽວນີ້ລາວໃກ້ຊິຈົບມັດທະຍົມຕົ້ນແລ້ວ. ຂ້ອຍຈະສະໜັບສະໜູນຊ່ວຍເຫຼືອ ວະລິຕາ ທຸກຢ່າງເພື່ອໃຫ້ລາວໄດ້ໃນສິ່ງທີ່ຕ້ອງການໃນຊີວິດ. ຂ້ອຍເຊື່ອວ່າ ຄົນພິການ ກໍມີສິດທີ່ຈະມີຊີວິດການເປັນຢູ່ທີ່ດີເທົ່າທຽມກັນກັບຄົນອື່ນໆ ເຊິ່ງໃນນັ້ນກໍແມ່ນໜ້າທີ່ຂອງພໍ່-ແມ່, ຄູ-ອາຈານ ແລະ ລັດຖະບານ ທີ່ສາມາດເຮັດໃຫ້ເກີດຄວາມສະເໝີພາບ ແລະ ບໍ່ສ້າງສິ່ງກີດຂວາງສຳລັບຄົນພິການທຸກຄົນໄດ້.




© DTE, MOES, Lao PDR

(ນີ້ແມ່ນຮູບຂອງຂ້ອຍກັບໝູ່ຂອງຂ້ອຍ ຊື່ ນາງ ເພັດມະນີ ເຊິ່ງລາວແມ່ນໜຶ່ງໃນໝູ່ສະໜິດ ຜູ້ທີ່ຂ້ອຍໃຊ້ເວລາຢູ່ນຳຫຼາຍຕອນຢູ່ໂຮງຮຽນ).

ເຖິງແມ່ນວ່າຂ້ອຍສາມາດຢືນ ແລະ ເຄື່ອນເໜັງໄດ້ຢ່າງເສລີ, ແຕ່ຂ້ອຍກໍໃຊ້ລໍ້ນັ່ງເຊັ່ນກັນ. ໝູ່ຂອງຂ້ອຍເປັນຄົນດີຫຼາຍ. ເຂົາເຈົ້າໄດ້ຊ່ວຍເຫຼືອຂ້ອຍຫຼາຍຢ່າງເຊັ່ນ ພາຂ້ອຍຂຶ້ນ ຫຼື ລົງຂັ້ນໄດເພື່ອເຂົ້າຮຽນ ເຊິ່ງຫ້ອງຮຽນນັ້ນແມ່ນຢູ່ຊັ້ນ ທີສອງ. ຄວາມຈິງແລ້ວຂ້ອຍຄິດວ່າ ໂຮງຮຽນຄວນຈະຈັດຫ້ອງຮຽນໃຫ້ສະເພາະຄົນພິການ ເພາະບາງເທື່ອເຂົາເຈົ້າຖືກຊັບຊ້ອນໃຫ້ນັກຮຽນຊັ້ນຮຽນດຽວກັນຮຽນຄົນລະຊັ້ນຂອງອາຄານຮຽນ. ແຕ່ຂ້ອຍກໍຄິດວ່າການທີ່ຈະຈັດຫ້ອງຄືນໃໝ່ເພື່ອອຳນວຍຄວາມສະດວກໃຫ້ແຕ່ກັບຂ້ອຍນັ້ນ ແມ່ນໝາຍເຖິງການປ່ຽນລະບົບທັງໝົດ. ສະນັ້ນ, ຂ້ອຍຄິດວ່າ ບໍ່ປ່ຽນກໍໄດ້. ແນວໃດກໍຕາມຂ້ອຍກໍຮູ້ສຶກອີ່ຕົນໝູ່ ເພາະເຂົາເຈົ້າຊ່ວຍອຸ້ມຂ້ອຍຕະຫຼອດ ເຊິ່ງມັນຍິ່ງເຮັດໃຫ້ຫຍຸ້ງຍາກກວ່າເກົ່າເມື່ອຂ້ອຍມີອາຍຸຫຼາຍຂຶ້ນ. ສຳລັບຂ້ອຍ ນອກຈາກທີ່ກ່າວມາຂ້າງເທິງແລ້ວ ບັນຫາອື່ນກໍມີເຊັ່ນກັນເຊັ່ນ ຂ້ອຍຕ້ອງການຄົນມາຊ່ວຍຂ້ອຍເວລາເຂົ້າຫ້ອງນໍ້າ ເຊິ່ງມັນເຮັດໃຫ້ຂ້ອຍຮູ້ສຶກອາຍຫຼາຍ. ຂ້ອຍພຽງແຕ່ຮູ້ສຶກວ່າຂ້ອຍບໍ່ຄວນລົບກວນໝູ່ຂອງຂ້ອຍ.

ນາງ ເພັດມະນີ ເວົ້າວ່າ: "ຂ້ອຍອາຍຸ 15 ປີ. ຂ້ອຍຮຽນຢູ່ຫ້ອງດຽວກັນກັບ ນາງ ວະລິຕາ. ຂ້ອຍມັກເປັນໝູ່ກັບລາວ ແລະ ພວກເຮົາເຂົ້າກັນໄດ້ດີ. ນາງ ວະລິຕາ ແມ່ນຄົນທີ່ເຮັດໃຫ້ຂ້ອຍມີຄວາມມ່ວນຊື່ນໃນເວລາຢູ່ນຳກັນ. ພວກເຮົາຫຼິ້ນເກມເວລາຢູ່ໃນກຸ່ມ, ລົມກັນຄືກັບກຸ່ມໄວລຸ້ນທົ່ວໄປ. ພວກເຮົາຮູ້ວ່າ ມີບາງຢ່າງທີ່ ນາງວະລິຕາ ເຮັດໄດ້ຍາກ. ພວກເຮົາຮູ້ເຖິງຄວາມຫຍຸ້ງຍາກຂອງລາວ, ແຕ່ກໍບໍ່ເປັນຫຍັງເພາະ ພວກເຮົາສາມາດຊ່ວຍລາວໄດ້. ພວກເຮົາຮູ້ວ່າ ລາວຮູ້ສຶກອາຍທີ່ຕ້ອງໃຫ້ພວກເຮົາຊ່ວຍເຫຼືອ. ລາວຈະຮູ້ສຶກວ່າລາວລົບກວນພວກເຮົາ ແຕ່ໃນຕົວຈິງພວກເຮົາບໍ່ໄດ້ຄິດຫຍັງເລີຍ.

ນາງ ວະລິດາ ມີສິດເທົ່າທຽມກັບພວກເຮົາ ໃນການໄດ້ຮັບການສຶກສາຢູ່ໂຮງຮຽນ ຫຼື ມະຫາວິທະຍາໄລ ແລະ ໄປຫ້ອງຮຽນ ຫຼື ຫ້ອງນ້ຳ.

ແຕ່ລັດຖະບານຄວນພະຍາຍາມ ແລະ ສ້າງຄວາມໝັ້ນໃຈວ່າຄົນພິການສາມາດເຮັດໃນສິ່ງດຽວກັບບຸກຄົນສົມບູນທຸກຄົນເຮັດໄດ້ໂດຍບໍ່ຕ້ອງອາໄສການຊ່ວຍເຫຼືອຈາກໝູ່ເພື່ອນ ຫຼື ຄອບຄົວ. ນາງ ວະລິດາ ມີຄວາມສຸກທີ່ສຸດທີ່ໄດ້ມີອິດສະຫຼະ ແລະ ບາງຄັ້ງລາວກໍຕ້ອງອາໄສ ຄົນອື່ນຢູ່ຄືກັນ".

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 3

*"ຄວາມແຕກຕ່າງທີ່ຫຼາກຫຼາຍຂອງເດັກຕ້ອງຖືກຍອມຮັບ ແລະເຫັນວ່າເປັນທ່າແຮງ, ບໍ່ແມ່ນຈຸດອ່ອນ"*

ໃນເມື່ອຄວາມແຕກຕ່າງທີ່ຫຼາກຫຼາຍຂອງເດັກຖືກຍອມຮັບ, ຄູສອນ ແລະ ນັກຮຽນກໍຈະໄດ້ຮັບການຊຸກຍູ້ໃຫ້ຮູ້ເຖິງຄຸນຄ່າຂອງຄວາມແຕກຕ່າງຫຼາກຫຼາຍຂອງເດັກດັ່ງກ່າວ. ກົງກັນຂ້າມຄູ ແລະ ນັກຮຽນຈະບໍ່ຢ້ານກົວຕໍ່ຄວາມແຕກຕ່າງຫຼາກຫຼາຍຂອງເດັກດັ່ງກ່າວ. ການຍອມຮັບເອົາຄວາມແຕກຕ່າງທີ່ຫຼາກຫຼາຍຂອງເດັກນັ້ນ ສ້າງທັກສະທາງດ້ານສັງຄົມ ກ່ຽວກັບການສຶກສາຮຽນຮ່ວມເຊັ່ນ: ຄວາມເຫັນອົກເຫັນໃຈຜູ້ອື່ນ, ການຮ່ວມມື ແລະ ຍູ້ແຮງແນວຄວາມຄິດທີ່ໃຫ້ຜູ້ຮຽນທຸກຄົນນຳເອົາຄວາມອຸດົມສົມບູນ ແລະ ຄຸນຄ່າມາສູ່ໂຮງຮຽນ, ຫ້ອງຮຽນ ແລະ ສະຖາບັນສ້າງຄູ. ການສຶກສາຮຽນຮ່ວມໄດ້ເປີດໂອກາດໃຫ້ຄູໄດ້ກ້າວໄປສູ່ ແລະ ພັດທະນາຈຸດແຂງ ແລະ ປະສົບການຂອງນັກຮຽນຢູ່ໃນສະພາບການຕົວຈິງຂອງເຂົາເຈົ້າ ເພື່ອແນໃສ່ເພີ່ມເຕີມການຮຽນຮູ້ ແລະ ສົ່ງເສີມຄວາມຍຸຕິທຳ. ຕົວຢ່າງນັກຮຽນທີ່ມາຈາກຫຼາຍຊົນເຜົ່າ ແລະ ພື້ນຖານພາສາຊົນເຜົ່າທີ່ແຕກຕ່າງກັນ, ຄູສາມາດສົ່ງເສີມໃຫ້ເຂົາເຈົ້າແລກປ່ຽນທາງດ້ານວັດທະນະທຳໃນໂຮງຮຽນ ແລະ ໃນຫ້ອງຮຽນ (ເຊັ່ນ: ການເລົ່າເລື່ອງ, ນິທານ, ຮ້ອງເພງ, ຟ້ອນ ແລະ ອື່ນໆ) ໃນທາງທີ່ຂະຫຍາຍຂອບເຂດຂອງນັກຮຽນກໍຄືຄູສອນ.

### ກໍລະນີສຶກສາຈາກ ສ.ປ.ປ ລາວ

*ຫົວຂໍ້ທີ 1: ການຍອມຮັບຄວາມແຕກຕ່າງຂອງເດັກ*

ໂຮງຮຽນປະຖົມ ນິວົງໄຊ ແມ່ນໂຮງຮຽນໜຶ່ງໃນຈຳນວນຫຼາຍໂຮງຮຽນທີ່ຂຶ້ນກັບເມືອງອຸທູມພອນ, ແຂວງ ສະຫວັນນະເຂດ ທີ່ໄດ້ຮັບໂຄງການຮຽນຮ່ວມລະຫວ່າງເດັກປົກກະຕິ ແລະ ເດັກພິການເຂົ້າມາປະຕິບັດໃນໂຮງຮຽນໃນສົກຮຽນ 1998-1999 ແລະ ກໍໄດ້ຮັບເດັກພິການມາຕະຫຼອດຈົນເຖິງປະຈຸບັນນີ້. ໂຄງການດັ່ງກ່າວນີ້ ແມ່ນໂຄງການໜຶ່ງທີ່ສ້າງຄວາມພູມໃຈ ໃຫ້ແກ່ຜູ້ປົກຄອງເດັກພິການທີ່ໄດ້ສົ່ງລູກຂອງຕົນເອງເຂົ້າມາຮຽນຮ່ວມກັບເດັກປົກກະຕິ ເຊິ່ງໜຶ່ງໃນນັ້ນ ກໍແມ່ນຄອບຄົວຂອງ ທ້າວ ສຸພານິດ ເຊິ່ງກ່ອນໜ້ານີ້ພໍ່ຂອງລາວຄິດວ່າໝົດຫວັງແລ້ວທີ່ ຈະເຮັດໃຫ້ລູກຂອງຕົນເອງມີໂອກາດໃນການອ່ານໄດ້ ແລະ ຂຽນໄດ້ຄືກັນກັບຄົນທົ່ວໄປ.

ທ້າວ ສຸພານິດ ເກີດເມື່ອວັນທີ 4 ເດືອນ 1 ປີ 1993 ມີອ້າຍ, ເອື້ອຍ, ນ້ອງຮ່ວມກັນມີ 3 ຄົນ, ຍິງ 2 ຄົນ ເຊິ່ງລາວເປັນຜູ້ ທີ 3 ແລະ ຢູ່ໃນຊົນຊັ້ນສາມັນຊົນ. ໃນການຮຽນ-ການສອນຄູຕ້ອງມີຄວາມໃກ້ຊິດກວ່າ ເດັກປົກກະຕິອື່ນໆເຊັ່ນ: ຕ້ອງໝັ່ນເວົ້າ, ໝັ່ນລົມກັບເຂົາ

ເພື່ອຢາກຮູ້ວ່າລາວຕ້ອງການຫັຍງ ແລະ ຢາກນັ່ງກັບໃຜພາຍໃນຫ້ອງ. ຄູຕ້ອງຈັດໃຫ້ນັ່ງຢູ່ທາງໜ້າໃກ້ກັບຄູ ເພື່ອສະດວກໃນການຊ່ວຍເຫຼືອ ໂດຍສະເພາະໃນເວລາອ່ານເພາະ ທ້າວ ສຸພານິດ ແມ່ນພິການຕາ (ແສງຕາສັ້ນ), ແຕ່ບໍ່ແມ່ນເປັນມາແຕ່ກຳເນີດ.

ສາຍເຫດທີ່ພາໃຫ້ເປັນພິການຕາຂອງ ທ້າວ ສຸພານິດ ແມ່ນຍ້ອນຜົນກະທົບຈາກແສງຂອງການຈອດເຫຼັກເພາະຄອບຄົວຂອງລາວຕັ້ງບ່ອນສ້ອມແປງລົດ ແລະ ຮັບຈອດເຫຼັກຕ່າງໆໃນເຮືອນ. ເມື່ອເວລາພໍ່ລາວຈອດເຫຼັກ ລາວ ກໍເບິ່ງຕາມພາສາເດັກນ້ອຍ ຫຼາຍຕໍ່ຫຼາຍຄັ້ງຈົນກາຍເປັນພິການຕາຍ້ອນການຖືເບົາຂອງພໍ່ດ້ວຍ.

ໃນການກວດກາສຳລັບເດັກປົກກະຕິແມ່ນມີ 5 ຂໍ້, ສ່ວນລາວແມ່ນມີ 2 ຂໍ້ ແລະ ຂຽນໃຫຍ່ແດ່ໜ້ອຍໜຶ່ງ. ແຕ່ມາດຽວນີ້ລາວສາມາດອ່ານໄດ້ສະບາຍ, ເອົາປຶ້ມຫ່າງຈາກໜ້າກວ່າແຕ່ເກົ່າຫຼາຍ ແລະ ການຮຽນຂອງລາວແມ່ນຢູ່ໃນປະເພດປານກາງ. ການເຮັດກິດຈະກຳນອກຫ້ອງສາມາດເຮັດໄດ້ຄືກັນກັບເດັກປົກກະຕິ ແລະ ໄດ້ມີການເຄື່ອນໄຫວ ເຕະຕໍ້, ເຕະບານ ແລະ ຕີໝາກບູນນຳໝູ່ຢ່າງເບີກບານມ່ວນຊື່ນ.

ຜ່ານການສຶກສາອົບຮົມສັ່ງສອນຈາກຄູເລື້ອຍໆມາລາວໄດ້ກາຍເປັນຄົນຂຽນໄດ້ ແລະ ອ່ານໄດ້ດີກວ່າເມື່ອກ່ອນ. ສຸດທ້າຍ ກໍສາມາດສອບເສັງຂຶ້ນຫ້ອງໄປແຕ່ລະຂັ້ນໄດ້. ໃນປະຈຸບັນນີ້ ລາວຮຽນຢູ່ຫ້ອງ ປ5 ແລ້ວ. ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ໂຄງການ ຮຽນຮ່ວມນີ້ ເປັນໂຄງການທີ່ດີ ເຊິ່ງມັນໄດ້ຊ່ວຍເຫຼືອເດັກທີ່ດ້ອຍໂອກາດໄດ້ສຶກສາຮຽນຮ່ວມກັບເດັກປົກກະຕິທົ່ວໄປ.

*ຫົວຂໍ້ທີ 2 : ການຊ່ວຍເຫຼືອເດັກທີ່ມີຄວາມຕ້ອງການພິເສດ*

ທ້າວ ທິດພະຈັນ ອາຍຸ 7 ປີ, ຜູ້ປົກຄອງໄດ້ເອົາເດັກມາຝາກຢູ່ໂຮງຮຽນ. ທຳອິດຄູໄດ້ຖາມກ່ຽວກັບສະພາບຂອງເດັກວ່າເປັນແນວໃດ. ຜູ້ປົກຄອງໄດ້ເລົ່າວ່າ: ເມື່ອເດັກອາຍຸ 4 ປີ ໄດ້ຖືກໄຟຊອດ. ເມື່ອອາຍຸ 5 ປີ ເດັກໄດ້ຕົກເຮືອນ ເຮັດໃຫ້ແຂນຫັກ ແລະອາຍຸ 6 ປີ ໄດ້ຕົກເຮືອນຄືວ ເຮັດໃຫ້ແກ້ວສຽບຄໍ ໄປຫຍິບຢູ່ໂຮງໝໍ, ແຂນກໍພິການເລີຍ.

ທ້າວ ທິດພະຈັນ ພິການມືເບື້ອງຂວາຈັບບາຍໄດ້ເລັກໜ້ອຍ. ເມື່ອໄດ້ເຂົ້າໂຄງການແລ້ວຄູໄດ້ແນະນຳໃຫ້ໝູ່ຄູ່ຮັກແພງລາວ ແລະ ຊ່ວຍເຫຼືອຜູ້ກ່ຽວ. ຈັດເດັກນັ່ງທາງໜ້າ ຫານັກຮຽນທີ່ຊ່ວຍໝູ່ໄດ້ມານັ່ງນຳ. ເວລາຮຽນຊົ່ວໂມງບົດຂຽນ ຄູແອບໃຫ້ເດັກຂຽນມືຂວາ ແລະ ມືຊ້າຍ ແຕ່ເນື່ອງຈາກວ່າມືເບື້ອງຂວາຂອງຜູ້ກ່ຽວຈັບບາຍບໍ່ໄດ້ດີ ຄູຈຶ່ງແອບໃຫ້ເດັກຂຽນມືຊ້າຍແທນ. ເບື້ອງຕົ້ນເດັກກໍບໍ່ສາມາດຂຽນໄດ້ແຕ່ຄູກໍໄດ້ພະຍາຍາມຝຶກເດັກໃຫ້ໝັ້ນຂຽນ. ຄູຈັບມື ພາເດັກຂຽນໃສ່ກະດານ, ໃສ່ປຶ້ມຈົນເດັກມີຄວາມເຄີຍຊິນ. ຄູໄດ້ຕິດຕາມເດັກຢ່າງໃກ້ສິດ ເພາະເດັກມັກເຈັບທ້ອງປະຈຳ. ໃນເບື້ອງຕົ້ນ ອາການເຈັບແບບທ້ອງເອັ່ນ. ມັນເຈັບສຽບ ແລະ ເວລາເດັກເຈັບກໍຈະໄດ້ນອນພັກ. ເດັກມັກຂາດຮຽນຫຼາຍຍ້ອນຄວາມເຈັບເປັນ. ຜ່ານການຮຽນການຝຶກແອບຂຽນເບື້ອງຊ້າຍມາໄດ້ຫຼາຍເດືອນ ຄູເຫັນວ່າເດັກມີຄວາມກ້າວໜ້າຫຼາຍ. ປະຈຸບັນນີ້ ເດັກສາມາດຂຽນດ້ວຍຕົນເອງໄດ້ປົກກະຕິ ແລະ ດີຂຶ້ນເລື້ອຍໆມາ. ໃນອະນາຄົດລາວຢາກເຮັດການກໍ່ສ້າງ.

# ບັນຫາທ້າທາຍ 2

## ທັກສະໃນການສອນ ແລະ ວິທີສິດສອນ

## ການວິເຄາະສະພາບການ

### *ການສິດສອນທີ່ບໍ່ເອົານັກຮຽນເປັນໃຈກາງ*

ບັນຫານີ້ ກ່ຽວພັນກັນກັບວິທີການທີ່ຄັບຂຸດໃນການສິດສອນ. ວິທີສິດສອນທີ່ເອົາຄູເປັນໃຈກາງ, ແຕ່ບໍ່ແມ່ນ ເອົານັກຮຽນເປັນໃຈກາງຈະບໍ່ແມ່ນການສອນການສຶກສາຮຽນຮ່ວມ ເພາະວ່າວິທີສິດສອນດັ່ງກ່າວບໍ່ສາມາດດັດປັບໄດ້ ຢ່າງເຕັມສ່ວນ ເຂົ້າກັບຄວາມຕ້ອງການຂອງນັກຮຽນທີ່ມີຄວາມແຕກຕ່າງກັນ, ທັງບໍ່ແມ່ນວິທີສິດສອນທີ່ເໝາະສົມທີ່ມີການອີງໃສ່ພອນສະຫວັນ, ທີ່ມາ ແລະ ປະສົບການຂອງນັກຮຽນແຕ່ລະຄົນ. ວິທີສິດສອນໂດຍເອົາຄູເປັນໃຈກາງ ມັກຈະມີທ່າອ່ຽງຖືເອົາການຮຽນຮູ້ເປັນເຄື່ອງມືທີ່ຕາຍຕົວ ຫຼື ກຳນົດໄວ້ກ່ອນ, ແຕ່ບໍ່ແມ່ນຂະບວນການແບບຕັ້ງໜ້າທີ່ມີການຮຽນຮູ້ເກີດຂຶ້ນຕົວຈິງ ແລະ ຄວນຈະເປັນໄປເຊັ່ນນັ້ນ. ສະນັ້ນ, ວິທີການທີ່ເອົາຄູເປັນໃຈກາງ ເຫັນວ່ານັກຮຽນຮຽນເອົາຄວາມຮູ້ແບບເຊື່ອຍຊາ ເຊິ່ງບໍ່ແມ່ນຜູ້ຮຽນຮູ້ແບບຕັ້ງໜ້າຢູ່ໃນການສ້າງຄວາມຮູ້[4]

### *ຂາດວິທີການຮຽນ-ການສອນແບບໃຫ້ນັກຮຽນມີສ່ວນຮ່ວມ ແລະ ຫຼາກຫຼາຍ*

ຈາກຈຸດທີ່ຜ່ານມາຍັງມີບັນຫາກ່ຽວກັບວິທີສິດສອນຫຼາຍຢ່າງເຊິ່ງນຳໄປສູ່ການຮຽນ-ການສອນແບບຕັ້ງໜ້າ, ບໍ່ສາມາດເຂົ້າໄປເຖິງນັກຮຽນບາງຄົນ. ໂດຍທົ່ວໄປແລ້ວຈະບໍ່ແມ່ນການຮຽນຮ່ວມ. ສິ່ງດັ່ງກ່າວນີ້ປະກອບມີ: ການຂາດເຂີນວິທີການທີ່ແຕກຕ່າງກັນໃນການສອນ; ການອີງໃສ່ການສອນແບບທ່ອງຈຳຫຼາຍໂພດ (ບ່ອນທີ່ມີການຮຽນ-ການສອນທີ່ເນັ້ນໃສ່ແຕ່ຄູເປັນຜູ້ສົ່ງຄວາມຮູ້ໃຫ້ນັກຮຽນໃນລັກສະນະການບັນລະຍາຍ ແລະ ບ່ອນທີ່ສອນແບບໃຫ້ນັກຮຽນຕອບ ໂດຍລື້ມຄືນສິ່ງທີ່ຄູສອນໄດ້ສອນຜ່ານມາ). ການຂາດຄວາມດຸ່ນດ່ຽງກັນລະຫວ່າງການສອນ ນັກຮຽນແຕ່ລະຄົນ ແລະ ສອນນັກຮຽນເປັນກຸ່ມ ເຊິ່ງເປັນການສົ່ງເສີມໃຫ້ນັກຮຽນມີປະຕິສຳພັນນຳກັນ.

ນີ້ບໍ່ແມ່ນວິທີການໃນການປະຕິບັດ ທີ່ກ່ຽວກັບເນື້ອໃນການຮຽນ-ການສອນເທົ່ານັ້ນ, ແຕ່ຍັງກ່ຽວຂ້ອງກັບການຈັດຫ້ອງຮຽນເຊັ່ນດຽວກັນ. ຖ້າໃຫ້ນັກຮຽນນັ່ງຕາມໂຕະທີ່ຈັດວາງໄວ້ເປັນແຖວຢ່າງຖາວອນໂດຍມີໂຕະຄູສອນຢູ່ທາງໜ້າຫ້ອງຮຽນ, ການປະຕິບັດຄືແນວນີ້ ແມ່ນຂັດກັບການສອນການສຶກສາຮຽນຮ່ວມເຊັ່ນດຽວກັນ. ວິທີການສອນແບບເອົາຄູເປັນໃຈກາງ ທີ່ມີການຈັດຫ້ອງຮຽນແບບແຂງກະດ້າງ ແບບນີ້ເປັນລັກສະນະພິເສດຂອງຫ້ອງຮຽນ ທີ່ພົບຢູ່ໃນຫຼາຍໆບ່ອນໃນພາກພື້ນ ເຊິ່ງເປັນຂະບວນການທຳອິດທີ່ຕ້ອງປ່ຽນແປງ ເພື່ອສົ່ງເສີມການມີສ່ວນຮ່ວມນຳ ແລະ ການສຶກສາຮຽນຮ່ວມ.

[4] ທ່ານ Freire, P. 1996. ການສິດສອນແບບບັງຄັບ. ລອນດອນ, ເພັນກວິນ, ໜ້າທີ 53.

## ຕົວຢ່າງຈາກປະເທດຫວຽດນາມ

### *"ໂຮງຮຽນຫຼັງໃໝ່" ຕົວແບບ*[5]

ນັກຮຽນຄູກໍາລັງຮຽນເປັນຄູເພື່ອສອນໃນ"ໂຮງຮຽນຫຼັງໃໝ່"ຕົວແບບ ເຊິ່ງກໍາລັງພັດທະນາໃນລະດັບຊາດ ເພື່ອບັນລຸການສຶກສາຮຽນຮ່ວມ. ຕົວແບບດັ່ງກ່າວນີ້ສະໜັບສະໜູນຫ້ອງຮຽນຂະໜາດນ້ອຍ ແລະ ການຮຽນເປັນກຸ່ມນ້ອຍໆ. "ໂຮງຮຽນຫຼັງໃໝ່"ຕົວແບບ ມີດັ່ງນີ້:

- ແຍກນັກຮຽນອອກເປັນກຸ່ມນ້ອຍໆ ເພື່ອສົນທະນາກັນ;
- ອະນຸຍາດໃຫ້ນັກຮຽນຮຽນຕາມຈັງຫວະຂອງເຂົາເອງ;
- ສ້າງມູມ (ແຈ) ຮຽນໃນຫ້ອງຮຽນ (ນີ້ແມ່ນອີງໃສ່ວິຊາຮຽນເຊັ່ນ: ມູມຮຽນວິຊາເລກ);
- ຊຸກຍູ້ໃຫ້ນັກຮຽນມີການຖອດຖອນບົດຮຽນໃນການສິດສອນຂອງຄູ (ເຊັ່ນຜ່ານກັບປິດສະໜາ ເຊິ່ງ ນັກຮຽນໃຫ້ຂຽນຄໍາຄິດເຫັນ ຫຼື ຂຽນຈົດໝາຍຫາຄູແລ້ວໄປວາງໃສ່ກັບປິດສະໜາດັ່ງກ່າວ);
- ຕອບສະໜອງຄວາມເປັນໄປໄດ້ໃນການສອນຫ້ອງຄວບ(ເຊັ່ນ:ສອນຄວບຊັ້ນປ.2 ກັບ ປ 3);
- ສົ່ງເສີມການມີສ່ວນຮ່ວມຂອງພໍ່ແມ່ນັກຮຽນໂດຍຜ່ານສະມາຄົມພໍ່ແມ່ນັກຮຽນ ແລະ ຄູສອນ
- ສົ່ງເສີມໃຫ້ຊຸມຊົນມີສ່ວນຮ່ວມນໍາ
- ໃຫ້ການຊ່ວຍເຫຼືອຄູໃນການນໍາໃຊ້ (1) ປື້ມຄູ່ມືຄູ, (2) ປື້ມແບບຮຽນຂອງນັກຮຽນ ແລະ (3) ປື້ມບົດຝຶກຫັດຂອງນັກຮຽນ (ຕາມລາຍວິຊາ).

ວິທີການສິດສອນ, ການຮຽນຮູ້ ແລະ ການຮຽນຈັດຫ້ອງຮຽນຄືແບບນີ້ແມ່ນຕ້ອງການຊ່ວຍ ເຫຼືອສະເພາະໃນວິທີການສອນການສຶກສາຮຽນຮ່ວມ, ນັບທັງການສ້າງຄູກ່ອນໄປເປັນຄູ ແລະ ພາຍຫຼັງໄດ້ໄປປະຈໍາການແລ້ວ.

## *ວິທີສິດສອນທີ່ເໝາະສົມກັບນັກຮຽນຈໍານວນໃດຈໍານວນໜຶ່ງ*

ວິທີສິດສອນແບບນີ້(ເຊັ່ນ: ແບບເອົາຄູເປັນໃຈກາງ, ແບບບັນຍາຍ) ເອື້ອອໍານວຍໃຫ້ແກ່ຜູ້ທີ່ຮຽນໄວ, ຮຽນເກັ່ງຫຼາຍກວ່າຜູ້ທີ່ຮຽນຊ້າ, ເປັນຕົ້ນແມ່ນກັບຜູ້ທີ່ບໍ່ຮູ້ພາສາທີ່ໃຊ້ໃນຫ້ອງຮຽນເປັນຢ່າງດີ ແລະ ນັກຮຽນພິການ. ຖ້ານັກຮຽນຫາກມີບັນຫາໃນການຟັງ ແລະ ທ່ອງຈໍາກໍຈະເຮັດໃຫ້ການສິດສອນແບບບັນລະຍາຍ ແລະ ແບບທ່ອງຈໍາມີຄວາມສ່ຽງທີ່ຈະເຮັດໃຫ້ນັກຮຽນຈໍານວນດັ່ງກ່າວຢູ່ນອກການຮຽນຮ່ວມ. ເຖິງຢ່າງໃດກໍຕາມ ຈະບໍ່ມີວິທີສິດສອນແບບສະເພາະໃດໜຶ່ງ ຫຼື ຄູ່ມືຫ້ອງຫ້ອງໃດໜຶ່ງທີ່ດີທີ່ສຸດສະເໝີໄປ ເພາະວ່ານັກຮຽນແຕ່ລະຄົນມີຄວາມຕ້ອງການທາງດ້ານການຮຽນ ແລະ ຈຸດແຂງທີ່ແຕກຕ່າງກັນ, ວິທີສິດສອນໃດໜຶ່ງທີ່ນໍາໃຊ້ໂດຍປະຕິເສດວິທີສິດສອນອື່ນໆ (ເຊັ່ນ: ການນໍາໃຊ້ການຮຽນຮູ້ແບບທ່ອງຈໍາເອົາໂດຍຜ່ານການຖາມ ແລະ ຕອບ ຫຼື ມີພຽງແຕ່ການຈັດກຸ່ມເທົ່ານັ້ນ) ຈະພາໃຫ້ມີຄວາມສ່ຽງໃນການການຫຼຸດຜ່ອນຄຸນນະພາບຂອງການຮຽນຮູ້ ຫຼືບໍ່ ກໍເຮັດໃຫ້ນັກຮຽນຈໍານວນໃດໜຶ່ງຢູ່ນອກການຮຽນຮ່ວມ.

---

[5] ອຸຍແນັດສະໂກ. 2012. *ບົດລາຍງານກອງປະຊຸມຂອງຊ່ຽວຊານປະຈໍາພາກພື້ນ: ການສຶກສາຮຽນຮ່ວມໂດຍຜ່ານການສ້າງຄູທີ່ມີຄຸນນະພາບໃນຂົງເຂດອາຊີ - ປາຊີຟິກ.* ບາງກອກ, ອຸຍແນັດສະໂກ, ແຕ່ໜ້າທີ 32-33.

### *ວິທີການສິດສອນແບບບໍ່ສົ່ງເສີມໃຫ້ຄູມີຫົວຄິດປະດິດສ້າງ ແລະ ດັດປັບຫຼັກສູດ ແລະ ອຸປະກອນ ໃຫ້ເໝາະສົມກັບສະພາວະຄວາມເປັນຈິງຂອງຫ້ອງຮຽນ ແລະ ຊຸມຊົນໃນທ້ອງຖິ່ນ.*

ການຂາດທັກສະ ແລະ ຄວາມໝັ້ນໃຈຂອງຄູໃນການສ້າງຫຼັກສູດ ແລະ ອຸປະກອນທີ່ແທດເໝາະກັບທ້ອງຖິ່ນ ແລະ ການຂາດວິທີສິດສອນທີ່ເໝາະສົມກັບສະພາບແວດລ້ອມຕົວຈິງຂອງທ້ອງຖິ່ນ ເປັນອຸປະສັກຕົ້ນຕໍຕໍ່ການສຶກສາ ຮຽນຮ່ວມ. ຢູ່ໃນຫຼາຍໆປະເທດຫຼັກສູດການສຶກສາ ແມ່ນໄດ້ສ້າງຂຶ້ນຢູ່ໃນລະດັບສູນກາງ ແລະບົດບາດຂອງຄູແມ່ນ ພຽງແຕ່ຈັດຕັ້ງປະຕິບັດຫຼັກສູດ. ແຕ່ຢູ່ໃນບາງປະເທດ ແມ່ນອະນຸຍາດໃຫ້ໂຮງຮຽນເລືອກເນື້ອໃນເອງສຳລັບຫຼັກສູດທ້ອງຖິ່ນ. ບໍ່ວ່າຈະເປັນລະບົບການສ້າງຫຼັກສູດໃນຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນ, ບົດບາດຂອງຄູກໍຄືການດັດປັບຫຼັກສູດ ໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ເຊິ່ງພົວພັນກັບນັກຮຽນ, ຄອບຄົວແລະຊຸມຊົນ. ເຖິງວ່າຈະມີ ການຊ້ຳຊ້ອນກັນລະຫວ່າງສະພາບຄວາມເປັນຈິງຂອງທ້ອງຖິ່ນ ແລະ ສະພາບຄວາມເປັນຈິງຂອງຫ້ອງຮຽນໃນໂຮງຮຽນກໍຕາມ (ເຊັ່ນ: ພາສາແມ່), ແຕ່ສະພາວະຄວາມເປັນຈິງເຫຼົ່ານີ້ກໍມີຄວາມແຕກຕ່າງກັນໃນຫຼາຍດ້ານດັ່ງລຸ່ມນີ້:

- ຫຼັກສູດ ແລະ ອຸປະກອນທ້ອງຖິ່ນທີ່ພົວພັນກັບຊຸມຊົນໃນການແກ້ໄຂບັນຫາດ້ານວັດທະນະທຳ ແລະ ສະຖານະການ (ເຊັ່ນ: ຄວາມຮູ້ໃນທ້ອງຖິ່ນ, ສະພາບເສດຖະກິດສັງຄົມ, ການດຳລົງຊີວິດໃນຊົນນະບົດ ຫຼື ຕົວເມືອງ);
- ຫຼັກສູດ ແລະ ອຸປະກອນທ້ອງຖິ່ນທີ່ພົວພັນກັບຫ້ອງຮຽນໃນການແກ້ໄຂບັນຫາຄວາມຕ້ອງການສະເພາະຂອງນັກຮຽນໃນຫ້ອງຮຽນ (ເຊັ່ນ: ຄວາມຕ້ອງການທາງດ້ານພາສາ ແລະ ດ້ານການຮຽນ).

ສະຖາບັນສ້າງຄູທີ່ບໍ່ຊຸກຍູ້ຫົວຄິດປະດິດສ້າງ ແລະ ແນວຄິດລິເລີ່ມຕົ້ນໃນການດັດປັບ ແລະ ພັດທະນາອຸປະກອນ ແລະ ຫຼັກສູດ ສິ່ງຜົນເຮັດໃຫ້ຄູຜູ້ທີ່ມີຄວາມສາມາດໜ້ອຍໃນຄວາມຍືດຍຸ່ນ, ໃນການຕອບສະໜອງຕໍ່ສະພາບຄວາມເປັນຈິງໃນໂຮງຮຽນ ແລະ ນັກຮຽນ, ໃນການຂາດຄວາມໝັ້ນໃຈທາງດ້ານວິຊາຊີບ ແລະ ຄວາມເປັນສ່ວນຕົວ ແມ່ນຍັງເອື້ອຍອີງໜັກໃສ່ແຕ່ອຸປະກອນຂອງຫຼັກສູດທີ່ມີຢູ່ແລ້ວເທົ່ານັ້ນ. ນີ້ແມ່ນບັນຫາສະເພາະຂອງຄູທີ່ໄດ້ເຮັດວຽກ ຢູ່ໃນໂຮງຮຽນແລ້ວ ແລະ ໃນບ່ອນທີ່ມີຂີດຈຳກັດ ແລະ/ຫຼື ມີອຸປະກອນການຮຽນ-ການສອນທີ່ມີຄຸນນະພາບຕ່ຳ. ແມ່ນຫຼັກສູດ ແລະ ອຸປະກອນທີ່ມີຄຸນນະພາບສູງກໍຍັງໄດ້ຮັບຜົນປະໂຫຍດຈາກການດັດປັບໃຫ້ເໝາະສົມກັບສະພາບຄວາມເປັນຈິງທີ່ຄູສອນໄດ້ພົບເຫັນຢູ່ໃນຊຸມຊົນ, ໂຮງຮຽນ ແລະ ຫ້ອງຮຽນຂອງພວກເຂົາເຈົ້າ.

### *ຂາດການປະເມີນຜົນການຮຽນເພື່ອປັບປຸງ[6] ຢ່າງຕໍ່ເນື່ອງ ແລະ ທີ່ແທ້ຈິງ*

ການປະເມີນຜົນແບບກຳນົດຫຼາຍໂພດ ແລະ ບໍ່ມີຄວາມຍືດຍຸ່ນ, ບໍ່ມີເປົ້າໝາຍ ຫຼື ຈຸດປະສົງທີ່ຈະແຈ້ງ ແລະ ບໍ່ໄດ້ພົວພັນກັບຈຸດປະສົງຂອງການຮຽນຮູ້ຈະນຳໄປສູ່ການຂາດຂະບວນການຮຽນຮູ້ທີ່ແທ້ຈິງຢູ່ໃນໂຮງຮຽນ ແລະ ຫ້ອງຮຽນ ແລະ ອາດສະໜອງໄດ້ເປັນພຽງສ່ວນໜຶ່ງເທົ່ານັ້ນ. ຮູບແບບການປະເມີນທີ່ໄດ້ກ່າວມາ 'ຂ້າງເທິງນີ້' ຖ້າຄູສອນ ແລະ ນັກຮຽນບໍ່ມີຄວາມເຂົ້າໃຈເປັນຢ່າງດີ ອາດເກີດມີຄວາມບໍ່ພໍໃຈ ແລະ ມີຄວາມສ່ຽງທີ່ວ່າການປະເມີນດັ່ງກ່າວນັ້ນ ອາດບໍ່ມີຄວາມຊັດເຈນ..

---

[6] Sadler ອະທິບາຍວ່າ ການປະເມີນຂໍ້ມູນ ມີຄືດັ່ງນີ້.......ໂດຍສະເພາະແລ້ວ ແມ່ນມີຄວາມຕັ້ງໃຈ ທີ່ສະເໜີຄວາມຄິດເຫັນ ກ່ຽວກັບການປະຕິບັດງານ ເພື່ອປັບປຸງ ແລະ ເລັ່ງລັດການສຶກສາ. ທ່ານສາມາດກວດກາເບິ່ງໄດ້ໃນ:Sadler, D.R. 1998. ການເຂົ້າເບິ່ງ: *Revisiting the territory* ໃນການປະເມີນໃນການສຶກສາ. 5(1). ໜ້າ, 77.

ນອກຈາກນັ້ນ, ເຖິງວ່າການປະເມີນຜົນການຮຽນຮູ້ມີຄວາມສຳຄັນກໍຕາມ,ການຂາດການປະເມີນຜົນການຮຽນຮູ້ ເຊິ່ງເປັນການປະເມີນເພື່ອປັບປຸງ ແລະ ເຊິ່ງເປັນພາກສ່ວນໜຶ່ງຂອງຂະບວນການຮຽນຮູ້ ກໍຈະບໍ່ນຳໄປສູ່ການສຶກສາການຮຽນຮ່ວມແຕ່ຢ່າງໃດ. ເມື່ອສະຖາບັນສ້າງຄູຫາກບໍ່ໄດ້ສອນນັກຮຽນຄູ ໃຫ້ເຂົ້າໃຈ ແລະ ປະຕິບັດການປະເມີນຜົນ ການຮຽນ ເພື່ອປັບປຸງຢ່າງຕໍ່ເນື່ອງເຊັ່ນ: ການປະເມີນທີ່ປະຕິບັດຢ່າງຕໍ່ເນື່ອງ (ບໍ່ແມ່ນການສອບເສັງຄັ້ງດຽວໃນທ້າຍ ຂອງສົກຮຽນ) ແລະ ການກະກຽມທີ່ກ້າວໄປສູ່ຄວາມເຂົ້າໃຈຂະບວນການຮຽນຂອງນັກຮຽນເຂົາເຈົ້າກໍຈະພົບກັບຄວາມຫຍຸ້ງຍາກໃນເມື່ອໄດ້ກາຍເປັນຄູສອນ ເພື່ອໃຫ້ສາມາດປະເມີນ ແລະ ສົ່ງເສີມການຮຽນຮູ້ຂອງນັກຮຽນ (ແລະ ປັບປຸ່ງການສອນຂອງພວກເຂົາຕາມລຳດັບ). ໃນພາກພື້ນອາຊີປາຊີຟິກ, ມີການເໜັ້ນໜັກໃສ່ແຕ່ການສອບເສັງ ເຊິ່ງເປັນວິທີການໜຶ່ງຂອງການປະເມີນຜົນສຳເລັດຂອງນັກຮຽນ ແລະ ການປະເມີນໃນລັກສະນະດັ່ງກ່າວນີ້ແມ່ນບໍ່ໄດ້ຊ່ວຍຫຍັງໃນການຮຽນຮູ້ແລະການສຶກສາຮຽນຮ່ວມ.

ຮູບແບບການປະເມີນປົກກະຕິ ແລະ ສັງລວມ ເຊິ່ງມີແນວໂນ້ມທີ່ກ້າວໄປສູ່ຄາດໝາຍຜົນໄດ້ຮັບ, ການໃຫ້ຄະແນນ/ການຈັດລຽງລຳດັບ ແລະ ຮູບແບບການກວດສອບສະເພາະ ອາດມີຄຸນຄ່າໃນສ່ວນໜຶ່ງຂອງການປະເມີນທີ່ສົມບູນແບບ; ແຕ່ການປະເມີນດັ່ງກ່າວມີຄວາມສ່ຽງທາງດ້ານເນື້ອໃນທີ່ກະທັດລັດ ແລະ ອະທິບາຍຫຼາຍເກີນໄປໃນເມື່ອການປະເມີນດັ່ງກ່າວໄດ້ເປັນພຽງຮູບແບບໃນການປະເມີນທີ່ໄດ້ນຳໃຊ້ເທົ່ານັ້ນ ເຊິ່ງການປະເມີນນີ້ ມີທ່າອ່ຽງພຽງແຕ່ຮັບໃຊ້ຮູບແບບການຮຽນຮູ້ໃດໜຶ່ງ ແລະ ນັກຮຽນຜູ້ທີ່ສອບເສັງໄດ້ດີ. ການນຳໃຊ້ພຽງແຕ່ການປະເມີນເປັນແຕ່ລະໄລຍະ ແລະ ການນຳໃຊ້ການວັດຜົນແບບສັງລວມ ເພື່ອເປັນເຄື່ອງມືໃນການປະເມີນຜົນຮຽນຮູ້ກໍອາດຈະໃຊ້ໄດ້. ວິທີການດັ່ງກ່າວນີ້ມີຜົນໜ້ອຍ ແລະ ບໍ່ເປັນປະໂຫຍດເທົ່າກັບວິທີການປະເມີນແບບຕໍ່ເນື່ອງທີ່ສະແດງໃຫ້ເຫັນເຖິງຜົນການຮຽນຂອງນັກຮຽນໃນແຕ່ລະວັນຢູ່ໃນຫ້ອງຮຽນ.

ນອກຈາກນັ້ນ ການປະເມີນຜົນ ຖ້າບໍ່ແມ່ນການປະເມີນຜົນທີ່ແທ້ຈິງ ເຊັ່ນ: ການປະເມີນທີ່ບໍ່ໃຫ້ນັກຮຽນມີສ່ວນຮ່ວມຕັ້ງໜ້າ ແລະ ມີຄວາມໝາຍໃນຂະບວນການປະເມີນຜົນ, ກໍຈະເປັນການພາດໂອກາດໃນການສ້າງຄວາມໝັ້ນໃຈ ແລະ ການປູກຈິດສຳນຶກໃຫ້ແກ່ນັກຮຽນ.

ສະຖາບັນສ້າງຄູທີ່ສອນໃຫ້ນັກຮຽນ ຮູ້ແຕ່ການປະເມີນໃນຮູບແບບປົກກະຕິ ແລະ ສັງລວມນັ້ນອາດເປັນການສ້າງຄູທີ່ຂາດຄວາມສາມາດໃນການປະເມີນ(ແລະຊ່ວຍເຫຼືອ)ຄວາມກ້າວໜ້າຂອງນັກຮຽນທີ່ຫຼາກຫຼາຍ ແລະ ມີຄວາມຕ້ອງການທີ່ແຕກຕ່າງກັນ.

ການຂາດການປະເມີນຜົນຕໍ່ເນື່ອງ ໂດຍໃຊ້ຮູບແບບການວັດຜົນເພື່ອປັບປຸງ ແລະ ທີ່ແທ້ຈິງໃນສະຖາບັນສ້າງຄູແມ່ນເປັນບັນຫາ ແລະ ກີດຂວາງການສຶກສາຮຽນຮ່ວມໃນສະຖາບັນດັ່ງກ່າວ.

### *ການຂາດປະສົບການໃນການນຳໃຊ້ວິທີການຮຽນຮູ້ດ້ວຍຕົນເອງສຳລັບນັກຮຽນ*

ອີງຕາມຈຸດທີ່ໄດ້ເວົ້າຜ່ານມາ, ການປະເມີນຜົນທີ່ມີຄຸນນະພາບສູງແມ່ນຂຶ້ນກັບຄວາມເຂົ້າໃຈຂອງຄູຕໍ່ກັບຄວາມສາມາດສະເພາະ, ຄວາມຕ້ອງການ ແລະ ສະພາວະຄວາມເປັນຈິງຂອງນັກຮຽນແຕ່ລະຄົນ. ຖ້າບໍ່ມີຄວາມຮູ້ ແລະ ປະສົບການໃນການນຳໃຊ້ແຜນການຮຽນຮູ້ຂອງລາຍບຸກຄົນ (ເຊັ່ນ: ແຜນການບໍລິການຄອບຄົວຂອງບຸກຄົນ, ແຜນການໃຫ້ການສຶກສາລາຍບຸກຄົນ, ແຜນການເລື່ອນຊັ້ນຮຽນ/ຫຼັກສູດຫຍໍ້ເທົ່າຂອງລາຍບຸກຄົນ), ແມ່ນນັກຮຽນຄູຈະຕ້ອງໄດ້ສູ້ຊົນ ເພື່ອສ້າງຄວາມເຂົ້າໃຈເຖິງຄວາມຕ້ອງການ ແລະ ຄວາມກ້າວໜ້າຂອງນັກຮຽນໃນເມື່ອພວກເຂົາເລີ່ມປະຕິບັດໜ້າທີ່ໃນເວລາເປັນຄູສອນ.

ຄຳຖາມທີ່ທ່ານສາມາດໃຊ້ ເພື່ອຊ່ວຍທ່ານໃນການວິເຄາະສະຖານະການໃນສະພາວະຄວາມເປັນຈິງຂອງທ່ານ ກ່ອນເລີ່ມເຮັດການໂຄສະນາສົ່ງເສີມ.

- ການຮຽນຢູ່ໃນສະຖາບັນສ້າງຄູ ໄດ້ສົ່ງເສີມໃຫ້ນັກຮຽນຄູໄດ້ຮັບຮູ້, ເຂົ້າໃຈ ແລະ ປະຕິບັດການສິດສອນແບບເອົານັກຮຽນເປັນໃຈກາງ ແລະ ການຄຳນຶງເຖິງລາຍບຸກຄົນຢູ່ໃນການຮຽນ-ການສອນບໍ?
- ການຮຽນຢູ່ໃນສະຖາບັນສ້າງຄູໄດ້ນຳໃຊ້ການປະເມີນເພື່ອປັບປຸງ ແລະ ການປະເມີນທີ່ແທ້ຈິງຢ່າງຕໍ່ເນື່ອງຄຽງຄູ່ກັບການປະເມີນທົ່ວໄປ ແລະ ສັງລວມບໍ?
- ນັກຮຽນຄູໄດ້ສຳພັດກັບວິທີສິດສອນຢ່າງເຕັມສ່ວນໃນການແກ້ໄຂບັນຫາຄວາມຕ້ອງການ ແລະ ຈຸດແຂງຕ່າງໆຂອງນັກຮຽນ (ເຊັ່ນ: ຄວາມຮັບຜິດຊອບຕໍ່ຄວາມຮູ້ສຶກຕ່າງໆໃນການຮຽນ ເຊັ່ນສາຍຕາ, ຫູ, ການເຄື່ອນໄຫວ, ຄວາມຕັ້ງໃຈ ແລະ ຄວາມຮູ້ສຶກຕື່ນຕົວຂອງຜູ້ຮຽນ, ຄວາມຈຳ, ຄວາມຕັ້ງໃຈຂອງແຕ່ລະຄົນ, ການຮຽນເປັນກຸ່ມ ແລະ ອື່ນໆ) ແລະ ຄວາມຕ້ອງການວິທີການຕ່າງໆ ແລະ ຫຼາກຫຼາຍ ເພື່ອນຳໃຊ້ວິທີການສິດສອນດັ່ງກ່າວບໍ?
- ການສິດສອນແບບເອົານັກຮຽນເປັນໃຈກາງ ໄດ້ເປັນແບບຢ່າງໃຫ້ແກ່ການສິດສອນຕົວຈິງໃນສະຖາບັນສ້າງຄູບໍ?
- ນັກຮຽນຄູ ແລະ ຄູ-ອາຈານມີບົດບາດ ແລະ ໄດ້ຮັບການສະໜັບສະໜູນໃຫ້ດັດປັບ ແລະ ສ້າງຫຼັກສູດ ແລະ ອຸປະກອນທີ່ພົວພັນເຖິງທ້ອງຖິ່ນ ເພື່ອແກ້ໄຂສະພາວະຄວາມເປັນຈິງຂອງການຮຽນຢູ່ໃນຫ້ອງ ແລະ ຊຸມຊົນບໍ?
- ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງ ແລະ ປະຕິບັດນະໂຍບາຍທີ່ສົ່ງເສີມການສິດສອນແບບຖືເອົານັກຮຽນເປັນໃຈກາງ ແລະ ການປະເມີນຜົນເພື່ອປັບປຸງ ແລະ ການປະເມີນທີ່ແທ້ຈິງຢ່າງຕໍ່ເນື່ອງນັບທັງການສ້າງຄູ ແລະ ການຮຽນຢູ່ໃນໂຮງຮຽນບໍ?

## ເປົ້າໝາຍຂອງການໂຄສະນາສົ່ງເສີມ

### ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 4

*"ນັກຮຽນຄູຕ້ອງການໄດ້ຮັບການຝຶກອົບຮົມໃນການນຳໃຊ້ວິທີສິດສອນແບບເອົານັກຮຽນເປັນໃຈກາງ, ມີສ່ວນຮ່ວມ ແລະ ປັບປ່ຽນຢ່າງຕໍ່ເນື່ອງ ເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງນັກຮຽນ. ມີນັກຮຽນຫຼາຍຄົນທີ່ມີປະສົບການໜ້ອຍ ຫຼື ບໍ່ມີປະສົບການເລີຍໃນການນຳໃຊ້ວິທີສິດສອນດັ່ງກ່າວ ແລະ ພວກເຂົາເຈົ້າ ກໍຕ້ອງການໃຫ້ໄດ້ຮັບການສະໜັບສະໜູນໃນລະດັບສູງ ເພື່ອເຂົ້າໃຈ ແລະ ນຳໃຊ້ວິທີສິດສອນຢ່າງມີປະສິດທິຜົນ".*

ສະຖາບັນສ້າງຄູຕ້ອງໄດ້ຄົ້ນຄວ້າກ່ຽວກັບຄວາມເປັນຈິງທີ່ວ່າ ວິທີສິດສອນແບບຖືເອົານັກຮຽນເປັນໃຈກາງ ແມ່ນອີງໃສ່ທັກສະການສອນທີ່ນິ້ມນວນ (ເຊັ່ນ: ທັກສະໃນການສັງເກດການສອນ, ຄວາມຮູ້ສຶກຕື່ນຕົວ, ການອຳນວຍຄວາມສະດວກ ແລະ ອື່ນໆ)ການແບ່ງຄວາມຮັບຜິດຊອບ) ແລະ ແບ່ງອຳນາດກັນໃນຫ້ອງຮຽນລະຫວ່າງຄູ ແລະ ນັກຮຽນ. ວິທີການສິດສອນທີ່ຖືເອົານັກຮຽນເປັນໃຈກາງເບິ່ງຄືວ່າອາດຈະງ່າຍ ແລະ ສະດວກໃນການປະຕິບັດຕົວຈິງ. ແຕ່ເພື່ອໃຫ້ເຂົ້າໃຈວິທີການສິດສອນດັ່ງກ່າວ ແລະ ສາມາດໃຊ້ໄດ້ຢ່າງມີປະສິດທິຜົນນັ້ນນັກສຶກສາຄູຕ້ອງໄດ້ຮັບການຊຸກຍູ້ສົ່ງເສີມຈາກຄູສອນຢູ່ໃນສະຖາບັນສ້າງຄູ ແລະ ໃນເວລາລົງຝຶກຫັດສອນ ເພື່ອສ້າງຄວາມສາມາດໃນການຮັບຮູ້ ແລະ ການຕອບສະໜອງຕໍ່ຄວາມຕ້ອງການ ແລະ ທ່າແຮງຂອງນັກຮຽນ ແລະ ໃນການສ້າງ

ສາຍພົວພັນທີ່ມີຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນລະຫວ່າງຄູ ແລະ ນັກຮຽນ. ສິ່ງທີ່ກ່າວມານີ້ ສະໜັບສະໜູນການສິດສອນຕົວຈິງ ໂດຍຖືເອົານັກຮຽນເປັນໃຈກາງໃຫ້ມີຄຸນນະພາບ. ໃນເມື່ອ ນັກຮຽນຄູມີປະສົບການໜ້ອຍ ຫຼື ບໍ່ມີປະສົບການກ່ຽວກັບວິທີການສອນແບບເອົານັກຮຽນເປັນໃຈກາງ ຢູ່ໃນພື້ນຖານການສຶກສາຂອງພວກເຂົາກໍເປັນໄປໄດ້ວ່າອາດຈະໃຊ້ເວລາຫຼາຍກວ່າທີ່ຄາດຫວັງໄວ້ ເພື່ອໃຫ້ພວກເຂົາເຈົ້າໄດ້ເຂົ້າໃຈ ແລະ ມີຄວາມໝັ້ນໃຈໃນການປະຕິບັດການສິດສອນແບບເອົາ ນັກຮຽນເປັນໃຈກາງ.

ເພື່ອສະໜັບສະໜູນຂະບວນການສ້າງຄູທີ່ເອົານັກຮຽນເປັນໃຈກາງນັ້ນ ສິ່ງສຳຄັນທີ່ສຸດແມ່ນ ສະຖາບັນສ້າງຄູຕ້ອງໃຊ້ວິທີການສິດສອນທີ່ເອົານັກຮຽນເປັນໃຈກາງຢູ່ໃນສະຖາບັນຂອງຕົນ ເຊິ່ງກ້າວໄປສູ່ ການສົ່ງເສີມການຮຽນຮ່ວມໃນການ ສ້າງຄູກ່ອນປະຈຳການ. ໃນເວລາດຽວກັນນັ້ນ ກໍເປັນການສົ່ງເສີມ ການເປັນແບບຢ່າງໃນການສິດສອນທີ່ເອົານັກຮຽນເປັນໃຈກາງ ເພື່ອໃຫ້ນັກຮຽນຄູ ສາມາດໃຊ້ວິທີການສິດສອນແບບເອົານັກຮຽນເປັນໃຈກາງໃນເມື່ອເຂົາເຈົ້າໄດ້ກາຍເປັນຄູສອນ.

ລັກສະນະທີ່ສຳຄັນອື່ນໆຂອງການສິດສອນແບບເອົານັກຮຽນເປັນໃຈກາງ, ການສອນການສຶກສາຮຽນ ຮ່ວມມີດັ່ງລຸ່ມນີ້:

- ຄູເປັນຜູ້ອຳນວຍຄວາມສະດວກໃນການຮຽນ (ເຊັ່ນ: ອຳນວຍຄວາມສະດວກໃນເວລານັກຮຽນ ຮຽນເປັນກຸ່ມທີ່ມີການຊ່ວຍເຫຼືອເຊິ່ງກັນ ແລະກັນ ) ແທນທີ່ຈະເປັນຜູ້ຖ່າຍທອດຄວາມຮູ້;
- ຄູສາມາດນຳໃຊ້ວິທີການສອນ ແລະ ການຄຸ້ມຄອງຫ້ອງຮຽນທີ່ຫຼາກຫຼາຍ ເຊິ່ງມີຜົນໄວຕໍ່ ຄວາມຕ້ອງການທີ່ຫຼາກຫຼາຍ, ຕໍ່ການເຂົ້າຮ່ວມ ແລະ ຕໍ່ຄວາມສົນໃຈຂອງນັກຮຽນ, (ສົ່ງເສີມການ ມີສ່ວນຮ່ວມຂອງນັກຮຽນຢ່າງຕັ້ງໜ້າ ແລະ ການສ້າງຄວາມສົມດູນກັນລະຫວ່າງການຮຽນ ເປັນກຸ່ມ ແລະ ການຮຽນເປັນລາຍບຸກຄົນ);
- ຄູສາມາດແນະນຳໃຊ້ວິທີການສອນເປັນລາຍບຸກຄົນ ແລະ ພັດທະນາຄວາມສາມາດໃນການ ວາງລະບຽບວິໄນໃຫ້ແກ່ຕົນເອງ ແລະ ປູກຈິດສຳນຶກໃຫ້ແກ່ຕົນເອງຂອງນັກຮຽນ.

ກົງກັນຂ້າມກັບການສອນແບບເອົານັກຮຽນເປັນໃຈກາງ, ການສອນແບບເອົາຄູເປັນໃຈກາງແມ່ນ ຕ້ອງການ ການມີທັກສະ, ການກະກຽມ ແລະ ຄວາມພະຍາຍາມບໍ່ຫຼາຍໃນການຄຸ້ມຄອງຫ້ອງ. ວິທີດັ່ງ ກ່າວນີ້ແມ່ນອີງໃສ່ແຕ່ອຳນາດຂອງຄູໃນການຄຸ້ມຄອງຫ້ອງ, ການສອນ ແລະ ການລົງໂທດດ້ວຍການຕີ ແລະ ການເຮັດໃຫ້ນັກຮຽນຢ້ານກົວ ເຊິ່ງເປັນເຄື່ອງມື ໃນການຄວບຄູມ ແລະ ຊຸກຍູ້ໃຫ້ນັກຮຽນຕັ້ງໃຈຮຽນ. ວິທີການສິດສອນທີ່ເອົານັກຮຽນເປັນໃຈກາງທີ່ຄູມີການຄຸ້ມຄອງຫ້ອງຮຽນຮ່ວມກັນກັບນັກຮຽນ ເຫັນວ່າ ເປັນວິທີທີ່ດີທີ່ສຸດໃນການສົ່ງເສີມການຮຽນຮ່ວມຂອງນັກຮຽນທຸກຄົນ. ວິທີການເຫຼົ່ານີ້ນຳໄປສູ່ການຄຸ້ມ ຄອງຫ້ອງທີ່ມີປະສິດທິພາບ ເພາະວ່າມັນໄດ້ສະໜັບສະໜູນໃຫ້ມີຄວາມເຂົ້າໃຈດີກວ່າ ແລະ ມີເປົ້າໝາຍ ຮ່ວມກັນລະຫວ່າງຄູແລະນັກຮຽນ. ການນຳໃຊ້ລະບຽບວິໄນທີ່ເປັນທາງບວກ ແລະ ວິທີການເພີ່ມ ເຕີມອື່ນໆ ໃນການຄຸ້ມຄອງຫ້ອງຮຽນ ແມ່ນເປັນການຊຸກຍູ້ການຮຽນຮ່ວມເວົ້າລວມ ແລະ ເວົ້າສະເພາະ ແມ່ນການສອນແບບເອົານັກຮຽນເປັນໃຈກາງ, ແຕ່ວິທີການເຫຼົ່ານີ້ບໍ່ແມ່ນຈະປະຕິບັດໄດ້ທັນທີ ແລະ ງ່າຍດາຍ. ແນ່ນອນວ່າ, ວິທີການດັ່ງກ່າວແມ່ນໃຊ້ເວລາ ແລະ ຕ້ອງການຄວາມເອົາໃຈໃສ່ໂດຍສະເພາະ ແມ່ນການສອນໝູ່ຄູ ແລະ ພະນັກງານໃນໂຮງຮຽນດ້ວຍກັນ, ພໍ່ແມ່ນັກຮຽນ ແລະ ຊຸມຊົນຂອງໂຮງຮຽນ ແລະ ນັກຮຽນ ເຊິ່ງພວກເຂົາອາດຈະບໍ່ຄຸ້ນເຄີຍກັບວິທີການສອນແບບເອົານັກຮຽນເປັນໃຈກາງ.

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 5

> *"ວິທີການສິດສອນການສຶກສາຮຽນຮ່ວມຕ້ອງການການຝຶກອົບຮົມວິທີການສອນການສຶກສາຮຽນຮ່ວມສະເພາະເຊັ່ນ: ການຊ່ວຍເຫຼືອນັກຮຽນພິການ, ການສົ່ງເສີມຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ, ການສອນຫ້ອງຄວບ ແລະ ການສອນທີ່ມີການໃຊ້ຫຼາຍພາສາ".*

ວິທີການສິດສອນການສຶກສາຮຽນຮ່ວມ ແມ່ນຕ້ອງການໃຫ້ຄູມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບນັກຮຽນ ແລະຄວາມຕ້ອງການຂອງນັກຮຽນໃນລະດັບສູງພໍສົມຄວນລວມທັງການມີທັກສະແລະຄວາມໝັ້ນໃຈ ເພື່ອຊ່ວຍເຫຼືອນັກຮຽນໃນຫ້ອງໝົດທຸກຄົນ.

ບັນຫາສະເພາະມີຄື:

- ສິດສະເໝີພາບຍິງ-ຊາຍ: ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຕ້ອງການໃຫ້ຄູມີຄວາມລະອຽດອ່ອນຕໍ່ຄວາມບໍ່ສົມດູນກັນລະຫວ່າງຍິງ-ຊາຍ ແລະ ມີຄວາມຕັ້ງໃຈເພື່ອແກ້ໄຂ ບັນຫາດັ່ງກ່າວນີ້;
- ພາສາ: ນັກຮຽນທີ່ມີພາສາແມ່ທີ່ແຕກຕ່າງກັນຫຼາຍກວ່າພາສາທາງການ ຕ້ອງການໃຫ້ຄູມີທັກສະສະເພາະໃນການສອນ ໂດຍນຳໃຊ້ພາສາແມ່/ຫຼາຍພາສາ (ພາສາເວົ້າ), ການສອນໂດຍນຳໃຊ້ພາສາແມ່ຂອງນັກຮຽນ ແລະ ໃຊ້ພາສາອື່ນ ເປັນຂົວຕໍ່ໃນການສົ່ງເສີມໃຫ້ນັກຮຽນຮຽນພາສາຂອງຊາດ;
- ອາຍຸ ແລະ ລະດັບປະປົນກັນ: ຄູທີ່ຢູ່ໃນສະພາວະຄວາມເປັນຈິງທີ່ນັກຮຽນໃນກຸ່ມອາຍຸ ແລະ ລະດັບທີ່ແຕກຕ່າງກັນ ແລະ ຮຽນນຳກັນຢູ່ໃນຫ້ອງດຽວກັນແມ່ນຕ້ອງມີທັກສະການສອນຫ້ອງຄວບ;
- ນັກຮຽນພິການ: ນັກຮຽນພິການ ມີຄວາມຕ້ອງການຄູຜູ້ທີ່ມີຄົບທັກສະໃນການຊອກໃຫ້ເຫັນ, ການສົ່ງຄວາມຮູ້, ການຊຸກຍູ້ສົ່ງເສີມ, ຄວາມຕັ້ງໃຈພິເສດ, ບົດຮຽນ ແລະ ອື່ນໆ.

### ກໍລະນີສຶກສາຈາກ ສ.ປ.ປ ລາວ

*ຫົວຂໍ້: ການສອນເດັກທີ່ຍັງບໍ່ຮູ້ພາສາກາງ (ລາວລຸ່ມ) ຢູ່ຊັ້ນປະຖົມປີທີ 1*

ໂຮງຮຽນປະຖົມໂພນໄຊ ແມ່ນໂຮງຮຽນປະຖົມສົມບູນແຫ່ງໜຶ່ງ ທີ່ຕັ້ງຢູ່ຊານເມືອງໄຊທານີ ແລະ ຂຶ້ນກັບນະຄອນຫຼວງວຽງຈັນ. ໂຮງຮຽນແຫ່ງດັ່ງກາວ ມີນັກຮຽນທັງໝົດ 462 ຄົນ, ຍິງ 216 ຄົນ, ໃນນີ້ 95 % ເປັນນັກຮຽນຊົນເຜົ່າມົ້ງ ເຊິ່ງເຂົາເຈົ້າບໍ່ຮູ້ພາສາກາງ (ລາວລຸ່ມ) ເລີຍ ເມື່ອເຂົ້າຮຽນຢູ່ຊັ້ນປະຖົມປີທີ 1. ເນື່ອງຈາກເດັກດັ່ງກ່າວບໍ່ໄດ້ຜ່ານການຮຽນຢູ່ຊັ້ນອະນຸບານມາກ່ອນ, ດັ່ງນັ້ນ ຈຶ່ງເຮັດໃຫ້ເຂົາເຈົ້າພໍຟັງພາສາລາວອອກເປັນບາງສັບ, ແຕ່ເວົ້າບໍ່ໄດ້ (ປະມານ 20%) ແລະ ອີກສ່ວນຫຼາຍແມ່ນຟັງກໍບໍ່ໄດ້ ແລະ ເວົ້າກໍບໍ່ເປັນຈັກໜ້ອຍເລີຍ(ປະມານ 80%) ເຊິ່ງໄດ້ສ້າງຄວາມຫຍຸ້ງຍາກທີ່ສຸດໃຫ້ແກ່ຄູສອນຢູ່ຊັ້ນ ປ 1 ຈຳນວນ 05 ຄົນ, ຍິງ 05 ຄົນ ໃນ 5 ຫ້ອງຮຽນໂດຍມີນັກຮຽນ ປ 1 ທັງໝົດ 104, ຍິງ 46 ຄົນ.

ອາຈານ ບຸນມາ ປະຈຸບັນຫາກໍໄດ້ຍ້າຍມາເປັນຄູສອນຢູ່ຊັ້ນ ປ 3 ໃນໂຮງຮຽນແຫ່ງດັ່ງກ່າວ ແລະ ໄດ້ເຄີຍສອນຫ້ອງ ປ 1 ທີ່ນັກຮຽນບໍ່ໄດ້ພາສາກາງມາ 20 ປີແລ້ວ ໄດ້ກ່າວໃຫ້ຟັງວ່າ: "ຄູສອນຊັ້ນ ປ 1 ໃນຫ້ອງຮຽນທີ່ນັກຮຽນບໍ່ຮູ້ພາສາລາວລຸ່ມນັ້ນ ມີຄວາມຫຍຸ້ງຍາກຫຼາຍ ເພາະຄູກໍບໍ່ຮູ້ພາສານັກຮຽນ ແລະ ນັກຮຽນກໍບໍ່ຮູ້ວ່າຄູເວົ້າຫຍັງ,ຈະສື່ສານກັນກໍຍາກ". ລາວໄດ້ຊອກຫາວິທີແກ້ໄຂດັ່ງກາວ ໂດຍການຊອກຮຽນຮູ້ພາສາຊົນເຜົ່າມົ້ງນຳນັກຮຽນຢູ່ໃນຫ້ອງຂອງ

ຕົນເທື່ອລະເລັກເທື່ອລະໜ້ອຍ ເພື່ອໃຫ້ສາມາດຮູ້ບາງຄຳສັບຂອງຊົນເຜົ່າມາໃຊ້ປະກອບການອະທິບາຍບົດຮຽນ ເພື່ອໃຫ້ນັກຮຽນເຂົ້າໃຈຢ່າງຈະແຈ້ງ ແລະ ງ່າຍຂຶ້ນ. ພ້ອມກັນນັ້ນ ກໍໄດ້ສ້າງອຸປະກອນການສອນ ເພື່ອໃຫ້ນັກຮຽນໄດ້ເບິ່ງ ແລະຮຽນເວົ້າໄປນຳ, ພ້ອມທັງໄດ້ຊຸກຍູ້ໃຫ້ນັກຮຽນຊົນເຜົ່າພາຍໃນຫ້ອງຜູ້ທີ່ເວົ້າພາສາລາວລຸ່ມ ແລະ ພາສາມົ້ງໄດ້ໄຄກວ່າໝູ່ຊ່ວຍອະທິບາຍ ຫຼື ແນະນຳສິ່ງທີ່ເວົ້າໃຫ້ແກ່ເພື່ອນຮ່ວມຫ້ອງໄດ້ເຂົ້າໃຈອີກຕື່ມ.

ໃນປະຈຸບັນ ອາຈານ ບຸນມາ ແມ່ນສາມາດເວົ້າພາສາມົ້ງໄດ້ຢ່າງຫຼ່ຽນໄຫຼ ແລະ ໄດ້ຖ່າຍທອດປະສົບການນີ້ໃຫ້ແກ່ຄູ ປ 1 ທັງ 05 ຄົນ ເພື່ອໃຫ້ສາມາດສອນເດັກປ 1 ໄດ້. ໃນປະຈຸບັນ ຄູທີ່ສອນຊັ້ນ ປ 1 ກໍໄດ້ຮຽນພາສາເຜົ່າມົ້ງນຳນັກຮຽນ ແລະ ໃຊ້ສັບພາສາເຜົ່າມົ້ງ ເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈບົດຮຽນດີຂຶ້ນ. ອາຈານ ບຸນມາ ຍັງໄດ້ໃຫ້ຮູ້ອີກວ່າພໍ່ແມ່ຜູ້ປົກຄອງຂອງເດັກຊົນເຜົ່າຢາກໃຫ້ລູກຂອງຕົນຮຽນນຳຄູລາວລຸ່ມຢູ່ຊັ້ນ ປ 1. ປະຈຸບັນ ຄູທີ່ເປັນຄົນຊົນເຜົ່າມີຢູ່ 04 ຄົນ, ຍິງ 0 ຄົນ, ໃນນັ້ນໄປສອນຢູ່ຊັ້ນ ປ 5, ມີ 3 ຄົນ ແລະ ສອນພາສາອັງກິດມີ 01 ຄົນ. ເຖິງຢ່າງໃດກໍຕາມ ອາຈານ ບຸນມາ ໄດ້ໃຫ້ຂໍ້ແນະນຳຕື່ມວ່າ ເຖິງວ່າຄູລາວລຸ່ມຈະສາມາດຮຽນຮູ້ພາສາຊົນເຜົ່າໄດ້ໄວຂຶ້ນກໍຕາມ ແຕ່ຄູກໍບໍ່ຄວນໃຊ້ພາສາຊົນເຜົ່າ ເພື່ອອະທິບາຍສັບ ຫຼື ອະທິບາຍບົດຮຽນຫຼາຍເກີນໄປ ເພາະຈະສ້າງນິໄສທີ່ບໍ່ດີໃຫ້ແກ່ນັກຮຽນໃນການລໍຖ້າໃຫ້ຄູເວົ້າພາສາຊົນເຜົ່າອອກມາຈຶ່ງປະຕິບັດຕາມ.

ໃນບໍລິເວນໂຮງຮຽນປະຖົມແຫ່ງດັ່ງກ່າວນີ້ກໍຍັງມີໂຮງຮຽນອະນຸບານ 1 ແຫ່ງທີ່ມີນັກຮຽນອະນຸບານ 1 ຮອດອະນຸບານ 3 ເຊິ່ງມີນັກຮຽນອະນຸບານທັງໝົດ 113 ຄົນ, ຍິງ 51 ຄົນ, ໃນນີ້ 85 % ແມ່ນນັກຮຽນ ລາວລຸ່ມ ແລະ ມີຄູ 6 ຄົນ ເຊິ່ງແມ່ນຄົນລາວລຸ່ມ. ຄູອະນຸບານແຫ່ງດັ່ງກ່າວໄດ້ໃຫ້ຮູ້ວ່າບ້ານໂພນໄຊມີ 600 ຄອບຄົວ ແລະ ມີ 400 ຄອບຄົວເປັນຄອບຄົວຊົນເຜົ່າ ແຕ່ມີເດັກຊົນເຜົ່າມາຮຽນອະນຸບານໜ້ອຍທີ່ສຸດ ເພາະສ່ວນໃຫຍ່ແມ່ນຄອບຄົວທຸກຍາກ ແລະ ບໍ່ຢາກໃຫ້ລູກມາເຂົ້າຮຽນອະນຸບານ, ລໍຖ້າອາຍຸຮອດ 6 ປີ ຈຶ່ງສົ່ງເຂົ້າໂຮງຮຽນປະຖົມບາດດຽວ ຍ້ອນວ່າໃນເວລານີ້ເດັກສາມາດໄປ-ມາກຸ້ມຕົນເອງໄດ້ ແລະ ພໍ່ແມ່ກໍບໍ່ໄດ້ເປັນຫ່ວງ ຫຼື ຫຍຸ້ງຍາກນຳ. ຄູອະນຸບານສ່ວນໃຫຍ່ຍັງບໍ່ຮູ້ພາສາຊົນເຜົ່າມົ້ງ ແລະ ຈະສື່ສານກັບເດັກກໍຍາກ. ນາງ ສຸດສະດາ ທີ່ເປັນຄູອະນຸບານໄດ້ເວົ້າວ່າ: "ຖ້າມີຄູອະນຸບານທີ່ເປັນຄົນຊົນເຜົ່າມົ້ງມາຊ່ວຍສອນ ກໍອາດຈະດຶງດູດໃຫ້ຊົນເຜົ່າມົ້ງໄດ້ສົ່ງລູກຫຼານຂອງຕົນມາຮຽນອະນຸບານໄດ້ຫຼາຍຂຶ້ນ ແລະ ຈະເປັນການຊ່ວຍຫຼຸດຜ່ອນຄວາມຫຍຸ້ງຍາກຂອງເດັກທາງດ້ານພາສາ ເມື່ອເຂົາເຈົ້າໄດ້ເຂົ້າຮຽນຢູ່ຊັ້ນປະຖົມ".

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 6

*"ນັກຮຽນຄູຕ້ອງການການເສີມກຳລັງແຮງ, ການຝຶກອົບຮົມ, ການສະໜັບສະໜູນໃນການດັດປັບການພັດທະນາຫຼັກສູດ ແລະ ອຸປະກອນຕ່າງໆ ເພື່ອໃຫ້ແທດເໝາະກັບສະພາວະຄວາມເປັນຈິງຂອງຫ້ອງຮຽນ ແລະ ພັດທະນາຊຸມຊົນໃນທ້ອງຖິ່ນຂອງພວກເຂົາເຈົ້າ".*

ຫຼັກສູດສ້າງຄູຄວນສ້າງສະມັດຕະພາບໃນການສອນການຮຽນຮ່ວມໃຫ້ແກ່ຜູ້ທີ່ຈະເປັນຄູໃນອະນາຄົດ. ເພາະສະນັ້ນ, ຈຸດເນັ້ນໜັກທີ່ສຳຄັນຂອງວິທີການສິດສອນການສຶກສາຮຽນຮ່ວມ ຄວນເນັ້ນໜັກໃສ່ການສ້າງຄວາມສາມາດໃຫ້ແກ່ນັກຮຽນຄູ ໃນການດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນ. ນັກຮຽນຄູ ຜູ້ທີ່ກຳລັງຮຽນຢູ່ສະຖາບັນສ້າງຄູ ແລະ ໃນໄລຍະລົງຝຶກຫັດ, ຜູ້ທີ່ໄດ້ຮັບການຊຸກຍູ້ ແລະ ສົ່ງເສີມໃຫ້ດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນນັ້ນຈະສາມາດ ເຮັດວຽກກ່ຽວກັບການດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນດີກວ່າໝູ່ເມື່ອເຂົາເຈົ້າໄດ້ກາຍເປັນຄູໂດຍມີການຮຽນ-ການສອນ ແລະ ການປະເມີນຜົນທີ່ຫຼາກຫຼາຍ ແລະ ຍືດຍຸ່ນ.

ເມື່ອຄູຫາກມີທັກສະ ແລະ ຄວາມໝັ້ນໃຈໃນການດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນແລ້ວ ຄູກໍຈະສາມາດ ດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນທີ່ພວກເຂົາມີ ແລະ ສ້າງອຸປະກອນການສອນດ້ວຍຕົນເອງທີ່ພົວພັນກັບທ້ອງຖິ່ນ, ເໝາະສົມກັບຄວາມຕ້ອງການ ແລະ ທ່າແຮງສະເພາະຂອງນັກຮຽນ. ອີກດ້ານໜຶ່ງທັກສະ ແລະ ຄວາມໝັ້ນໃຈດັ່ງກ່າວນີ້ແມ່ນ ເພື່ອຊ່ວຍໃຫ້ນັກສຶກສາຄູສາມາດນໍາໃຊ້ຫຼັກສູດການສິດສອນ ແລະ ອຸປະກອນການຮຽນໃຫ້ໄດ້ດີທີ່ສຸດໃນເມື່ອພວກເຂົາເຈົ້າໄດ້ກາຍເປັນຄູສອນ ແລະ ສາມາດດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນດັ່ງກ່າວໃຫ້ແທດເໝາະກັບຄວາມຕ້ອງສະເພາະຂອງນັກຮຽນ (ເຊັ່ນ: ໂດຍການສ້າງອຸປະກອນການຮຽນ-ການສອນທີ່ເດັກພິການສາມາດນໍາໃຊ້ໄດ້). ແຕ່ທັກສະ ແລະ ຄວາມໝັ້ນໃຈດັ່ງກ່າວເປັນການເສີມກໍາລັງແຮງໃຫ້ແກ່ນັກຮຽນຄູກໍຄືການກ້າວໄປສູ່ການນໍາໃຊ້ຊັບພະຍາກອນທີ່ມີໃນທ້ອງຖິ່ນ(ເຊັ່ນ: ປະເພນີໃນການເລົ່ານິທານ, ຄວາມຮູ້ພື້ນເມືອງກ່ຽວກັບທໍາມະຊາດຂອງໂລກ, ການສະເຫຼີມສະຫຼອງ, ງານບຸນປະເພນີຂອງທ້ອງຖິ່ນ ແລະ ອື່ນໆ) ເພື່ອເຮັດໃຫ້ການຮຽນຮູ້ສອດຄ່ອງກັບສະພາບເງື່ອນໄຂ ແລະ ມີຄວາມຈິບງາມເທົ່າທີ່ເປັນໄປໄດ້. ການສ້າງຄວາມສາມາດດັ່ງກ່າວນັ້ນແມ່ນສອດຄ່ອງ ແລະ ຈໍາເປັນສໍາລັບຄູຜູ້ທີ່ມີປະສົບການ ແລະ ການສອນຕົວຈິງໃນໂຮງຮຽນ ຍ້ອນວ່າການສ້າງຄວາມສາມາດທີ່ກ່າວມານີ້ ແມ່ນສໍາລັບນັກຮຽນຄູ ແລະ ບັນດາຄູໃໝ່ທີ່ໄດ້ມາດຕະຖານ. ໃນທີ່ສຸດຂະບວນການເຫຼົ່ານີ້ ສາມາດເສີມຂະຫຍາຍໂດຍຜ່ານການສ້າງເຄືອຂ່າຍຄູສອນ ແລະ ຊຸມຊົນໃນການປະຕິບັດຕົວຈິງເພື່ອແລກປ່ຽນຄວາມຮູ້, ຄໍາຄິດເຫັນ ເພື່ອສ້າງ ແລະ ເສີມຂະຫຍາຍຫຼັກສູດໃນທິດທາງທີ່ມີການຮ່ວມມືກັນ. ເຄືອຂ່າຍດັ່ງກ່າວນັ້ນສາມາດສ້າງ ແລະ ຖະນຸບໍາລຸງລະຫວ່າງບັນດາໂຮງຮຽນ ແລະ ບັນດາສະຖາບັນສ້າງຄູກໍຄືລະຫວ່າງສະຖາບັນສ້າງຄູ ແລະ ໂຮງຮຽນຕ່າງໆນໍາກັນ.

ການສ້າງຄູໃຫ້ກາຍເປັນຜູ້ພັດທະນາຫຼັກສູດ, ອຸປະກອນ ແລະ ເປັນຜູ້ຊໍານານໃນການດັດປັບເນື້ອໃນຫຼັກສູດໃຫ້ເຂົ້າກັບທ້ອງຖິ່ນນັ້ນ ຕ້ອງໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ບົດຮຽນຢ່າງຈິງຈັງຈາກສະຖາບັນສ້າງຄູກໍຄືກະຊວງສຶກສາທິການ ແລະ ກິລາ. ຖ້າຄູຮູ້ສຶກວ່າພວກເຂົາຕ້ອງໄປຕາມຫຼັກສູດ ແລະ ຊັບພະຍາກອນຢ່າງຂາດຕົວ (ເຊັ່ນ: ປື້ມແບບຮຽນ ແລະ ຄູ່ມືຄູ) ພວກເຂົາເຈົ້າຈະບໍ່ມີຄວາມຍືດຍຸ່ນ ເພື່ອດັດປັບໃຫ້ເຂົ້າກັບສະພາວະຄວາມເປັນຈິງຂອງທ້ອງຖິ່ນ ແລະ ຄວາມຕ້ອງການຂອງນັກຮຽນ.

ເຊັ່ນດຽວກັນນັ້ນ ຄູຜູ້ທີ່ສອນຢູ່ສະຖາບັນສ້າງຄູ ຄວນໄດ້ຮັບການຊຸກຍູ້ສົ່ງເສີມ ເພື່ອພັດທະນາ ແລະ ດັດປັບເນື້ອໃນຫຼັກສູດ ແລະ ອຸປະກອນຢູ່ໃນສະຖາບັນສ້າງຄູ ເພື່ອໃຫ້ແທດເໝາະກັບຄວາມຕ້ອງການ ແລະ ທ່າແຮງຂອງນັກສຶກສາຄູກໍຄືສະພາບຄວາມເປັນຈິງຂອງທ້ອງຖິ່ນຂອງນັກຮຽນຄູ. ການມີທັກສະ ແລະ ຄວາມໝັ້ນໃຈໃນການສ້າງອຸປະກອນ ແລະ ຫຼັກສູດເປັນສິ່ງສໍາຄັນທີ່ສຸດຕໍ່ການພັດທະນາອາຊີບຄູ ແລະ ຕໍ່ການສ້າງຄູກ່ອນໄປປະຈໍາການ ແລະ ພາຍຫຼັງໄດ້ປະຈໍາການແລ້ວ.

**ກໍລະນີສຶກສາຈາກ ສ.ປ.ປ ລາວ**

*ຫົວຂໍ້: ການຝຶກອົບຮົມການສຶກສາຮຽນຮ່ວມ ໃຫ້ແກ່ຜູ້ບໍລິຫານ ແລະ ຄູສອນໃນສະຖາບັນການສຶກສາ*


© DTE, MOES, Lao PDR

ຮູບ: ກອງປະຊຸມເປີກສາຫາລື ແລະ ຜ່ານແຜນປະຕິບັດງານການສຶກສາຄົນພິການ 2016-2020 ທົ່ວປະເທດ, ຄັ້ງວັນທີ 7-10/05/2014

ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມປີ 2010 ໄດ້ອ້າງເຖິງບັນຫາທີ່ຈະຕ້ອງເອົາໃຈໃສ່ແກ້ໄຂເຊັ່ນ: ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນໄດ້ຮັບການສຶກສາຢ່າງທົ່ວເຖິງໂດຍສະເພາະເດັກຍິງ, ແມ່ຍິງ, ຊົນເຜົ່າເຂດຫ່າງໄກສອກຫຼີກ, ຄົນພິການ ແລະ ກຸ່ມດ້ອຍໂອກາດອື່ນໆ. ຄວາມຫຼຸດໂຕນກັນລະຫວ່າງເພດຍິງ-ເພດຊາຍ, ລະຫວ່າງຊົນເຜົ່າ, ລະຫວ່າງເມືອງທຸກ ແລະ ເມືອງທີ່ບໍ່ທຸກ, ໃນຊັ້ນ ແລະ ສາຍການສຶກສາລະດັບຕ່າງໆກໍຍັງມີຫຼາຍ. ບັນຫາຕ່າງໆທີ່ກ່າວມານັ້ນເກີດມາຈາກຫຼາຍປັດໃຈເຊັ່ນ: ການຕັ້ງຖິ່ນຖານຂອງປະຊາຊົນຢູ່ກະແຈກກະຈາຍ ແລະ ຫ່າງໄກສອກຫຼີກ, ເສັ້ນທາງສັນຈອນທຸລະກັນດານ, ຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການສຶກສາຍັງບໍ່ສູງ, ຄວາມທຸກຈົນຂາດເຂີນ, ຄ່ານິຍົມ, ຮີດຄອງປະເພນີ, ທັດສະນະຄະຕິຂອງບາງເຜົ່າ ແລະ ສັງຄົມຕໍ່ເພດຍິງ ແລະ ຄົນພິການຍັງຖ່ວງດຶງການສຶກສາ ຂອງເຂົາເຈົ້າ, ລະບົບການສຶກສາເອງກໍຍັງບໍ່ທັນສາມາດສະໜອງການບໍລິການ ການສຶກສາທີ່ເຂົ້າເຖິງໄດ້ງ່າຍ ແລະ ເປັນທີ່ໜ້າຈັບໃຈສຳລັບຜູ້ຮຽນ, ຄຸນນະພາບການສຶກສາຍັງຕ່ຳ, ບໍ່ທັນຕອບສະໜອງຕາມຈຸດພິເສດ ແລະ ຄວາມຕ້ອງການຂອງຜູ້ຮຽນປະເພດຕ່າງໆຢ່າງຄົບຖ້ວນ, ຂາດເຂີນຊັບພະຍາກອນທີ່ຈຳເປັນ, ຄູຍັງຂາດປະສົບການໂດຍສະເພາະວຽກງານການສຶກສາຮຽນຮ່ວມ. ສະນັ້ນ, ເພື່ອເຮັດໃຫ້ບຸກຄະລາກອນການສຶກສາ, ຜູ້ບໍລິຫານ ແລະ ຄູສອນໃນສະຖາບັນການສຶກສາມີຄວາມຮູ້ຄວາມສາມາດດ້ານວິຊາການ ກ່ຽວກັບວຽກງານການສຶກສາຮຽນຮ່ວມແນໃສ່ເຮັດໃຫ້ເກີດມີການປ່ຽນແປງທາງດ້ານ ແນວຄວາມຄິດ ໂດຍການເຊື່ອມຊຶມໄປເທື່ອລະນ້ອຍ ສັງຄົມສາມາດຍອມຮັບ ແລະ ກາຍເປັນວັດທະນະທຳອັນໜຶ່ງທີ່ຍືນຍົງ ແລະ ສັງຄົມສາມາດນຳໃຊ້ໄດ້. ກະຊວງສຶກສາທິການ ແລະ ກິລາ ໂດຍການຮ່ວມມືກັບອົງການຈັດຕັ້ງສາກົນຕ່າງໆໄດ້ຈັດການອົບຮົມການສຶກສາຮຽນຮ່ວມໃຫ້ຜູ້ບໍລິຫານການສຶກສາ ແລະ ຄູ-ອາຈານສອນໃນສະຖາບັນການສຶກສາຕ່າງໆເປັນຕົ້ນ: ໃນສົກຮຽນ 2012-2013 ຄູ-ອາຈານ ສອນໃນສະຖາບັນສ້າງຄູ 8 ແຫ່ງ ໃນ ສປປ ລາວ ຈຳນວນ 961 ຄົນ ໄດ້ຮັບການອົບຮົມການສຶກສາຮຽນຮ່ວມ ອັນໄດ້ເຮັດໃຫ້ມີການປ່ຽນແປງຢູ່ໃນການເຄື່ອນໄຫວສິດສອນ ແລະ ຮ່ຳຮຽນຢູ່ໃນສະຖາບັນສ້າງຄູ. ອາທິດໜຶ່ງ

ນັກຮຽນຄູແຕ່ລະ ຊັ້ນຮຽນຈະຕ້ອງໄດ້ຮຽນສອງຊົ່ວໂມງກ່ຽວກັບການສຶກສາຮຽນຮ່ວມ ແລະ ນັກຮຽນປີສຸດທ້າຍມີໂອກາດໄດ້ໄປທັດສະນະສຶກສາຕາມສະຖານສຶກສາເບິ່ງສູນສີມືແຮງງານຄົນພິການ ສີເກີດ ແລະ ໂຮງຮຽນໂສຕະສຶກສາ. ໃນສົກຮຽນ 2013-2014, ຜູ້ອໍານວຍການໂຮງຮຽນ, ຄູສອນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພໍ່ແມ່ເດັກພິການຈໍານວນໜຶ່ງໃນເມືອງໄຊບົວທອງ, ແຂວງຄໍາມ່ວນ ແລະ 6 ເມືອງຂອງແຂວງ ສະຫວັນນະເຂດ: ເມືອງເຊໂປນ, ເມືອງວິລະບູລີ, ເມືອງພິນ, ເມືອງພະລານໄຊ, ເມືອງອຸທຸມພອນ ແລະ ເມືອງອາດສະພອນ ໄດ້ຮັບການອົບຮົມການສຶກສາຮຽນຮ່ວມ. ການອົບຮົມແມ່ນແນໃສ່ການປ່ຽນແປງແນວຄວາມຄິດທີ່ສາມາດຍອມຮັບໄດ້ໃນຄວາມແຕກຕ່າງທີ່ຫຼາກຫຼາຍຂອງຜູ້ເຂົ້າຮຽນ ແລະ ປັບປຸງສະພາບແວດລ້ອມ





© DTE, MOES, Lao PDR

*ຮູບ: ກອງປະຊຸມຝຶກອົບຮົມການສຶກສາຮຽນຮ່ວມໃຫ້ຄູສອນວັນທີ 2-6 ມິຖຸນາ 2014 ທີ່ ເມືອງໄຊບົວທອງ, ແຂວງຄໍາມ່ວນ*

ທີ່ເປັນການຮຽນຮ່ວມ, ເປັນເພື່ອນມິດໃນການຮຽນຮູ້ ແລະ ການຊອກຫາເດັກແຕ່ລະປະເພດທີ່ດ້ອຍໂອກາດ ມາເຂົ້າຮຽນ. ນອກຈາກນີ້, ກະຊວງສຶກສາທິການ ແລະ ກິລາ ຍັງໄດ້ສ້າງຕັ້ງຄະນະເຄືອຂ່າຍ ການສຶກສາຮຽນຮ່ວມ ໃນກະຊວງສຶກສາທິການ ແລະ ກິລາ ເຊິ່ງປະກອບໄປດ້ວຍຕົວແທນບັນດາກົມ, ສະຖາບັນ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ. ຄະນະເຄືອຂ່າຍດັ່ງກ່າວໄດ້ຮັບການຝຶກອົບຮົມວຽກງານການສຶກສາຮຽນຮ່ວມ ອັນເຮັດໃຫ້ເກີດມີການ ປ່ຽນແປງໃນແຜນພັດທະນາການສຶກສາ 1 ປີ, 3 ປີ ແລະ 5 ປີ ຂອງແຕ່ລະພາກສ່ວນ ໂດຍການນໍາ ເອົາວຽກງານການສຶກສາຮຽນຮ່ວມເຂົ້າໃນແຜນງົບປະມານ.

## ຕົວຢ່າງຈາກປະເທດມາເລເຊຍ

### *ກອງປະຊຸມຝຶກອົບຮົມເພື່ອສົ່ງເສີມຄູໃນການສ້າງຊັບພະຍາກອນ 7 ແລະ ອຸປະກອນຮັບໃຊ້ໃນຫ້ອງຮຽນ*[7]

ຢູ່ພາກຕາເວັນອອກຂອງປະເທດມະເລເຊຍເມື່ອບໍ່ດົນມານີ້, ໂຄງການທີ່ປຶກສາໄດ້ຊ່ວຍສະໜັບສະໜູນຄູປະຖົມໃນການສ້າງຊັບພະຍາກອນຮັບໃຊ້ໃນຫ້ອງຮຽນຂອງພວກເຂົາເຈົ້າເອງ, ເປັນຂະບວນການທີ່ເພີ່ມເຕີມໃຫ້ແກ່ການປ່ຽນແປງຂອງຫຼັກສູດໃນເມື່ອບໍ່ດົນມານີ້. ວິທີການໜຶ່ງໃນການສົ່ງເສີມຂະບວນການດັ່ງກ່າວນີ້ ແມ່ນການຈັດກອງປະຊຸມຝຶກອົບຮົມທີ່ເປັນປົກກະຕິ ເຊິ່ງເຮັດໃຫ້ຄູໃນທ້ອງຖິ່ນສາມາດເຮັດວຽກຮ່ວມກັນໃນການສ້າງຊັບພະຍາກອນຮັບໃຊ້ໃນຫ້ອງຮຽນ. ຊັບພະຍາກອນທີ່ເປັນມິດກັບຜູ້ຮຽນປະກອບມີ: ຕຸກກະຕາ, ປື້ມປະດິດສ້າງ, ໜ້າກາກ, ຊຸດເຄື່ອງນຸ່ງ, ເກມ, ບົດເພງ ແລະ ດົນຕີ. ກອງປະຊຸມຝຶກອົບຮົມຍັງໄດ້ເນັ້ນໜັກໃສ່ການສ້າງຄວາມສາມາດ ແລະ ຄວາມໝັ້ນໃຈໃຫ້ແກ່ຄູໃນການຊອກຫາແລະສ້າງຊັບພະຍາກອນຂອງພວກເຂົາເອງທີ່ພົວພັນກັບຫຼັກສູດ. ວິທີການດັ່ງກ່າວເປັນວິທີທີ່ມີປະສິດທິຜົນໃນການສົ່ງເສີມແນວຄິດທີ່ສ້າງສັນຂອງຄູ, ການຮ່ວມມື ແລະ ການແລກປ່ຽນຄໍາເຫັນໃນການສ້າງແລະນໍາໃຊ້ອຸປະກອນການຮຽນ-ການສອນທີ່ເຂົ້າກັບສະພາບເງື່ອນໄຂຂອງທ້ອງຖິ່ນ. ເຖິງວ່າກອງປະຊຸມຝຶກອົບຮົມ ມີແຕ່ຄູປະຖົມເຂົ້າຮ່ວມເປັນສ່ວນໃຫຍ່ກໍຕາມ, ແຕ່ກໍມີພະນັກງານຂອງສຶກສາເມືອງທີ່ເຮັດໜ້າທີ່ຄຸ້ມຄອງໂຮງຮຽນ, ຕະຫຼອດຮອດພໍ່ແມ່ນັກຮຽນເຂົ້າຮ່ວມເພີ່ມຂຶ້ນນໍາເທື່ອລະໜ້ອຍ. ມັນມີຄວາມເປັນໄປໄດ້ສູງ ໃນການພັດທະນາການຈັດກອງປະຊຸມຝຶກອົບຮົມໃນຕໍ່ໜ້າ ເພື່ອໃຫ້ຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູໄດ້ເຂົ້າຮ່ວມນໍາ.

ໃນການມີຄໍາເຫັນຕໍ່ຂະບວນການ ແລະ ການມີສ່ວນຮ່ວມໃນກອງປະຊຸມຝຶກອົບຮົມດັ່ງກ່າວນັ້ນ, ພະນັກງານສຶກສາເມືອງຜູ້ໜຶ່ງຈາກ ຊາຣາວັກ, ປະເທດມາເລເຊຍ ໄດ້ອະທິບາຍວ່າ: “ກອງປະຊຸມຝຶກອົບຮົມແມ່ນດີຫຼາຍ ແລະ ບັນດາຄູສອນກໍມັກຄືແນວນີ້... ມີການແລກປ່ຽນບົດຮຽນນໍາກັນ. ຢູ່ໃນເມືອງຂອງພວກຂ້າພະເຈົ້າ ມີກອງປະຊຸມຝຶກອົບຮົມໜຶ່ງທີ່ມີໂຮງຮຽນ 15 ແຫ່ງໄດ້ພົບປະກັນ ແລະ ຮຽນຮູ້ນະວັດຕະກໍາໃໝ່ຢູ່ຫຼາຍຢ່າງໃນການສິດສອນ ແລະ ສ້າງຊັບພະຍາກອນ ແລະ ອຸປະກອນການສອນຕ່າງໆ. ຖ້າຫາກທ່ານເຂົ້າຮ່ວມກອງປະຊຸມຝຶກອົບຮົມກ່ຽວກັບວິທີສິດສອນຢູ່ໃສກໍຕາມສ່ວນຫຼາຍແມ່ນ ກ່ຽວກັບການແຕ່ງບົດສອນ ແລະ ກະໝົດເທົ່ານັ້ນ. ແຕ່ເມື່ອມາເຂົ້າຮ່ວມກອງປະຊຸມຝຶກອົບຮົມຄືແນວນີ້, ຄືຫວ່າງບໍ່ດົນມານີ້ ຢູ່ເມືອງຂອງຂ້າພະເຈົ້າເປັນການປະຕິບັດຕົວຈິງ ແລະ ເຫັນຕົວຈິງ ແລະ ກໍບໍ່ແມ່ນພຽງແຕ່ເວົ້າ, ຟັງ ແລະ ນັ່ງເທົ່ານັ້ນ, ແຕ່ຍັງເປັນການຮຽນຮູ້ວິທີປະຕິບັດຕົວຈິງ ແລະ ແລກປ່ຽນບົດຮຽນກັບໂຮງຮຽນອື່ນໆຕື່ມອີກ”.

[7] ປັບດັດມາຈາກ - Kaplan, I. 2012, ໂຄງການພັດທະນາ ຄູພາສາອັງກິດ ຂອງປະເທດ ມາເລເຊຍ. ບົດລາຍງານ:ການປະເມີນຜົນກາງພາກ. ກຸງກູລາລໍາເປີ, ບຣິດທິດ ຄອນຊິວ, ໜ້າ 29.

### ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 7

*"ນັກຮຽນຄູຕ້ອງການການຝຶກອົບຮົມ ເພື່ອໃຫ້ເຂົ້າໃຈ ແລະ ນຳໃຊ້ວິທີການປະເມີນຜົນການຮຽນຂອງນັກຮຽນຮຽນຮ່ວມລວມທັງຮູບແບບການປະເມີນ ເພື່ອປັບປຸງ, ປະເມີນແບບຕໍ່ເນື່ອງ ແລະ ທີ່ແທ້ຈິງ (ຮູບແບບວິທີການປະເມີນ ໃນເວລາຮຽນຈົບຫຼັກສູດກໍເຊັ່ນດຽວກັນ). ສະຖາບັນສ້າງຄູຕ້ອງນຳໃຊ້ວິທີການປະເມີນຜົນການຮຽນຂອງນັກຮຽນຄູໃນຮູບແບບທີ່ຄ້າຍຄືກັນນີ້ເຊັ່ນດຽວກັນ".*

ການສ້າງຄູຕ້ອງເນັ້ນໜັກໃສ່ການປະຕິບັດຮູບແບບການປະເມີນຜົນ ເພື່ອປັບປຸງ ແລະ ການປະເມີນຜົນທີ່ແທ້ຈິງກໍຄືການປະເມີນຜົນການຮຽນໃນເວລາຮຽນຈົບຫຼັກສູດ.

ການປະເມີນຜົນການຮຽນ ເພື່ອປັບປຸງແມ່ນອີງໃສ່ການຖອດຖອນບົດຮຽນທາງດ້ານຄຸນນະພາບໂດຍຄຽງຄູ່ກັບການປະເມີນທາງດ້ານປະລິມານ ເຊິ່ງເນັ້ນໜັກໃສ່ຮູບແບບຕ່າງໆຂອງຫຼັກຖານການຮຽນຮູ້ ແລະ ການສະໜັບສະໜູນນັບທັງຄູ ແລະ ນັກຮຽນ ເພື່ອຕອບສະໜອງ ແລະ ດັດປັບໃຫ້ແທດເໝາະກັບຄວາມຕ້ອງການ[8]ໃນການຮຽນຮູ້.

ຮູບແບບການປະເມີນ ເພື່ອປັບປຸງ ແລະ ທ້າຍສົກຮຽນມີຄວາມໝາຍຄວາມສຳຄັນຢູ່ໃນຂະບວນການປະເມີນຢ່າງຕໍ່ເນື່ອງ ແລະ ທີ່ແທ້ຈິງ[9] ທີ່ສຳຄັນທີ່ສຸດຂອງການສຶກສາຮຽນຮ່ວມ[10]. ໂດຍທົ່ວໄປແລ້ວຂະບວນການດັ່ງກ່າວນີ້ເອີ້ນວ່າການປະເມີນຜົນການຮຽນຮ່ວມ.

ການປະເມີນຜົນການຮຽນຮ່ວມ ຕ້ອງຄຳນຶງເຖິງຕົວຊີ້ບອກໃນການຮຽນທີ່ນອກເໜືອໄປກວ່າສິ່ງທີ່ປະເມີນໄດ້ ໂດຍຜ່ານການທົດສອບທີ່ໄດ້ຈາກຕົວເລກ ແລະ ການໃຫ້ຄະແນນການຮຽນຂອງນັກຮຽນເທົ່ານັ້ນ. ຕົວຊີ້ບອກທາງດ້ານການຮຽນທີ່ເຕັມສ່ວນປະກອບມີ: ການເນັ້ນໜັກໃສ່ການສົນທະນາແລກປ່ຽນຄຳຄິດເຫັນເຊິ່ງກັນ ແລະ ກັນຂອງນັກຮຽນ (ການສົນທະນາແລກປ່ຽນຄຳຄິດເຫັນລະຫວ່າງນັກຮຽນ ແລະ ຄູກໍເຊັ່ນດຽວກັນ); ດ້ານສັງຄົມ ແລະ ຄວາມຮູ້ສຶກຢູ່ດີ-ກິນດີຂອງນັກຮຽນ; ຄວາມມັກຮຽນສະເພາະຂອງນັກຮຽນ (ເຊັ່ນ: ກ່ຽວກັບສາຍຕາ, ການຟັງ, ການເໜັງຕີງ) ແລະ ຄວາມສາມາດຂອງນັກຮຽນໃນການຈື່, ຄວາມຕັ້ງໃຈ ແລະ ການຈັດລະບຽບວິໄນຕົນເອງ. ໃນການປະເມີນດັ່ງກ່າວນັ້ນຄູຕ້ອງ ເປັນຜູ້ຊຳນານ ແລະ ເປັນຜູ້ສັງເກດການທີ່ສະແດງອອກໃຫ້ເຫັນ. ໂດຍທົ່ວໄປແລ້ວການປະເມີນແມ່ນນຳໃຊ້ມາດຕະຖານແບບປຽບທຽບ ເພື່ອຊອກຫາການປະພຶດຂອງນັກຮຽນໂດຍປຽບທຽບກັບນັກຮຽນຜູ້ອື່ນໆ. ຢູ່ໃນການປະເມີນການ ຮຽນຮ່ວມແມ່ນນຳໃຊ້ມາດຕະຖານການປັບປຸງ ເພື່ອສະແດງໃຫ້ເຫັນວ່ານັກຮຽນໄດ້ມີຄວາມກ້າວໜ້າໄປແນວໃດໃນແຕ່ລະໄລຍະ.

---

[8] *ເບິ່ງ: William, D. 2006. ການປະເມີນຜົນຂໍ້ມູນ: ການສຸ່ມໃສ່ດ້ານສິດທິ. ການ ປະເມີນຜົນດ້ານການສຶກສາ. ເທເລີ ແລະ ຟຣານຊິດ 11 ( 3-4), ແຕໜ້າ. 283-89.11(3-4), ແລະ ໜ້າ.283-89*

[9] *ການປະເມີນຜົນຕົວຈິງ ທີ່ກ່ຽວຂ້ອງ ແລະ ເຊື່ອມໂຍງກັບການປະຕິບັດ. Darling-Hammond ແລະ Snyder ອະທິບາຍວ່າ, 'ພາຍໃຕ້ຫົວຂໍ້ ການປະເມີນຕົວຈິງ, ພວກເຮົາໄດ້ລວບລວມເອົາ ໂອກາດຕ່າງໆ ໃນການພັດທະນາ ແລະ ການກວດສອບຄູ ການຄິດ ແລະ ການປະຕິບັດຕ່າງໆ ໃນສະຖານະການຕ່າງໆທີ່ເປັນປະສົບການ ແລະ ການແກ້ໄຂບັນຫາ ແລະ ທີ່ໄດ້ລວບລວມເອົາ ຫຼື ຈຳລອງການສິດສອນຕົວຈິງ ເຊັ່ນການປະຕິບັດການສິດສອນລວມທັງແຜນການຕ່າງໆສຳລັບ ແລະ ໃນການສອງແສງເຖິງການສິດສອນ ແລະ ການຮໍາຮຽນ ລວມໄປເຖິງ ການເຮັດກິດຈະກຳຕ່າງໆ ກັບບັນດານັກຮຽນ'. ກວດເບິ່ງ : Darling-Hammond, L. ແລະ Snyder, J. 2000. ການປະເມີນຜົນຕົວຈິງໃນປຶ້ມຮຽນ, Elsevier, ການສິດສອນ ແລະ ການສຶກສາຂອງຄູ. (16) ໜ້າ 524.(16), http://www.jcu.edu/education/dshutkin/ed587/articles/Authentic_assessment.pdf (Accessed 4 April 2013.)*

[10] *ຄວາມສຳຄັນຂອງການປະເມີນຄວາມຕໍ່ເນືອງ ສາມາດເບິ່ງໄດ້ທີ່ ອຸຍແນັດສະໂກ 2003 ເປີດຟາຍ ກ່ຽວກັບການສຶກສາຮຽນຮ່ວມ: ອຸປະກອນທີ່ແທດເໝາະກັບຫົວໜ້າແຜນງານ ແລະ ຜູ້ບໍລິຫານຕ່າງໆ.ປາລີ, ອຸຍແນັດສະໂກ. ການປະເມີນຄວາມຕໍ່ເນືອງແມ່ນຕ້ອງໄດ້ປະຕິບັດຢູ່ຕະຫຼອດເວລາ ແລະ ບໍ່ແມ່ນເປັນພຽງໄລຍະເວລາທີ່ກຳນົດໄວ້ຕາຍໂຕເທົ່ານັ້ນ(ເຊັ່ນ ໃນຊ່ວງການເລີ່ມຕົ້ນ, ກາງພາກຂອງ ຫຼື ສິ້ນສຸດຂອງການຮຽນທ້າຍປີພ້ອມນຳ .*

ການປະເມີນການຮຽນຮ່ວມ ແມ່ນອີງໃສ່ຊຸດເຄື່ອງມືການປະເມີນທີ່ອາດປະກອບມີ: ການສັງເກດ, ຜົນງານຂອງນັກຮຽນ (ເຊິ່ງປະກອບມີການແຕ້ມຮູບ, ບົດຂຽນ, ເຈ້ຍບົດຝຶກຫັດ ແລະ ອື່ນໆ), ລາຍການສິ່ງທີ່ຕ້ອງກວດດ້ານ ທັກສະ, ຄວາມຮູ້ ແລະ ຄຸນສົມບັດ; ບົດເສັງ ແລະ ຄວາມຮູ້ຮອບຕົວ ແລະ ການປະເມີນຕົນເອງ ແລະ ບົດບັນທຶກ ກ່ຽວກັບຄວາມຮູ້ສຶກຂອງຕົນເອງ[11]. ສິ່ງສຳຄັນທີ່ຕ້ອງໄດ້ເອົາໃຈໃສ່ໃນການປະເມີນການຮຽນຮ່ວມແມ່ນ"ຄວາມຍືດຍຸ່ນ" ທາງດ້ານການນຳໃຊ້ເຄື່ອງມືການປະເມີນ ເພື່ອໃຫ້ນັກຮຽນແຕ່ລະຄົນໄດ້ສະແດງໃຫ້ເຫັນສະມັດຕະພາບ (ຄວາມສາມາດ) ຂອງພວກເຂົາ. ການປະເມີນການຮຽນຮ່ວມແມ່ນມີຄຸນຄ່າເທົ່າທຽມກັນກັບວິທີການປະເມີນຜົນການຮຽນຂອງນັກຮຽນຄູຢູ່ໃນສະຖາບັນສ້າງຄູ. ແນ່ນອນ, ຄວາມຕໍ່ເນື່ອງຂອງວິທີການປະເມີນຄວນສ້າງຂຶ້ນຈາກສະຖາບັນສ້າງຄູ ເພື່ອຈະໄດ້ພັດທະນາຕໍ່ໄປ ແລະ ນຳໃຊ້ຕໍ່ໄປກັບຄູໃໝ່ເຂົ້າໃນໂຮງຮຽນ ແລະ ຫ້ອງຮຽນຂອງເຂົາເຈົ້າ.

## ຕົວຢ່າງຈາກບາຮາມາສ໌

### *ການປະເມີນຕົນເອງຂອງນັກຮຽນມະຫາວິທະຍາໄລ*[12]

ສາສະດາຈານຄົນໜຶ່ງທີ່ມະຫາວິທະຍາໄລບາຮາມາສ໌ ໄດ້ພິຈາລະນາເຖິງຂະບວນການ ແລະ ຄຸນຄ່າຂອງການເຮັດວຽກກັບນັກຮຽນໃນການປະເມີນຕົນເອງຂອງເຂົາເຈົ້າ ແລະ ໄດ້ເວົ້າວ່າ:

"ເພື່ອຈັດຕັ້ງປະຕິບັດການປະເມີນຕົນເອງ, ນັກຮຽນຂອງຂ້າພະເຈົ້າຕ້ອງນັ່ງເປັນຄູ່ເພື່ອສົນທະນາກັນກ່ຽວກັບມາດຕະຖານ ແລະ/ຫຼື ເງື່ອນໄຂທີ່ພວກເຂົາຕ້ອງນຳໃຊ້ ເພື່ອຕັດສິນບັນດາກິດຈະກຳ ຫຼື ການປະພຶດ. ກິດຈະກຳດັ່ງກ່າວນີ້ ອາດປະຕິບັດໄດ້ໃນທຸກໆວິຊາຮຽນ, ເລີ່ມຈາກວິຊາສິລະປະການຟ້ອນໄປຈົນຮອດວິຊາເລກ. ຂ້າພະເຈົ້າເອົາຄູ່ມືກ່ຽວກັບສິ່ງທີ່ສາມາດຮັບໄດ້ແລະຮັບບໍ່ໄດ້ໃຫ້ແກ່ນັກຮຽນ. ຂ້າພະເຈົ້າອຳນວຍຄວາມສະດວກໃຫ້, ຊຸກຍູ້ ແລະ ແນະນຳນັກຮຽນ ແຕ່ຂ້າພະເຈົ້າບໍ່ຊີ້ນຳ ຫຼື ອອກຄຳສັ່ງ. ...ນັກຮຽນພົບປະກັບນັກທ່ອງທ່ຽວຢູ່ຕະຫຼອດ ແລະ ເພາະສະນັ້ນພວກເຂົາເປັນຂົວຕໍ່. ພວກເຂົາຖາມຂ້າພະເຈົ້າ ແລະ ໃຫ້ຄຳແນະນຳກ່ຽວກັບຂະບວນການປະເມີນ ແລະ ພວກຂ້າພະເຈົ້າກໍຈັດກຸ່ມສົນທະນາກັນ. ຜ່ານການການສົນທະນາກັນ, ຂ້າພະເຈົ້າປະກອບຂໍ້ມູນເພີ່ມເຕີມ ແລະ ພວກຂ້າພະເຈົ້າກໍສ້າງສິ່ງແວດລ້ອມຮຽນຮ່ວມທີ່ນັກຮຽນທຸກຄົນຮູ້ສຶກຮັກ, ເຄົາລົບ ແລະ ຍອມຮັບ. ຂ້າພະເຈົ້າສະແດງບົດບາດເປັນຕົວແບບ, ນຳໃຊ້ການເລີ່ມຕົ້ນຂອງຂ້າພະເຈົ້າ ເພື່ອສ້າງວິທີຮຽນແບບຫ້າວຫັນ. ວິທີດັ່ງກ່າວນີ້ ນັກຮຽນເລີ່ມພໍໃຈກັບການແລກປ່ຽນປະສົບການ ແລະ ການແກ້ໄຂບັນຫາເຊິ່ງເປັນຫົວໃຈຫຼັກຂອງການສຶກສາຮຽນຮ່ວມ.

ເມື່ອພວກເຂົາເຫັນດີກ່ຽວກັບມາດຕະຖານ/ມາດຕະການການປະເມີນແລ້ວ, ນັກຮຽນແຕ່ລະຄູ່ໄປຫາຄູ່ອື່ນ ແລະ ເຮັດຫຼາຍໆເທື່ອຊ້ຳແລ້ວຊ້ຳອີກຈົນກວ່າຈະມີການຕົກລົງເຫັນດີນຳກັນກ່ຽວກັບມາດຕະຖານ/ມາດຕະການດັ່ງກ່າວພາຍໃນຫ້ອງ. ແລ້ວຈິ່ງນຳໃຊ້ມາດຕະຖານ/ມາດຕະການເຫຼົ່ານີ້ ເພື່ອປະເມີນພຶດຕິກຳ. ກ່ອນຈະນຳໃຊ້ນັກຮຽນຕ້ອງຮ່ວມສົນທະນາກັນ, ລໍຖ້າຜຽນໃນການເວົ້າ, ຕັ້ງໃຈຟັງຜູ້ອື່ນໆ ຢ່າງຫ້າວຫັນ ແລະ ວິຈານເຊິ່ງກັນ ແລະ ກັນ ແລະ ຖອດຖອນບົດຮຽນນຳກັນ. ການສັງເກດໃນຫ້ອງຮຽນຢ່າງຕັ້ງໜ້າ ແລະ ວິທີການສັງເກດແບບບໍ່ມີການບັນທຶກ ແລະ ການມີສ່ວນຮ່ວມເປັນມາດຕະຖານໜຶ່ງ. ການປະເມີນຕົນເອງແບບນີ້ສາມາດເຮັດໄດ້ໃນເດີ່ນເຫຼັ້ນ, ຫ້ອງທົດລອງ, ສະຖານທີ່ສາທາລະນະ ແລະ ອື່ນໆ.

---

[11] UNESCO. 2004.ການຮວບຮວມເອົາຄວາມຫຼາກຫຼາຍ: ຊຸດເຄື່ອງມືໃນການສ້າງສິ່ງແວດລ້ອມຂອງການສຶກສາຮຽນຮ່ວມ, ສິ່ງແວດລ້ອມການຮຽນແບບເປັນມິດ - ປື້ມທີວທີ 5 – ການຄວບຄຸມຫ້ອງຮຽນຂອງການສຶກສາຮຽນຮວມແບບເປັນມິດກັບຜູ້ຮຽນ .ບາງກອກ, ອົງການອຸຍແນັດສະໂກ, ໜ້າທີ 41.

[12] ປັບດັດມາຈາກ: McDonald, B. 2006. 'ການປະເມີນຕົນເອງ, ເດີ ບາຫາມາ (Bahamas'). EENET Newsletter. (10).

ນັກຮຽນຂຽນຟອມຢູ່ທາງໜ້າຂອງວຽກທີ່ໄດ້ຮັບມອບໝາຍ ເຊິ່ງເປັນບ່ອນທີ່ພວກເຂົາຂີດໝາຍບ່ອນທີ່ຕົນເອງໄດ້ມີການປັບປຸງ. ຫຼັງຈາກທີ່ໄດ້ມອບໃຫ້ໃນແຕ່ລະວຽກພວກເຂົາເຈົ້າ ກໍຄົ້ນຄວ້ານຳກັນກ່ຽວກັບຄວາມຜິດຂອງພວກຕົນດ້ວຍຄວາມຄວາມສະໝັກໃຈ ແລະ ຄົ້ນຄວ້າຫາວິທີປ້ອງກັນບໍ່ໃຫ້ເກີດຂຶ້ນອີກ. ສິ່ງດັ່ງກ່າວນີ້ໄດ້ເປັນການປູພື້ນຖານໃຫ້ແກ່ການປັບປຸງມາດຕະຖານຕ່າງໆ.

ນັກຮຽນແຕ່ລະຄົນຮູ້ສຶກມີສ່ວນຮ່ວມໃນການຕັດສິນໃຈຜ່ານການມີສ່ວນຮ່ວມຢ່າງຫ້າວຫັນໃນຂະບວນການປະເມີນ. ພວກເຂົາຮູ້ວ່າຄວາມຄິດເຫັນຂອງພວກເຂົາໄດ້ຖືກນຳໄປພິຈາລະນາຢ່າງຈິງຈັງ. ການຕັດສິນບັນຫາຮ່ວມກັນ ໄດ້ສົ່ງເສີມຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຮ່ວມກັນ; ທັງສອງຢ່າງນີ້ມີຄວາມສຳຄັນຕໍ່ການຮຽນຮ່ວມ. ຄວາມຫຼາກຫຼາຍ ເຊິ່ງໄດ້ກາຍເປັນສິ່ງໜຶ່ງຂອງການທ່ອງທ່ຽວທີ່ຫຼີກລ້ຽງບໍ່ໄດ້ຢູ່ ບາຣາມາສ - ແມ່ນມີຊື່ສຽງແທນທີ່ຈະເປັນການຍອມຮັບ.

ນັກຮຽນພິການທາງດ້ານສາຍຕາ ແລະ ຫູ ຢູ່ໃນຫ້ອງຮຽນໄດ້ມີໂອກາດເຂົ້າຮ່ວມນຳໝູ່ ເຊິ່ງໝູ່ກໍໃຫ້ການສະໜັບສະໜູນພວກເຂົາ, ຕົວຢ່າງການບັນທຶກ (ອັດສຽງ) ຂໍ້ມູນ. ນັກຮຽນຜູ້ທີ່ເຂົ້າໃຈຊ້າກໍມີໂອກາດໄປນຳທັນຜູ້ອື່ນໆ. ສິ່ງແວດລ້ອມທີ່ອຳນວຍນີ້ມີຄວາມໝາຍວ່າ ບໍ່ມີນັກຮຽນຄົນໃດໄດ້ຖືກໃສ່ຮ້າຍປ້າຍສີວ່າ “ເປັນຄົນແຕກຕ່າງຈາກຜູ້ອື່ນ”. “ກົດລະບຽບພື້ນຖານ” ໃນການສື່ສານຂອງພວກຂ້າພະເຈົ້າໄດ້ຢຸດຕິນັກຮຽນຜູ້ທີ່ມັກປາກ, ມັກລົມກັນ ຈາກນັກຮຽນຜູ້ທີ່ມີຄວາມອິດກັ້ນມິດງຽບກວ່າໝູ່ ແລະ ຂ້າພະເຈົ້າກໍພ້ອມທີ່ຈະໃຫ້ ຄຳແນະນຳ ຫຼື ແຊກແຊງຖ້າມີຄວາມຈຳເປັນ.

ນັກຮຽນທີ່ມາຈາກພື້ນຖານຂ້ອນຂ້າງທຸກຍາກມີຄວາມຮູ້ສຶກສາ ອົບອຸ່ນເທົ່າກັນກັບຄົນອື່ນທີ່ຢູ່ໃນຫ້ອງຮຽນ, ແທນທີ່ຈະຮູ້ສຶກແບບຖືກລັງກຽດເໝືອນຢູ່ໃນຊຸມຊົນ. ການເຮັດວຽກຢ່າງໃກ້ຊິດກັບນັກຮຽນຜູ້ອື່ນໃນການຄົ້ນຄວ້າໜຶ່ງຕໍ່ໜຶ່ງ ກໍສາມາດຊ່ວຍນັກຮຽນຜູ້ທີ່ມີບັນຫາທາງດ້ານ ການປະພຶດໄດ້ເຊັ່ນກັນໃນການຮຽນຮູ້ປະສົບການ ແລະ ພຶດຕິກຳທີ່ສາມາດຍອມຮັບໄດ້ຫຼາຍຂຶ້ນກວ່າເກົ່າ. ການນຳໃຊ້ວິທີການແບບຮ່ວມມືເຫຼົ່ານີ້ ເຮັດໃຫ້ສະດວກສະບາຍ ແລະ ໄວກວ່າສຳລັບຂ້າພະເຈົ້າໃນການກຳນົດ ແລະ ແກ້ໄຂບັນຫາຄວາມເປັນພິການ, ຄວາມຮູ້ສຶກຖືກກົດດັນ ຫຼື ເງື່ອນໄຂທີ່ມີສ່ວນກ່ຽວຂ້ອງຢູ່ໃນຫ້ອງຮຽນ.

ການປະເມີນຕົນເອງໄດ້ສົ່ງເສີມການສ່ອງແສງຄືນ, ການພິຈາລະນາຕົວເອງ, ແນວຄິດທີ່ສ້າງສັນ ແລະ ແນວຄິດທີ່ແຕກຕ່າງກັນ. ນັກຮຽນຂອງຂ້າພະເຈົ້າຕ້ອງເຈລະຈາກັນ ເພື່ອຫາຈຸດທີ່ສາມາດຕົກລົງເຫັນດີຮ່ວມກັນໄດ້. ຂະບວນການໄດ້ຊ່ວຍນັກຮຽນ ຜູ້ທີ່ມີຄວາມສາມາດໜ້ອຍກວ່າໝູ່ໄດ້ມີໂອກາດປະກອບສ່ວນເຮັດກິດຈະກຳນຳໝູ່ຫຼາຍຂຶ້ນກວ່າຢູ່ໃນຫ້ອງຮຽນທຳມະດາຜ່ານມາ. ກຸ່ມທີ່ຢູ່ໃນຄວາມສ່ຽງໄດ້ຮັບການປອບໃຈຢູ່ໃນກຸ່ມທີ່ເນັ້ນການມີປະຕິສຳພັນ ແລະ ການຕົກລົງເຫັນດີຮ່ວມກັນ. ນັກຮຽນມັກຈະຖາມກ່ຽວກັບການແຍກກັນຮຽນ. ພວກເຂົາເຈົ້າໄດ້ທັບມ້າງຮູບແບບກົນຈັກຕາຍຕົວການຈຳແນກ ແລະ ໄດ້ສົ່ງເສີມລະບົບການສຶກສາຮຽນຮ່ວມເຊິ່ງໝົດທຸກຄົນໄດ້ຮັບຜົນປະໂຫຍດ”.

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 8

*“ນັກຮຽນຄູຕ້ອງໄດ້ຮັບການສະໜັບສະໜູນ ເພື່ອພິຈາລະນາເຖິງຄວາມຕ້ອງການຂອງນັກຮຽນແຕ່ລະຄົນໂດຍຜ່ານການສ້າງແຜນການຮຽນຮູ້ຂອງແຕ່ລະຄົນ, ແຕ່ໃນເວລາດຽວກັນນັ້ນກໍຕ້ອງຮູ້ລະບົບອຸປະສັກທີ່ມີຕໍ່ການຮຽນຮ່ວມ”.*

ສິ່ງທີ່ພົວພັນກັບການປະເມີນຜົນຜ່ານມາ ແມ່ນຄູສອນມີຄວາມຕ້ອງການພັດທະນາແຜນການຮຽນຮູ້ຂອງຕົນ, ໃນຂະນະດຽວກັນນັ້ນກໍຕ້ອງຮັບຮູ້ເຂົ້າໃຈການເຄື່ອນໄຫວຂອງກຸ່ມຢູ່ໃນແວດລ້ອມຂອງການຮຽນຮູ້ນັ້ນໆ ກໍຄືອຸປະສັກ ທີ່ມີຕໍ່ການຮຽນຮ່ວມ. ເພາະສະນັ້ນ ຄວາມຮັບຜິດຊອບຕໍ່ການສຶກສາຮຽນຮ່ວມບໍ່ແມ່ນຂຶ້ນກັບຜູ້ຮຽນ.

ແຜນການຮຽນຮູ້ຂອງແຕ່ລະຄົນ ຕ້ອງມີຄວາມດຸ່ນດ່ຽງກັບວິທີການ ເພື່ອໃຫ້ເຂົ້າໃຈເຖິງການເຄື່ອນໄຫວຂອງກຸ່ມນັກຮຽນພາຍໃນໂຮງຮຽນແລະຫ້ອງຮຽນ (ເຊັ່ນ: ນັກຮຽນມີການປະຕິສຳພັນກັນແນວໃດ) ເພື່ອສົ່ງເສີມການຮຽນຮ່ວມທີ່ດີທີ່ສຸດພາຍໃນຫ້ອງ ແລະ ພາຍໃນໂຮງຮຽນ. ນອກຈາກນັ້ນ, ສິ່ງສຳຄັນສຳລັບຄູແມ່ນການຮັກສາຄວາມເຫັນກ່ຽວກັບລະບົບອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມ (ລາຍລະອຽດໃຫ້ເບິ່ງຢູ່'ສິ່ງທ້າທາຍທີ 1') ໄປຄຽງຄູ່ກັບວິທີການທີ່ມີຕໍ່ນັກຮຽນ ເປັນລາຍບຸກຄົນ, ການເອົາໃຈໃສ່ແບບຄັບແຄບຕໍ່ນັກຮຽນເປັນລາຍບຸກຄົນ ເປັນການສ່ຽງຕໍ່ການກຳນົດພວກເຂົາເອງ ແທນທີ່ຈະແມ່ນລະບົບ ເຊິ່ງເປັນແຫຼ່ງທີ່ມາຂອງອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມ. ເປັນຄວາມເຂົ້າໃຈທີ່ສະຫຼັບຊັບຊ້ອນຂອງແຕ່ລະຄົນຢູ່ພາຍໃນລະບົບທີ່ເຫັນວ່າມີຄວາມເປັນໄປໄດ້ສູງ ໃນການບັນລຸເປົ້າໝາຍການສຶກສາຮຽນຮ່ວມ. ແຕ່ລະວິທີການສອນ ແມ່ນບໍ່ຂຶ້ນກັບການແບ່ງແຍກນັກຮຽນ, ແຕ່ມັນກ່ຽວຂ້ອງກັບສ່ວນບຸກຄົນໃນການແລກປ່ຽນປະສົບການໃນການຮຽນຮູ້ ແລະ ວິທີການທີ່ມີຄວາມຫຼາກຫຼາຍທີ່ໃຫ້ຄວາມເທົ່າທຽມກັນໃນການຮຽນຂອງກຸ່ມນັກຮຽນ ແລະ ນັກຮຽນແຕ່ລະຄົນ[13].

# ບັນຫາທ້າທາຍ 3

## ການປະຕິບັດຕົວຈິງ, ການສ່ອງແສງຄືນ ແລະ ການສະໜັບສະໜູນ

### ການວິເຄາະສະພາບການ

*ການຄຸ້ມຄອງດູແລ ແລະ ການຊ່ວຍເຫຼືອທີ່ບໍ່ເຕັມເມັດເຕັມໜ່ວຍ*

ຖ້າຫາກວ່າ ນັກຮຽນຄູບໍ່ໄດ້ຮັບການສະໜັບສະໜູນຈາກຄູໃນສະຖາບັນສ້າງຄູຢ່າງຕໍ່ເນື່ອງ ໂດຍໃຫ້ຄຳຄິດເຫັນທີ່ມີລັກສະນະສ້າງສັນ ຈະເຮັດໃຫ້ນັກຮຽນຄູບໍ່ເຂົ້າໃຈຢ່າງເລິກເຊິ່ງໃນການປະຕິບັດການຮຽນ-ການສອນໂດຍເອົານັກຮຽນເປັນໃຈກາງກ່ອນຈະເຂົ້າສູ່ອາຊີບຄູ.

ຖ້າວ່າ ນັກຮຽນຄູຜູ້ທີ່ໄດ້ຮັບຄຳຄິດຄຳເຫັນຈາກຄູສອນໃນດ້ານລົບ ຈະເຮັດໃຫ້ນັກຮຽນຄູເສຍຄວາມຕັ້ງໃຈ. ເມື່ອບໍ່ມີການຊຸກຍູ້ທີ່ເໝາະສົມ ແລະ ການໃຫ້ຄຳຄິດເຫັນທີ່ສ້າງສັນ ເພື່ອໃຫ້ເຂົາເຈົ້າມີການປ່ຽນແປງນັກຮຽນຄູ ກໍອາດຈະບໍ່ພັດທະນາຕົນເອງທາງດ້ານການສະທ້ອນຄືນແບບວິເຄາະວິຈານ ຫຼື ເຮັດໃຫ້ມີການປ່ຽນແປງໃນພຶດຕິກຳຂອງເຂົາເຈົ້າ.

---

[13] ບລານໂກ. ອາຣ. 2009. ຂອບເຂດວຽກງານ ດ້ານແນວຄວາມຄິດ ຂອງການສຶກສາຮຽນຮ່ວມ. ໃນອາຊີໂດ, ຊີ. ອາມາດຽວ, ເອັມ.ແລະ ໂອເພີດຕີ ອາຣ(ອີດີເອັດ). ການກຳນົດ ວາລະການສຶກສາຮຽນຮ່ວມ ເຊິ່ງມີປະມານ 48 ວາລະ ໃນກອງປະຊຸມສາກົນກ່ຽວກັບການສຶກສາ, ຈີນີວາ, ຢູເນັດສະໂກ ໄອບີອີ.

ນັກຮຽນຄູຜູ້ທີ່ໄດ້ຮັບຄຳປຶກສາ ແລະ ການຊ່ວຍເຫຼືອທີ່ບໍ່ເຕັມເມັດເຕັມໜ່ວຍອາດຈະບໍ່ມີທັກສະ ແລະ ຄວາມໝັ້ນໃຈໃນການປະເຊີນໜ້າກັບສິ່ງທ້າທາຍຂອງການສຶກສາຮຽນຮ່ວມຢູ່ໃນໂຮງຮຽນ ແລະ ຫ້ອງຮຽນຢ່າງມີປະສິດທິຜົນໃນເມື່ອເຂົາເຈົ້າກາຍເປັນຄູສອນ.

## *ນັກຮຽນຄູ ແລະ ຄູສອນຢູ່ສະຖາບັນສ້າງຄູຂາດການລົງຝຶກປະສົບການສອນຕົວຈິງ*

ການສ້າງຄູທີ່ເນັ້ນໜັກໃສ່ແຕ່ພາກທິດສະດີຫຼາຍເກີນໄປ ແລະ ການປະຕິບັດຕົວຈິງທີ່ບໍ່ພຽງພໍຈະເຮັດໃຫ້ເຂົາເຈົ້າ ປະເຊີນໜ້າກັບສິ່ງທ້າທາຍຕ່າງໆ ໃນເວລາສິດສອນຕົວຈິງ. ຍິ່ງໄປກວ່ານັ້ນ, ຫຼັກສູດການສ້າງຄູຈຳນວນໜຶ່ງພັດວາງແຜນໃສ່ການຝຶກປະສົບການໜ້ອຍທີ່ສຸດ. ການຂາດປະສົບການໃນການສອນຕົວຈິງທີ່ບໍ່ພຽງພໍຈ ະສົ່ງຜົນກະທົບໃຫ້ນັກຮຽນຄູບໍ່ສາມາດເຊື່ອມໂຍງພາກທິດສະດີກັບຕົວຈິງໄດ້ ໃນເມື່ອພວກເຂົາກາຍເປັນຄູສອນໃນຫ້ອງຮຽນ.

ສິ່ງທີ່ກ່າວມານີ້ ກໍເປັນບັນຫາເຊັ່ນດຽວກັນໃນ ເມື່ອຄູສອນຢູ່ສະຖາບັນສ້າງຄູຫາກຂາດປະສົບການສອນຕົວຈິງຢູ່ໂຮງຮຽນ.ຄູສອນຢູ່ສະຖາບັນສ້າງຄູຜູ້ທີ່ມີປະສົບການໜ້ອຍໃນການເຮັດວຽກກັບຄູສອນຢູ່ໂຮງຮຽນຈະຂາດຄວາມເຂົ້າໃຈຕໍ່ຄວາມໝາຍຄວາມສຳຄັນຂອງການສິດສອນເດັກ ແລະ ຊາວໜຸ່ມໃນຕົວຈິງ ແລະ ຈະຂາດຄວາມເຂົ້າໃຈໃນການຕອບຮັບຂອງໂຮງຮຽນໃນຊຸມຊົນ. ຄູສອນດັ່ງກ່າວ ກໍອາດຈະບໍ່ສາມາດເຂົ້າເຖິງສະພາບຄວາມເປັນຈິງ, ສິ່ງທ້າທາຍ ແລະ ການປະຕິບັດຕົວຈິງຂອງການຮຽນໃນປັດຈຸບັນ. ມີບາງກໍລະນີ, ຄູສອນຢູ່ສະຖາບັນສ້າງຄູບໍ່ເຄີຍມີປະສົບການໃນການສິດສອນຢູ່ໃນໂຮງຮຽນຫຼື ມີປະຫວັດຂາດປະສົບການໃນການສອນຕົວຈິງໃນເວລາທີ່ເຂົາຮຽນເປັນຄູ. ຖ້າຄູສອນຢູ່ສະຖາບັນສ້າງຄູບໍ່ສາມາດຖອດຖອນບົດຮຽນໃນການສອນຕົວຈິງ/ເຮັດວຽກຕົວຈິງກັບໂຮງຮຽນ, ຄູດັ່ງກ່າວນີ້ ອາດຈະສາມາດແກ້ໄຂພາກປະຕິບັດຕົວຈິງຂອງນັກຮຽນຄູໄດ້ໜ້ອຍທີ່ສຸດ. ນອກນັ້ນ, ຄູສອນຢູ່ສະຖາບັນສ້າງຄູຜູ້ທີ່ຂາດການຕິດພັນດ້ານການຮຽນ-ການສອນໃນໂຮງຮຽນ ອາດມີຄວາມຫຍຸ້ງຍາກໃນການຊ່ວຍເຫຼືອນັກຮຽນຄູເພື່ອໃຫ້ພາກທິດສະດີ ແລະ ພາກປະຕິບັດຕົວຈິງເຊື່ອມຈອດກັນ.

ຄຳຖາມທີ່ທ່ານສາມາດຖາມ ເພື່ອຊ່ວຍທ່ານໃນການວິເຄາະສະຖານະການຢູ່ໃນສະພາວະຄວາມເປັນຈິງຂອງທ່ານເອງກ່ອນປະຕິບັດການໂຄສະນາສົ່ງເສີມ

- ເວລາໃນການຝຶກຫັດສອນ ແລະ ການໃຫ້ຊ່ວຍເຫຼືອ (ສຳລັບນັກຮຽນຄູ) ໃນຫຼັກສູດສ້າງຄູແມ່ນມີພຽງພໍບໍ?
- ຄູສອນຢູ່ສະຖາບັນສ້າງຄູ ໄດ້ມີປະສົບການຜ່ານມາໃນການສອນຕົວຈິງໃນໂຮງຮຽນ ແລະ/ຫຼື ເຮັດວຽກກັບໂຮງຮຽນໃນຊຸມຊົນບໍ?
- ສະຖາບັນສ້າງຄູຂອງທ່ານໄດ້ສະເໜີໃຫ້ມີການຊ່ວຍເຫຼືອ, ໃຫ້ຄຳແນະນຳ ແລະ ການຖອດຖອນບົດຮຽນໃຫ້ ນັກຮຽນຄູຢ່າງຕໍ່ເນື່ອງໃນເວລາເຂົາຮຽນຢູ່ສະຖາບັນສ້າງຄູ ແລະ ລົງຝຶກຫັດສອນ-ໂດຍມີການວາງແຜນລະອຽດ ແລະ ມີງົບປະມານບໍ?
- ນັກຮຽນຄູໄດ້ຮັບການສິດສອນຈາກຄູໃນການນຳໃຊ້ການສະໜັບສະໜູນຢ່າງມີປະສິດທິຜົນບໍ? (ເຊັ່ນ: ໂດຍຜ່ານການເຮັດວຽກກັບຄູຜູ້ອື່ນໆ, ຜູ້ສອນຊ່ວຍ ແລະ ພໍ່ແມ່ນັກຮຽນ)
- ນັກຮຽນຄູມີຄວາມຕ້ອງການເວລາພຽງພໍໃນການລົງຝຶກຫັດສອນບໍ?

- ນັກຮຽນຄູຕ້ອງການ ແລະ ໄດ້ຮັບການສະໜັບສະໜູນສ່ອງແສງຄືນຈາກຕົວຈິງ ແລະ ຈາກການວິໄຈພາກປະຕິບັດບໍ?
- ມີການປະສານງານ ແລະ ການຮ່ວມມືທີ່ດີລະຫວ່າງສະຖາບັນສ້າງຄູ ແລະ ໂຮງຮຽນທີ່ນັກຮຽນຈະລົງຝຶກຫັດສອນ (ໂຮງຮຽນເຈົ້າພາບ) ໃນການສະໜັບສະໜູນນັກຮຽນຄູໃຫ້ໄດ້ຮຽນຮູ້ປະສົບການໃນການສອນການສຶກສາຮຽນຮ່ວມຢ່າງພຽງພໍບໍ?

# ເປົ້າໝາຍຂອງການໂຄສະນາສິ່ງເສີມ

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 9

*"ນັກຮຽນຄູຕ້ອງການໂອກາດລົງເອົາປະສົບການໃນການຝຶກຫັດສອນຕົວຈິງຢ່າງເປັນໄລຍະປົກກະຕິເຊິ່ງເປັນພາກສ່ວນໜຶ່ງຂອງຫຼັກສູດການສ້າງຄູຂອງພວກເຂົາ".*

ການລົງຝຶກຫັດສອນຕົວຈິງໃນສະພາວະຄວາມເປັນຈິງຂອງການສ້າງຄູກ່ອນໄປປະຈຳການ ແມ່ນມີຄວາມໝາຍຄວາມສຳຄັນຫຼາຍໃນການກະກຽມຄວາມພ້ອມໃຫ້ແກ່ນັກຮຽນຄູສຳລັບອາຊີບຄູຂອງພວກເຂົາໃນອານາຄົດ. ປົກກະຕິແລ້ວ ໃນໄລຍະລົງຝຶກຫັດສອນແມ່ນອະນຸຍາດໃຫ້ນັກຮຽນຄູເຊື່ອມຈອດກັນລະຫວ່າງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ແລະ ສ້າງທັກສະການສິດສອນຂອງພວກເຂົາ ໃນສະພາບແວດລ້ອມການສິດສອນຂອງຫຼັກສູດການສ້າງຄູກ່ອນໄປປະຈຳການ. ການຮັບປະກັນການລົງຝຶກຫັດສອນໃຫ້ບັນລຸເປົ້າໝາຍຕາມປະສົບການການຮຽນຮູ້ໃນທາງບວກ ແລະ ການກຽມຄວາມພ້ອມທີ່ໜັກແໜ້ນໃນການສອນການສຶກສາຮຽນຮ່ວມນັ້ນ ແມ່ນຂຶ້ນກັບການຕິດຕາມ ແລະ ການສະໜັບສະໜູນທີ່ມີຄຸນນະພາບດີ ເຊິ່ງເປັນບັນຫາໜຶ່ງທີ່ຕ້ອງໄດ້ຄົ້ນຄວ້າຕໍ່ໄປໃນພາກນີ້.

ມັນມີຄວາມຫຍຸ້ງຍາກ ໃນການທີ່ຈະກຳນົດແນ່ນອນວ່າວຽກລົງຝຶກຫັດສອນ ຕ້ອງມີຫຼາຍປານໃດໃນຫຼັກສູດການສ້າງຄູ ຫຼື ທຳມະຊາດຂອງການລົງຝຶກຫັດທີ່ແນ່ນອນ. ແຕ່ມີຄວາມຫວັງຢາກໃຫ້ນັກຮຽນຄູໄດ້ສຳພັດກັບໂຮງຮຽນຢ່າງຕໍ່ເນື່ອງໃນແຕ່ລະປີໃນເວລາເຂົາກຳລັງຮຽນຢູ່ສະຖາບັນສ້າງຄູ. ສິ່ງທີ່ກ່າວມານີ້ ສາມາດເກີດຂຶ້ນໄດ້ໂດຍຜ່ານຄວາມສະໝັກໃຈລົງໄປເຮັດວຽກກັບໂຮງຮຽນ (ເຊັ່ນ: ເປັນຜູ້ຊ່ວຍໃນການສອນ); ໂຄງການສະເພາະກັບໂຮງຮຽນ (ເຊັ່ນ: ການວິໄຈພາກປະຕິບັດ); ການລົງໄປສັງເກດການຮຽນ-ການສອນຕົວຈິງຢູ່ໂຮງຮຽນ ແລະ ໄລຍະເວລາທີ່ສອນຕົວຈິງ ແລະ/ຫຼື ຊ່ວຍໃນການສິດສອນທີ່ຍືນຍົງ. ການລົງຝຶກຫັດສອນຕອງເພີ່ມຄວາມຖີ່ ແລະ ໄລຍະເວລາຢູ່ໃນຫຼັກສູດ ຫຼື ຫຼັກສູດສ້າງຄູກ່ອນໄປປະຈຳການ, ຄວາມຈິງແລ້ວການບັນລຸເປົ້າໝາຍທີ່ແທ້ຈິງໃນປະສົບການຂອງນັກຮຽນຄູ ແມ່ນການຂະຫຍາຍເວລາໃນການລົງຝຶກກາຫັດໃນໂຮງຮຽນ.

ຄູສອນຢູ່ໃນໂຮງຮຽນທີ່ນັກຮຽນຄູລົງຝຶກຫັດ ກໍຍັງສາມາດໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອນັກຮຽນຄູທີ່ຝຶກຫັດສອນໃນຫ້ອງຮຽນ, ແຕ່ກໍມີບົດບາດເຊັ່ນດຽວກັນໃນການປະຕິບັດໜ້າທີ່ເປັນຄູທີ່ປຶກສາໃນການຊ່ວຍນັກຮຽນໃຫ້ເປັນຜູ້ສັງເກດທີ່ຫ້າວຫັນ ແລະ ຊ່ວຍສ້າງທັກສະໃນການແຕ່ງບົດສອນການສຶກສາຮຽນຮ່ວມຕົວຈິງ, ສອນຕົວຈິງ, ຄຸ້ມຄອງຫ້ອງຮຽນ ແລະ ເຮັດການປະເມີນຜົນການຮຽນ. ການຖອດຖອນບົດຮຽນໃນທາງຊຸກຍູ້ສົ່ງເສີມ ແລະ ສ້າງສັນແມ່ນມີຄວາມໝາຍຄວາມສຳຄັນທີ່ສຸດ ແລະ ມັນກໍມີຄວາມສຳຄັນທີ່ວ່າຄູຜູ້ທີ່ຕິດຕາມນັກຮຽນຄູນັ້ນມີການພົວພັນ ແລະ ໄດ້ຮັບການສະໜັບສະໜູນຈາກສະຖາບັນສ້າງຄູ.

ຄວາມຈິງແລ້ວ ນັກຮຽນຄູຄວນມີປະສົບການໃນສະພາວະຄວາມເປັນຈິງໃນການສອນການສຶກສາຮຽນຮ່ວມ ແລະ ສິ່ງທ້າທາຍຕ່າງໆໃນໄລຍະທີ່ພວກເຂົາລົງຝຶກຫັດສອນ, ໂດຍໃຫ້ມີເດັກຈາກຫຼາຍພາກສ່ວນຮຽນຮ່ວມນຳຕົວຢ່າງ, ເດັກທີ່ດ້ອຍໂອກາດໃນຊຸມຊົນ; ເດັກຈາກກຸ່ມຊົນເຜົ່າ ແລະ ນຳໃຊ້ຫຼາຍພາສາ; ເດັກທີ່ມີອາຍຸບໍ່ເທົ່າກັນ ແລະ ມີຄວາມສາມາດແຕກຕ່າງກັນ; ເດັກຈາກກຸ່ມເພດຍິງ-ຊາຍ; ເດັກພິການ; ເດັກທີ່ມາຈາກໂຮງຮຽນຢູ່ໃນຊົນນະບົດ ແລະ ຕົວເມືອງ ແລະ "ເດັກທີ່ມີພອນສະຫວັນ".

ການສ້າງ ແລະປະຕິບັດແຜນການລົງຝຶກຫັດສອນສຳລັບນັກຮຽນຄູເປັນຂະບວນການທີ່ສາມາດນຳໃຊ້ໃນການສ້າງສາຍພົວພັນກັນທີ່ມີຄວາມໝາຍ,ມີຜົນປະໂຫຍດຮ່ວມກັນລະຫວ່າງສະຖາບັນສ້າງຄູແລະ ໂຮງຮຽນ/ຊຸມຊົນ. ສາຍພົວພັນດັ່ງກ່າວ ສາມາດຕອບແທນເຊິ່ງກັນ ແລະ ກັນເຊິ່ງເປີດຄວາມຮັບຜິດຊອບໃຫ້ໂຮງຮຽນ ແລະ ຄູສອນມີສ່ວນຮ່ວມນຳກັນໃນການສ້າງຄູກ່ອນປະຈຳການ ແລະ ການພັດທະນາອາຊີບຈາກຄູ່ຮ່ວມມືຂອງສະຖາບັນສ້າງຄູ ແລະ ເພື່ອປະກອບສ່ວນຄວາມຮູ້ ແລະ ປະສົບການຂອງພວກເຂົາເຈົ້າເຂົ້າໃນການສ້າງຄູໂດຍກົງ (ເຊັ່ນ: ໂດຍຜ່ານການເປັນຄູທີ່ປຶກສາ ໃນໄລຍະນັກຮຽນຄູລົງຝຶກຫັດ ຫຼື ມີສ່ວນຮ່ວມໃນກອງປະຊຸມຝຶກອົບຮົມ/ເປັນຜູ້ອຳນວຍຄວາມສະດວກໃນກອງປະຊຸມຝຶກອົບຮົມແລະຜູ້ຖືກເຊີນໃຫ້ສອນຢູ່ສະຖາບັນສ້າງຄູ.

## ຕົວຢ່າງຈາກປະເທດມຽນມ້າ

### *ການເດີນທາງ[14] ລົງຝຶກຫັດຢູ່ພາກສະໜາມ*

ເຜົ່າ ກະແຮນ (Karen), ໜຶ່ງໃນຊາວພື້ນເມືອງ, ກຸ່ມຊົນເຜົ່າຂອງປະເທດ ມຽນມ້າ ໄດ້ຈັດຕັ້ງຫຼັກສູດສ້າງຄູກ່ອນໄປປະຈຳການຂອງຕົນເອງຢູ່ 2 ບ່ອນທີ່ມີສາຍແດນຕິດກັບປະເທດໄທ ແລະ ລັດ ກະແຮນ ປະເທດມຽນມ້າ. ຫຼັກສູດດັ່ງກ່າວໄດ້ສົ່ງເສີມພາສາ ແລະ ວັດທະນະທຳກະແຮນ, ຮວບຮວມເອົາຄວາມຮູ້ພື້ນເມືອງ ແລະການສຶກສາຕາເວັນຕົກ ແລະກຽມຄວາມພ້ອມໃຫ້ນັກຮຽນຄູເຜົ່າ ກະແຮນ ໃນການສອນຕາມສະພາວະຄວາມເປັນຈິງຂອງການສຶກສາໃນຊຸມຊົນທີ່ແຕກຕ່າງກັນໃນຊຸມຊົນ ກະແຮນ ຢູ່ປະເທດມຽນມ້າ.

ຫຼັກສູດດັ່ງກ່າວ ໄດ້ໃຫ້ເວລາແກ່ນັກຮຽນ 2 ປີໃນການຮຽນເປັນຄູກ່ອນໄປປະຈຳການ ແລະ ອີກ 2 ປີ ໃນການລົງຝຶກຫັດສອນຕົວຈິງຢູ່ໂຮງຮຽນເຜົ່າ ກະແຮນ ກ່ອນຈະເປັນຄູທີ່ມີວຸດທິຢ່າງເຕັມສ່ວນ. ໃນໄລຍະ2ປີທຳອິດຂອງຫຼັກສູດ, ເຖິງວ່ານັກຮຽນຈະຢູ່ໃນສະຖາບັນສ້າງຄູກໍຕາມ ແຕ່ພວກເຂົາກໍໄດ້ມີໂອກາດລົງຝຶກປະສົບການໃນໂຮງຮຽນທີ່ໃກ້ກັບສະຖາບັນໃນແຕ່ລະປີ. ໃນການລົງຝຶກປະສົບການໃນປີ ທຳອິດນັກຮຽນກໍໄດ້ເຂົ້າຮ່ວມແຜນງານໂຄງການບ່ອນທີ່ຄູຢູ່ສະຖາບັນສ້າງຄູ ແລະ ນັກຮຽນຄູໄດ້ໃຊ້ເວລາເດີນທາງເປັນເດືອນ (ສ່ວນຫຼາຍແມ່ນຍ່າງ) ຜ່ານຊຸມຊົນກະແຮນ (ນັບທັງບ້ານນ້ອຍ ແລະ ເມືອງໃຫຍ່) ຢູ່ໃນເຂດຈັດສັນບາງແຫ່ງ ເພື່ອພົບປະກັບຄູສອນ, ນັກຮຽນ, ພໍ່ແມ່ນັກຮຽນ ແລະ ຄະນະອຳນວຍການໂຮງຮຽນ. ການເດີນທາງດັ່ງກ່າວນີ້ ເປີດໂອກາດໃຫ້ນັກຮຽນຄູໄດ້ພົບປະ ກັບຊຸມຊົນ, ສຳພາດຊຸມຊົນ ແລະ ຮຽນຮູ້ຕື່ມກ່ຽວກັບການສຶກສາຢູ່ໃນລັດ ກະແຮນ ກ່ອນຈະໄດ້ລົງຝຶກກຫັດສອນ ແລະ ເຮັດວຽກຕົວຈິງ.

ໃນລະຫວ່າງການເດີນທາງລົງສະໜາມນັກຮຽນຄູກໍມີໂອກາດໃນການສ້າງບັນຍາກາດມ່ວນຊື່ນ, ເຮັດກິດຈະກຳປະຕິສຳພັນ ແລະ ກິດຈະກຳທາງດ້ານການສຶກສາກັບເດັກ, ພໍ່ແມ່ ແລະ

[14] ທ່ານ ກັບລານ, I. 2012. ການສຶກສາ ຄູຂອງ ທ່ານ ແຄເຣັນ ລຽບຕາມຊາຍແດນໄທ ແລະ ມຽນມ້າ-.ເຊິ່ງຕົ້ນ ເຫຼັ້ມ ຂອງວິທະຍານິພົນຍັງບໍ່ໄດ້ຮັບການພິມເຜີຍແຜ່ວິທະຍາໄລການຝຶກອົບຮົມຄູ ຂອງ ແຄເຣັນ( ເຄທີທີຊີ ທີ່ດຳເນີນການໂດຍ ກຸ່ມວິຊາການ ຂອງແຄເຣັນ. (ເຄທີດັບເບີນຢູຈີ). ເບິ່ງຕາມ ເວັບໄຊ: www.ktwg.org

ສະມາຊິກໃນຊຸມຊົນຕາມເສັ້ນທາງ ເຊິ່ງເປັນການນເສີມຂະຫຍາຍຄວາມໝັ້ນໃຈ ແລະ ປະສົບການຕົວຈິງທີ່ມີຄຸນຄ່າສຳລັບເຂົາ.

ນີ້ແມ່ນການສົນທະນາກັນຂອງນັກຮຽນຫ້ອງໜຶ່ງ ເຊິ່ງມີນັກຮຽນເຜົ່າ ກະແຣນ ປີທີ 1 ສົນທະນາກັນກ່ຽວກັບປະສົບການໃນການເດີນທາງລົງຝຶກປະສົບການ: "ສິ່ງທີ່ໜ້າສົນໃຈທີ່ສຸດສຳລັບຂ້າພະເຈົ້າແມ່ນການພົບປະກັບຄູສອນຢູ່ໃນ ລັດ ກະແຣນ. ເຖິງວ່າ ເຂົາໄດ້ເງິນໜ້ອຍແຕ່ເຂົາກໍເຮັດວຽກໜັກໃນການສຶກສາເດັກຊາວໜຸ່ມ ເພື່ອໃຫ້ກາຍເປັນຄົນ ທີ່ມີການສຶກສາ ເນື່ອງຈາກວ່າຂ້າພະເຈົ້າຈະເປັນຄູໂອກາດນີ້ໄດ້ສະໜອງທ່າແຮງໃຫ້ຂ້າພະເຈົ້າ. ຂ້າພະເຈົ້າໄດ້ຮຽນຮູ້ຈາກນັກຮຽນຄົນໜຶ່ງເຊັ່ນດຽວກັນວ່າລາວມີຄວາມຕ້ອງການຢາກໃຫ້ໂຮງຮຽນ ຂອງລາວມີມາດຕະຖານຂຶ້ນຕື່ມ ເພື່ອວ່າຈະໄດ້ສືບຕໍ່ການສຶກສາຂອງລາວໂດຍບໍ່ຕ້ອງອອກຈາກບ້ານໄປຮຽນຢູ່ບ່ອນອື່ນ. ຂ້າພະເຈົ້າໄດ້ຮັບການຊຸກຍູ້ສົ່ງເສີມ ແລະ ມີກຳລັງໃຈຈາກຄູສອນ ແລະ ນັກຮຽນ".

"ສິ່ງທີ່ໜ້າສົນໃຈທີ່ສຸດແມ່ນເມື່ອພວກເຮົາໄປຮອດບ້ານຕ່າງໆ ຊາວບ້ານກໍໄດ້ຕ້ອນຮັບພວກເຮົາເປັນຢ່າງດີ ແລະພວກເຂົາກະດີໃຈທີ່ໄດ້ພົບພວກເຮົາ. ພວກເຮົາເຫັນໄດ້ຢ່າງຈະແຈ້ງວ່າເດັກຕ້ອງການສຶກສາແທ້ໆ. ພໍ່ແມ່ນັກຮຽນກໍ່ຕ້ອງການມີສ່ວນຮ່ວມນຳ. ພວກເຂົາມີວຽກເຮັດແຕ່ພວກເຂົາກະຢຸດພັກວຽກ ເພື່ອມາຮ່ວມເວລານຳພວກເຮົາ."

"ໃນການເຮັດວຽກຮ່ວມກັນໃນກຸ່ມໜຶ່ງ (ຂອງນັກຮຽນຄູ) ກັບຊຸມຊົນພວກເຮົາຮຽນຮູ້ວ່າພວກເຮົາບໍ່ແມ່ນຄູ ທີ່ໄດ້ມາດຕະຖານ...ດັ່ງນັ້ນ, ເມື່ອພວກເຮົາໄດ້ເຮັດໃນສິ່ງທີ່ພວກເຮົາໄດ້ເວົ້ານຳກັນກັບເຂົາ, ພວກເຮົາໄດ້ສົນທະນາໃນສິ່ງດັ່ງກ່າວນັ້ນ. ເມື່ອພວກເຮົາກຽມກິດຈະກຳໃດໜຶ່ງ, ແຕ່ລະຄົນໄດ້ປະກອບຄຳເຫັນ ແລະ ພວກເຮົາໄດ້ສົນທະນາກັນກ່ຽວກັບສິ່ງດັ່ງກ່າວແລ້ວເລືອກເອົາສິ່ງທີ່ດີທີ່ສຸດ. ໃນອານາຄົດພວກເຮົາຕ້ອງເຮັດວຽກໃດໜຶ່ງເພີ່ມຕື່ມ ເພື່ອເຮັດວຽກຢ່າງໃກ້ຊິດກັບ ແລະ ຜູ້ນຳຂອງເມືອງ ເພື່ອວ່າພວກເຮົາຈະໄດ້ແລກປ່ຽນວຽກນຳກັນ ແລະ ເຮັດໃຫ້ການສຶກສາດີຂຶ້ນຕື່ມ".

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 10

*"ຄູຢູ່ສະຖາບັນສ້າງຄູຕ້ອງສ້າງສາຍພົວພັນທີ່ດີກັບໂຮງຮຽນແລະຊຸມຊົນແລະຕ້ອງມີຜົນປະໂຫຍດຈາກປະສົບການຂອງພວກເຂົາເອງໃນການສອນຢູ່ໂຮງຮຽນ".*

ເພື່ອຮັກສາການເຊື່ອມຕໍ່ກັນລະຫວ່າງການສິດສອນ ແລະ ຄຸນລັກສະນະອື່ນໆຂອງການສຶກສາສິ່ງສຳຄັນສຳລັບຄູຢູ່ສະຖາບັນສ້າງຄູແມ່ນຕ້ອງໃຊ້ເວລາໃນການເຮັດໃນ/ກັບໂຮງຮຽນ ແລະ ຊຸມຊົນ. ໃນເມື່ອຄູຢູ່ສະຖາບັນສ້າງຄູມີຄວາມສາມາດ ພົວພັນກັບໂຮງຮຽນ ແລະ ມີເວລາຢູ່ໃນໂຮງຮຽນຢ່າງເປັນປະຈຳແລ້ວກໍຈະສາມາດເສີມຂະຫຍາຍຄວາມເຂົ້າໃຈຕໍ່ກັບການສຶກສາໄດ້. ສິ່ງດັ່ງກ່າວນີ້ແມ່ນເຮັດວຽກກ້າວໄປສູ່ການຮັກສາການສອນ ແລະ ການສະໜັບສະໜູນນັກຮຽນຄູໃຫ້ຕັ້ງໜ້າຫຼັກໄດ້, ປະຕິບັດຕົວຈິງ, ທັນການ ແລະ ມີຄວາມສອດຄ່ອງ.

ເຖິງວ່າຄູຢູ່ສະຖາບັນສ້າງຄູໄດ້ພົບບັນຫາຫຍຸ້ງຍາກທາງດ້ານເວລາ ແລະ ການບໍລິຫານເຊິ່ງເປັນສິ່ງທ້າທາຍກໍຕາມ, ແຕ່ກໍມີໂອກາດທີ່ເປັນໄປໄດ້ສຳລັບພວກເຂົາເຈົ້າທີ່ຈະໃຊ້ເວລາຢູ່ໃນໂຮງຮຽນຖ້າວ່າສະຖາບັນສ້າງຄູ ແລະ ໂຮງຮຽນມີຄວາມຍືດຍຸ່ນ ແລະ ມີການລິເລີ່ມປະຕິບັດ.

ຄວາມເປັນໄປໄດ້ປະກອບມີດັ່ງນີ້:

- ຈັດຕັ້ງ ແລະ ມີສ່ວນຮ່ວມຢູ່ໃນກອງປະຊຸມກຸ່ງວກັບການສອນຮ່ວມກັນ ແລະ ກິດຈະກຳອື່ນໆ (ເຊັ່ນ: ເນັ້ນໜັກສະເພາະໃສ່ທັກສະ ແລະ ສະມັດຕະພາບຕ່າງໆເຊັ່ນການຮຽນຮູ້ໜັງສື, ການສ້າງອຸປະກອນການສອນ ແລະ ອື່ນໆ) ລະຫວ່າງຄູໃນສະຖາບັນສ້າງຄູ/ສະຖາບັນ, ໂຮງຮຽນ ແລະ ຊຸມຊົນ;
- ຄູໃນສະຖາບັນສ້າງຄູລົງໄປຫາໂຮງຮຽນໃນໄລຍະນັກຮຽນຄູລົງຝຶກຫັດ (ເຊັ່ນ: ໄປພົບກັບສະມາຊິກຂອງໂຮງຮຽນໃນຊຸມຊົນ, ສັງເກດນັກຮຽນຄູຂອງພວກເຂົາໃນການສອນຕົວຈິງ ແລະ/ຫຼື ຕິດຕາມການສອນໃນທົ່ວໄປ;
- ຮັບເຊີນໃຫ້ໄປສອນໃນໄລຍະສັ້ນໃນໂຮງຮຽນທີ່ນັກຮຽນຄູລົງຝຶກຫັດນັ້ນ.

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 11

*"ນັກຮຽນຄູຕ້ອງການການສະໜັບສະໜູນ ແລະ ໃຫ້ຄຳທີ່ປຶກສາແບບສ້າງສັນ ແລະ ຕໍ່ເນື່ອງຈາກຄູໃນສະຖາບັນສ້າງຄູ ແລະ ຄູທີ່ປຶກສາໃນເວລາລົງຝຶກຫັດໂຮງຮຽນ".*

ການໃຫ້ຄຳປຶກສາທີ່ເໝາະສົມຮຽກຮ້ອງໃຫ້ສະຖາບັນສ້າງຄູສະໜັບສະໜູນນັກຮຽນຂອງຕົນເອງນັບທັງດ້ານວິຊາການທີ່ມີສ່ວນພົວພັນກັບທັກສະການສອນ ແລະ ດ້ານຊີວິດການເປັນຢູ່ໃນເຂດຊົນນະບົດ (ເຊັ່ນ: ໃນສິ່ງທີ່ພົວພັນເຖິງການໃຫ້ຄຳປຶກສາ, ການໃຫ້ກຳລັງໃຈ ແລະ ການໃຫ້ການຊ່ວຍເຫຼືອດ້ານຄຸນສົມບັດ). ນີ້ກໍເນື່ອງຈາກວ່ານັກຮຽນຄູໄດ້ພົບກັບສິ່ງທ້າທາຍທາງດ້ານຄວາມຮູ້ສຶກໃນການສິດສອນ. ການໃຫ້ຄຳປຶກສາ ແລະ ການສະໜັບສະໜູນນັກຮຽນຄູຕ້ອງໄດ້ມີການວາງແຜນ ແລະ ຄິດໄລ່ງົບປະມານຢ່າງເໝາະສົມຢູ່ໃນລະດັບສະຖາບັນສ້າງຄູ. ການສະໜັບສະໜູນດັ່ງກ່າວຕ້ອງຕໍ່ເນື່ອງຂຶ້ນກັບຄວາມຖີ່ໃນການສື່ສານ ແລະ ອີງໃສ່ການສ້າງສາຍພົວພັນທີ່ມີຄວາມເຊື່ອໝັ້ນລະຫວ່າງຄູໃນສະຖາບັນສ້າງຄູ ແລະ ນັກຮຽນຄູ.

ນັກຮຽນຄູກໍຕ້ອງການໄດ້ຮັບການສະໜັບສະໜູນເຊັ່ນດຽວກັນ ໂດຍຜ່ານການໃຫ້ຄຳປຶກສາຈາກຄູໃນໂຮງຮຽນບ່ອນທີ່ນັກຮຽນຄູລົງຝຶກຫັດ. ຄູທີ່ປຶກສາແມ່ນໄດ້ຖືກຈັດເປັນຜູ້ຊຸກຍູ້ທີ່ດີທີ່ສຸດໃນການໃຫ້ການຊ່ວຍເຫຼືອເມື່ອນັກຮຽນມີຄວາມຕ້ອງການຄຳປຶກສາ (ເຊັ່ນ: ຢ່າງຮີບດ່ວນຫຼັງຈາກບົດຮຽນທີ່ມີຄວາມທ້າທາຍ). ບົດບາດໃນການນິເທດຕິດຕາມ ແລະ ການໃຫ້ຄຳປຶກສາຂອງຄູຕ້ອງເຮັດຢ່າງແຈ່ມແຈ້ງ.

ສະຖາບັນສ້າງຄູຄວນມີໜ້າທີ່ໃນການຕິດຕາມເບິ່ງສາຍພົວພັນລະຫວ່າງນັກຮຽນຄູແລະໂຮງຮຽນໃນໄລຍະລົງຝຶກຫັດສອນ ເພື່ອຮັບປະກັນວ່າຄວາມຕ້ອງການຂອງນັກຮຽນໄດ້ຮັບການແກ້ໄຂ ແລະ ຄູກໍມີຄວາມສະດວກສະບາຍ ໃນການໃຫ້ຄຳປຶກສາ ແລະ ຢູ່ໃນສະພາບແວດລ້ອມທີ່ດີສຳລັບການໃຫ້ຄຳປຶກສາທີ່ແທ້ຈິງ.

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 12

*"ນັກຮຽນຄູຕ້ອງການການຄຳແນະນຳ ແລະ ປະສົບການໃນການສ້າງ ແລະ ນຳໃຊ້ເຄືອຂ່າຍການສະໜັບສະໜູນຢູ່ພາຍໃນໂຮງຮຽນ ແລະ ຊຸມຊົນ (ເຊັ່ນ: ຄູຜູ້ອື່ນໆ, ຄູຜູ້ຊ່ວຍ, ພໍ່ແມ່ນັກຮຽນ)"*

ການສຶກສາຮຽນຮ່ວມຕ້ອງການໃຫ້ມີສະພາບແວດລ້ອມທີ່ມີການສະໜັບສະໜູນ ເພື່ອຈະເລີນເຕີບໂຕ.ນັກຮຽນຄູຕ້ອງການປະສົບການໃນການຊອກຫາການສະໜັບສະໜູນ ແລະ ການຄຸ້ມຄອງການສະໜັບສະໜູນນັບທັງໃນ ແລະ ນອກຫ້ອງຮຽນ. ສິ່ງດັ່ງກ່າວນີ້ ລວມມີປະສົບການທາງດ້ານການສຶກສາແລະ ປະສົບການຕົວຈິງ ໃນການເຮັດວຽກຮ່ວມກັນກັບຄູຜູ້ອື່ນໆຢ່າງມີປະສິດທິຜົນ ແລະ ການຄຸ້ມຄອງ ໂຮງຮຽນ (ເຊັ່ນ: ກັບຫົວໜ້າຄູ); ໃນການເຮັດວຽກຮ່ວມກັບຄູຊ່ວຍຢ່າງມີປະສິດທິຜົນ ແລະ ໃນການເຮັດວຽກກັບພໍ່ແມ່ນັກຮຽນ ເພື່ອສະໜັບສະໜູນການຮຽນຂອງລູກຂອງພວກເຂົາ.

ການລົງຝຶກຫັດຄວນມີໂຄງຮ່າງ (ບໍ່ມີແຜນກໍເຊັ່ນດຽວກັນ) ໃນການໃຫ້ໂອກາດແກ່ນັກຮຽນຄູເຮັດວຽກກັບພໍ່ແມ່ນັກຮຽນ ແລະ ສະມາຊິກຂອງໂຮງຮຽນໃນຊຸມຊົນ. ສິ່ງສຳຄັນແມ່ນການສ້າງ ແລະ ສະກັດສາຍພົວພັນທີ່ດີລະຫວ່າງຄູ ແລະ ພໍ່ແມ່ນັກຮຽນ/ຄອບຄົວໃນການສະໜັບສະໜູນການສຶກສາຮຽນຮ່ວມແມ່ນເປັນສິ່ງໜຶ່ງທີ່ຕ້ອງໄດ້ຮັບການຍູ້ແຮງເລີ່ມຕັ້ງແຕ່ຕົ້ນໆຂອງການສ້າງຄູກ່ອນໄປປະຈຳການ. ການເຮັດວຽກນຳພໍ່ແມ່ນັກຮຽນ ແລະ ສະມາຊິກໃນຊຸມຊົນຈະຊ່ວຍເຮັດໃຫ້ນັກຮຽນຄູເຂົ້າໃຈເຖິງບັນຫາທາງສັງຄົມທີ່ມີຕໍ່ການສຶກສາຮຽນຮ່ວມ ແລະ ບັນຫາເຫຼົ່ານີ້ໄດ້ມີຜົນກະທົບຕໍ່ການຮຽນໃນໂຮງຮຽນແນວໃດ.

ເຄືອຂ່າຍການສະໜັບສະໜູນຂອງນັກຮຽນດ້ວຍກັນກໍເປັນສິ່ງສຳຄັນເຊັ່ນດຽວກັນ ແລະນັກຮຽນຄູກໍຕ້ອງໄດ້ຮັບການຊຸກຍູ້ສົ່ງເສີມ ເພື່ອສ້າງຄວາມເປັນເພື່ອນມິດທີ່ສຳຄັນກັບໝູ່ຄູດ້ວຍກັນ; ຄວາມເປັນເພື່ອນມິດທີ່ສຳຄັນແມ່ນນັບທັງການໄດ້ຮັບການສະໜັບສະໜູນ ແລະ ການສອງແສງຈາກການປະຕິບັດຕົວຈິງແມ່ນຈະໄດ້ມີການຄົ້ນຄວ້າຕໍ່ໄປຢູ່ໃນຂໍ້ຄວາມໃນການໂຄສະນາສົ່ງເສີມວິທີສິດສອນໃນຂໍ້ຕໍ່ໄປ.

## ຄູສອນຕິດຕາມກັນແບບເພື່ອນມິດ

ເຖິງວ່າການສິດສອນເປັນວຽກທີ່ໃຫ້ການຕອບແທນທີ່ດີ, ແຕ່ການເປັນຄູສອນບາງຄັ້ງກໍແມ່ນປະສົບການທີ່ໂດດດ່ຽວໂດຍສະເພາະແມ່ນໃນເມື່ອບໍ່ມີຄູສອນຫຼາຍຢູ່ໃນໂຮງຮຽນ ຫຼື ຊຸມຊົນຂອງທ່ານ. ການມີຄົນໃດຄົນໜຶ່ງໂອ້ລົມກ່ຽວກັບວຽກຂອງທ່ານສາມາດເຮັດໃຫ້ການສິດສອນຮູ້ສຶກວ່າມີຄວາມໂດດດ່ຽວໜ້ອຍລົງ ແລະ ເປັນວິທີທີ່ດີໃນການຖອດຖອນບົດຮຽນເຫັນ ແລະ ປັບປຸງການປະຕິບັດຕົວຈິງໃນນາມເປັນຄູຄົນໜຶ່ງ ແລະ ຄູສອນການສຶກສາຮຽນຮ່ວມ. ແນ່ນອນ, ທ່ານອາດຈະມີໄດ້ໂອກາດໂອ້ລົມຢ່າງບໍ່ເປັນທາງການກັບເພື່ອນຮ່ວມງານກ່ຽວກັບວຽກໃນເມື່ອທ່ານມີໂອກາດ. ເຖິງຢ່າງໃດກໍຕາມຈະເປັນປະໂຫຍດເຊັ່ນດຽວກັນຖ້າມີການເວົ້າເຖິງປະສົບການໃນການສອນ ແລະ ການຮຽນຂອງທ່ານຕາມໂຄງຮ່າງທີ່ວາງໄວ້ແລ້ວ. ສິ່ງດັ່ງກ່າວນີ້ ເອີ້ນວ່າຄວາມເປັນເພື່ອນມິດທີ່ຕຳນິວິຈານ.

ເພື່ອນຕຳນິວິຈານເປັນຄົນຜູ້ທີ່ສາມາດຊ່ວຍທ່ານໄດ້ ກ່ຽວກັບວຽກຂອງທ່ານໃນນາມເປັນຄູຄົນໜຶ່ງ. ສ່ວນເພື່ອນຜູ້ອື່ນໆ, ໜຶ່ງໃນສິ່ງທີ່ມີຄຸນຄ່າທີ່ສຸດທີ່ເພື່ອນຕຳນິວິຈານຄົນໜຶ່ງສາມາດເຮັດໄດ້ ແມ່ນມີໜ້າທີ່ໃນການຮັບຟັງທ່ານໂອ້ລົມກ່ຽວກັບປະສົບການຂອງທ່ານໃນການເປັນຄູຄົນໜຶ່ງ, ນັບທັງແງ່ດີແລະແງ່ບໍ່ດີ.

ໃນຖານະເປັນຄູ ທາງເລືອກທີ່ດີທີ່ສຸດສຳລັບເພື່ອນຕຳນິວິຈານນັ້ນ ອາດແມ່ນເປັນຄູຄືກັນກັບທ່ານເພາະວ່າ ພວກເຂົາເຂົ້າໃຈກ່ຽວກັບວຽກຂອງທ່ານ ແລະ ສິ່ງທ້າທາຍທີ່ທ່ານເຄີຍປະເຊີນຢູ່. ເພື່ອນທີ່ຕຳນິວິຈານນັ້ນສາມາດໃຫ້ ແລະ ຮັບຟັງຄຳຄິດຄຳເຫັນແລະນຳໃຊ້ປະສົບການຂອງພວກເຂົາ ເພື່ອຊ່ວຍທ່ານໃນການແກ້ໄຂສິ່ງທ້າທາຍ ແລະ ບັນຫາຕ່າງໆ.

ຄວາມເປັນເພື່ອນຕຳນິວິຈານທີ່ດີແມ່ນຂຶ້ນກັບຄວາມເຊື່ອໝັ້ນຕໍ່ກັນ. ໃນຖານະເປັນເພື່ອນຕຳນິວິຈານຄົນໜຶ່ງທ່ານຄວນພະຍາຍາມ ແລະ ຄວນໃຫ້ການສະໜັບສະໜູນ ແລະ ບໍ່ແມ່ນຜູ້ຕັດສິນ.

ເພື່ອນຕຳນິວິຈານທີ່ດີແມ່ນຈະພັດທະນາ ແລະ ເປັນຜູ້ທີ່ເຂັ້ມແຂງຢູ່ຕະຫຼອດ. ຖ້າຫາກທ່ານ ແລະ ເພື່ອນຕຳນິວິຈານຂອງທ່ານເຫັນວ່າກອງປະຊຸມຄັ້ງແລກຂອງທ່ານເປັນປະສົບການໃນທາງບວກ, ໃຫ້ວາງແຜນເວລາພົບກັນໃໝ່ອີກ ແລະ ເຮັດຊ້ຳຂະບວນການດັ່ງກ່າວນີ້ເລື້ອຍໆໄປ.

## ຂໍ້ຄວາມຂອງການສົ່ງເສີມວິທີສິດສອນ 13

*"ນັກຮຽນຄູຕ້ອງມີທັກສະໃນການສ່ອງແສງຄືນຈາກການປະຕິບັດຕົວຈິງທີ່ພົວພັນກັບວົງຈອນການວິໄຈພາກປະຕິບັດ."*

ການປະຕິບັດຕົວຈິງທີ່ມີສ່ວນພົວພັນກັບການວິໄຈພາກປະຕິບັດແມ່ນມີຄວາມສຳຄັນທີ່ສຸດສຳລັບການຮຽນ-ການສອນ ທີ່ດີເພາະວ່າມັນຊ່ວຍໃຫ້ຄູສອນໄດ້ຄົ້ນຄິດຢ່າງຕັ້ງໜ້າກ່ຽວກັບການສອນ ແລະ ການຮຽນຂອງນັກຮຽນ ແລະ ສ້າງການປ່ຽນແປງ ແລະ ການປັບປຸງຢ່າງມີທິວຄິດປະດິດສ້າງຕາມລຳດັບ. ໃນເມື່ອຄູຫາກເຂົ້າໃຈກ່ຽວກັບການປະຕິບັດຕົວຈິງຄວາມຕ້ອງການ ແລະ ທັດສະນະຂອງນັກຮຽນຂອງພວກເຂົາຫຼາຍຂຶ້ນເທົ່າໃດ (ນັບທັງສະມາຊິກຂອງໂຮງຮຽນໃນຊຸມຊົນ), ພວກເຂົາກໍຈະສາມາດປະເຊີນໜ້າກັບສິ່ງທ້າທາຍຕ່າງໆຂອງການສຶກສາຮຽນຮ່ວມຫຼາຍຂຶ້ນເທົ່ານັ້ນ. ໃນແນວຄວາມຄິດນີ້, ນັກຮຽນຄູຕ້ອງໄດ້ຮັບການສອນ ແລະ ໄດ້ຮັບການສະໜັບສະໜູນໃຫ້ປະຕິບັດຕົວຈິງໂດຍນຳໃຊ້ເຕັກນິກວິທີການຕ່າງໆ ເພື່ອສ່ອງແສງຄືນກ່ຽວກັບຜົນຂອງການປະຕິບັດຂອງພວກເຂົາໃນນາມເປັນຄູ ແລະ ເປັນນັກຮຽນ, ປະສົບການ ແລະ ການປະພຶດຂອງຜູ້ຮຽນຂອງພວກເຂົາໃນການຊ່ວຍກຳນົດບັນຫາຕ່າງໆກໍຄືການປະຕິບັດຕົວຈິງໃນທາງບວກ ເພື່ອເຮັດໃຫ້ມີການປັບປຸງໃໝ່.

ການສ່ອງແສງຄືນຈາກການປະຕິບັດຕົວຈິງເປັນເຄື່ອງມືຮັບໃຊ້ການຕິດຕາມ ແລະ ປະເມີນຜົນການຮຽນ-ການສອນມີພົວພັນກັບຄວາມຄິດຂອງການປະເມີນໃນການສຶກສາຮຽນຮ່ວມດັ່ງທີ່ໄດ້ຄົ້ນຄວ້າຢູ່ໃນພາກທີ່ຜ່ານມາ.

ການສ່ອງແສງຄືນຈາກການປະຕິບັດຕົວຈິງແມ່ນເປັນປະໂຫຍດ, ເປັນພາກສ່ວນໜຶ່ງຂອງບວນການວິໄຈພາກປະຕິບັດຢ່າງຕໍ່ເນື່ອງທີ່ຄູ ແລະ ສະມາຊິກໃນຊຸມຊົນໄດ້ຄົ້ນຄິດກ່ຽວກັບບັນຫາ ແລະ ສິ່ງທ້າທາຍຕົ້ນຕໍທີ່ພວກເຂົາຕ້ອງ ແກ້ໄຂ, ສ້າງແຜນປະຕິບັດງານ, ສ້າງການປ່ຽນແປງໂດຍອີງໃສ່ບົດສອບຖາມຂອງການວິໄຈຂອງພວກເຂົາ, ການປະເມີນຜົນກະທົບ, ການດັດປັບຕາມລຳດັບ ແລະ ການເຮັດຊ້ຳຂະບວນການດັ່ງກ່າວນີ້ເລື້ອຍໆອີງຕາມຄວາມຈຳເປັນ.

ນັກຮຽນຄູຕ້ອງການການສຶກສາ, ການປະຕິບັດຕົວຈິງແລະການສະໜັບສະໜູນໃນການເຮັດການວິໄຈພາກປະຕິບັດຢູ່ໃນ ແລະ ກັບໂຮງຮຽນໃນຊຸມຊົນ. ສິ່ງດັ່ງກ່າວນີ້ ມີຄວາມສຳຄັນເພາະວ່າການວິໄຈພາກປະຕິບັດສາມາດເປັນຂະບວນການທີ່ມີຄວາມໝາຍຄວາມສຳຄັນ ແລະ ໃຫ້ການສະໜັບສະໜູນແບບຄົບຊຸດ, ໃຫ້ທັງໝົດໂຮງຮຽນເປັນການສຶກສາຮຽນຮ່ວມ. ຕົວຢ່າງນັກຮຽນໄດ້ຮັບການສະໜັບສະໜູນໃນການວິ ໄຈໝູ່ຄູຮຸ້ນດຽວກັນທີ່ອອກໂຮງຮຽນ (ເຊັ່ນ: ການຊອກຫາເດັກ ທີ່ຢູ່ໃນຊຸມຊົນຂອງພວກເຂົາເຊິ່ງໄດ້ອອກຈາກໂຮງຮຽນ ແລະ ຍ້ອນສາເຫດທັຍໆ) ເຊິ່ງນຳໄປເຖິງຄວາມພະຍາຍາມທີ່ດີໃນການຊັກຊວນເອົາ ເດັກດັ່ງກ່າວກັບມາເຂົ້າໂຮງຮຽນອີກ ແລະ ນຳໄປເຖິງການ

ພົວພັນກັບຫຼັກສູດເຊັ່ນດຽວກັນ (ເຊັ່ນ: ຂະບວນການດຳເນີນການສຳຫຼວດ ແລະ ນັບຈຳນວນເດັກທີ່ອອກຈາກໂຮງຮຽນສາມາດພົວພັນເຖິງວິຊາເລກ).

ການຖອດຖອນບົດຮຽນຕົວຈິງ ແລະ ການວິໄຈພາກປະຕິບັດ ບໍ່ພຽງແຕ່ພົວພັນເຖິງການຝຶກຫັດສອນຕົວຈິງ ໃນໂຮງຮຽນ, ແຕ່ຄວນຈະໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອຢູ່ພາຍໃນສະຖາບັນສ້າງຄູ. ຕົວຢ່າງ: ນັກຮຽນຄູຄວນຈະໄດ້ຮັບການສະໜັບສະໜູນ ເພື່ອຖອດຖອນບົດຮຽນກ່ຽວກັບປະສົບການໃນການຮຽນຂອງພວກເຂົາ; ຄູໃນສະຖາບັນສ້າງຄູກໍເຊັ່ນດຽວກັນຄວນມີສ່ວນຮ່ວມໃນການຖອດຖອນບົດຮຽນຈາກຕົວຈິງເພື່ອໃຫ້ ແລະ ຄູສອນຢູ່ສະຖາບັນສ້າງຄູ ແລະ ນັກຮຽນຄູສາມາດເຮັດວຽກຮ່ວມກັນເພື່ອສ້າງໂຄງການວິໄຈພາກປະຕິບັດຢູ່ພາຍໃນສະຖາບັນສ້າງຄູຂອງຕົນໃນການສະໜັບສະໜູນການສອນ ແລະ ການຮຽນທີ່ດີກວ່າ ແລະ ມີລັກສະນະຮຽນຮ່ວມຫຼາຍຂຶ້ນ.

ໃນທີ່ສຸດ, ການຖອດຖອນບົດຮຽນຕົວຈິງ ແລະ ການວິໄຈພາກການປະຕິບັດຄວນຈະຖືກຮັບຮູ້ໃນລັກສະນະທີ່ສຳຄັນຂອງການພັດທະນາອາຊີບແບບຄູຢ່າງຕໍ່ເນື່ອງ.

# ຈະຮູ້ໄດ້ແນວໃດວ່າວຽກງານໂຄສະນາສິ່ງເສີມນັ້ນມີຜົນກະທົບດ້ານບວກ

*ປື້ມຄູ່ມືເພື່ອການໂຄສະນາສິ່ງເສີມທີວທີ 1* ໄດ້ຊີ້ໃຫ້ເຫັນວ່າເມື່ອວາງແຜນໂຄສະນາສິ່ງເສີມທ່ານຕ້ອງພັດທະນາ ຕົວບົ່ງຊີ້ຕ່າງໆນັ້ນເຊັ່ນດຽວກັນ ເພື່ອຊ່ວຍທ່ານໃນການຕິດຕາມຂະບວນການ ແລະ ຜົນກະທົບຕໍ່ວຽກຂອງພວກທ່ານ. ຕົວບົ່ງຊີ້ທີ່ທ່ານຈະສ້າງຂຶ້ນນັ້ນ ແມ່ນຂຶ້ນກັບລາຍລະອຽດຂອງຈຸດປະສົງຂອງການໂຄສະນາສິ່ງເສີມຂອງທ່ານ. ຕົວບົ່ງຊີ້ເຊັ່ນແຜນການຄວນຈະໄດ້ຮັບການພັດທະນາຂຶ້ນ ໂດຍຜ່ານຂະບວນການແບບມີສ່ວນຮ່ວມທີ່ມີຫຼາຍໆພາກສ່ວນເຂົ້າຮ່ວມນຳ.

ລາຍການດັ່ງຕໍ່ໄປນີ້ສະເໜີໃຫ້ເຫັນເຖິງຕົວຊີ້ບອກທີ່ເປັນໄປໄດ້. ການໂຄສະນາສິ່ງເສີມທີ່ຮຽກຮ້ອງໃຫ້ມີການປັບປຸງວິທີການສິດສອນ ທັງນີ້ເພື່ອເປັນການກະກຽມຄວາມພ້ອມທີ່ດີໃຫ້ແກ່ສະຖາບັນສ້າງຄູ, ນັກຮຽນຄູ ແລະ ຄູສອນສຳລັບການສຶກສາຮຽນຮ່ວມ, ສາມາດໄດ້ຮັບການພິຈາລະນາຢ່າງມີປະສິດທິຜົນຖ້າຫາກວ່າ:

- ມີຄວາມເຂົ້າໃຈ ແລະ ຍອມຮັບຢ່າງເຕັມສ່ວນກ່ຽວກັບອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມນັ້ນແມ່ນມາຈາກລະບົບ, ແຕ່ບໍ່ແມ່ນມາຈາກນັກຮຽນ.
- ຂະບວນການແກ້ໄຂອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມລວມມີດັ່ງນີ້: ການກຳນົດອຸປະສັກຕ່າງໆ, ການວາງຍຸດທະສາດການແກ້ໄຂ ແລະ ການເຮັດວຽກ ເພື່ອປ່ຽນແປງລະບົບເພື່ອເອົາຊະນະອຸປະສັກເຫຼົ່ານັ້ນ.
- ຄວາມຫຼາກຫຼາຍທາງດ້ານຊົນເຜົ່າ, ພາສາ, ຄວາມສະເໝີພາບຂອງຍິງ-ຊາຍ, ຄວາມສາມາດ/ຄວາມພິການ ແລະ ອື່ນໆຢູ່ໃນສະຖາບັນສ້າງຄູແລະໃນໂຮງຮຽນເຊິ່ງເຂົ້າໃຈວ່າເປັນທ່າແຮງແລະໄດ້ຮັບການຍອມຮັບຕາມລຳດັບ.

- ສະຖາບັນສ້າງຄູສະໜອງການຝຶກອົບຮົມ ແລະ ສະໜັບສະໜູນນັກຮຽນຄູ ແລະ ພະນັກງານຢ່າງຕໍ່ເນື່ອງໃນການສິດສອນແບບເອົານັກຮຽນເປັນໃຈກາງ, ແບບມີສ່ວນຮ່ວມ ແລະ ປັບປຸ່ນໄດ້.
- ສະຖາບັນສ້າງຄູ ສະໜອງການຝຶກອົບຮົມ ແລະ ສະໜັບສະໜູນນັກຮຽນຄູ ແລະ ພະນັກງານຢ່າງຕໍ່ເນື່ອງກ່ຽວກັບວິທີການສຶກສາຮຽນຮ່ວມສະເພາະເຊັ່ນການຊ່ວຍເຫຼືອເດັກພິການ, ການສົ່ງເສີມຄວາມເທົ່າທຽມກັນ ແລະ ການສອນຫ້ອງຄວບ.
- ສະຖາບັນສ້າງຄູ ສະໜອງການເຝິກອົບຮົມ ແລະ ການສະໜັບສະໜູນຢ່າງຕໍ່ເນື່ອງໃຫ້ແກ່ນັກຮຽນ ແລະ ພະນັກງານໃນການສ້າງຫຼັກສູດ ແລະ ອຸປະກອນໃຫ້ແທດເໝາະກັບສະພາວະຄວາມຄວາມເປັນຈິງໃນທ້ອງຖິ່ນຂອງຊຸມຊົນ ແລະ ຫ້ອງຮຽນ.
- ສະຖາບັນສ້າງຄູສະໜອງການຝຶກອົບຮົມ ແລະ ການສະໜັບສະໜູນຢ່າງຕໍ່ເນື່ອງໃຫ້ແກ່ນັກຮຽນ ແລະ ພະນັກງານ ໃນການປະເມີນໃນການສຶກສາຮຽນຮ່ວມ (ເຊັ່ນ: ການປະເມີນເພື່ອປັບປຸງ, ປະເມີນຕໍ່ເນື່ອງ ແລະ ປະເມີນທີ່ແທ້ຈິງ ກໍຄືການປະເມີນໃນເວລາຮຽນຈົບ).
- ນັກຮຽນຄູ ແລະ ພະນັກງານຢູ່ສະຖາບັນສ້າງຄູໄດ້ຮັບການສະໜັບສະໜູນ ພື່ອພິຈາລະນາເຖິງຄວາມຕ້ອງການຂອງນັກຮຽນແຕ່ລະຄົນໂດຍຜ່ານການສ້າງແຜນການຮຽນຮູ້ຂອງແຕ່ລະຄົນ ແລະ ໂດຍເອົາໃຈໃສ່ອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມໃນລະບົບການສຶກສາ.
- ນັກຮຽນຄູມີໂອກາດຢ່າງເປັນປົກກະຕິ ແລະ ຍືນຍົງໃນການລົງຝຶກປະສົບການໃນໂຮງຮຽນໃນຫຼັກສູດການສ້າງຄູ ຂອງພວກເຂົາ.
- ນັກຮຽນຄູ ແລະ ພະນັກງານມີສາຍພົວພັນກັບໂຮງຮຽນ ແລະ ຊຸມຊົນຢ່າງສະໜິດແໜ້ນ ແລະ ສົມບູນແບບ.
- ຄູໄດ້ຮັບຄຳປຶກສາ ແລະ ການສະໜັບສະໜູນແບບສ້າງສັນ ແລະ ຕໍ່ເນື່ອງຈາກຄູ ແລະ ຄູທີ່ປຶກສາຂອງພວກເຂົາໃນເວລາລົງຝຶກຫັດ.
- ນັກຮຽນຄູໄດ້ຮັບການແນະນຳ ແລະ ການສະໜັບສະໜູນໃນການສ້າງ ແລະ ນຳໃຊ້ເຄືອຂ່າຍການສະໜັບສະໜູນພາບໃນໂຮງຮຽນ ແລະ ຊຸມຊົນ (ເຊັ່ນ: ກັບຄູອາຈານ, ຜູ້ຊ່ວຍໃນການສອນ, ພໍ່ແມ່ນັກຮຽນ).
- ສະຖາບັນສ້າງຄູສະໜອງການເຝິກອົບຮົມ ແລະ ການສະໜັບສະໜູນຢ່າງຕໍ່ເນື່ອງໃຫ້ແກ່ນັກຮຽນ ແລະ ພະນັກງານໃນການຖອດຖອນບົດຮຽນຕົວຈິງ ແລະ ການວິໄຈພາກປະຕິບັດ.

# ເອກະສານຊ້ອນທ້າຍ

ໃນຕາຕະລາງລຸ່ມນີ້ ພວກເຮົາຂໍແນະນຳເປົ້າໝາຍທີ່ເປັນໄປໄດ້ ສຳລັບແຕ່ລະຂໍ້ຄວາມສະໜັບສະໜູນທີ່ໄດ້ກ່າວເຖິງໃນສິ່ງທ້າທ້າຍຂ້າງເທິງ. ນອກຈາກນີ້ຍັງເປັນພື້ນທີ່ສຳລັບເຈົ້າ ທີ່ຈະເຂົ້າສູ່ແນວຄວາມຄິດກ່ຽວກັບ ວິທີການສະໜັບສະໜູນ ແລະ ສິ່ງທີ່ເຈົ້າສາມາດຖ່າຍທອດຂໍ້ມູນເຫຼົ່ານີ້ ເພື່ອເປົ້າໝາຍທີ່ສຳຄັນໃນສະພາບແວດລ້ອມຂອງເຈົ້າ. ເຈົ້າຄວນຈະມີເປົ້າໝາຍໃນການພັດທະນາແນວຄວາມຄິດເຫຼົ່ານີ້ ຜ່ານການປຶກສາຫາລືເປັນຂະບວນການກັບ ເພື່ອນຮ່ວມງານ ແລະ ຜູ້ທີ່ກ່ຽວຂ້ອງອື່ນໆ. ສຳລັບຄຳແນະນຳໃນການສະໜັບສະໜູນ ແລະ ວິທີການ/ສື່ ເພີ່ມຕື່ມທີ່ລະອຽດສາມາດເບິ່ງໃນປື້ມຄູ່ມື *ໂຄສະນາສົ່ງເສີມ ເຫຼັ້ມທີ 1.*

| ຂໍ້ຄວາມຂອງການໂຄສະນາສິ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສິ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *" ອຸປະສັກທີ່ມີຕໍ່ການສຶກສາຮຽນຮ່ວມແມ່ນລະບົບ ແລະ ໂຮງຮຽນຢູ່ສະເໝີ, ບໍ່ແມ່ນນັກຮຽນແຕ່ຢ່າງໃດ "* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານແລະສະມາຊິກຂອງໂຮງຮຽນໃນຊຸມຊົນ (ເຊັ່ນ: ພໍ່ແມ່ນັກຮຽນ) | ໃຫ້ການອະທິບາຍຊີ້ແຈງແກ່ຄູໃນໂອກາດຝຶກອົບຮົມຄູໃນຂັ້ນຕ່າງໆ |
| *" ການແກ້ໄຂອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮ່ວມຕ້ອງມີວິທີການທີ່ເປັນລະບົບເຊິ່ງລວມມີດັ່ງນີ້: 1. ກຳນົດອຸປະສັກຕາງໆທີ່ມີຕໍ່ການສຶກສາຮຽນຮ່ວມ; 2. ວາງຍຸດທະສາດໃນການແກ້ໄຂອຸປະສັກເຫຼົ່ານັ້ນ; 3. ເຮັດວຽກເພື່ອປ່ຽນແປງລະບົບຕາມລຳດັບ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານ ແລະ ສະມາຊິກຂອງໃນໂຮງຮຽນ | ໃຫ້ການອະທິບາຍຊີ້ແຈງແກ່ຄູໃນໂອກາດຝຶກອົບຮົມຄູ |
| *"ຄວາມຫຼາກຫຼາຍຕ້ອງຖືກຍອມຮັບ ແລະເຫັນວ່າເປັນທາແຮງ, ບໍ່ແມ່ນຈຸດອ່ອນ ".* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານ ແລະ ສະມາຊິກຂອງໃນໂຮງຮຽນ | ໃຫ້ການອະທິບາຍຊີ້ແຈງແກ່ຄູໃນໂອກາດຝຶກອົບຮົມຄູ |

*ໃຫ້ຂຽນຄຳຄິດເຫັນຂອງທ່ານໃສ່ໂດຍອີງໃສ່ຄຳແນະນຳຈາກປຶ້ມຄູ່ມືທີ່ອທີ 1

| ຂໍ້ຄວາມຂອງການໂຄສະນາສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *"ນັກຮຽນຄູຕ້ອງການຝຶກອົບຮົມໃນການນຳໃຊ້ວິທີສິດສອນແບບເອົານັກຮຽນເປັນໃຈກາງ, ມີສ່ວນຮ່ວມນຳ ແລະ ປັບປຸງຢ່າງຕໍ່ເນື່ອງເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງນັກຮຽນ - ມີນັກຮຽນຄູຫຼາຍຄົນທີ່ມີປະສົບການໜ້ອຍຫຼືບໍ່ມີປະສົບການເລີຍໃນການນຳໃຊ້ວິທີສິດສອນດັ່ງກ່າວນີ້ ແລະ ພວກນັກຮຽນຄູດັ່ງກ່າວນີ້ຕ້ອງການໄດ້ຮັບການສະໜັບສະໜູນໃນລະດັບສູງເພື່ອເຂົ້າໃຈ ແລະ ນຳໃຊ້ວິທີສິດສອນຢ່າງມີປະສິດທິຜົນ".* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານໃນໂຮງຮຽນໂດຍສະເພາະແມ່ນຜູ້ທີ່ໃຫ້ການສະໜັບສະໜູນ ແລະ ໃຫ້ຄຳປຶກສານັກຮຽນຄູໃນໄລຍະລົງຝຶກຫັດ | ໃຫ້ການອະທິບາຍຊີ້ແຈງແກ່ຄູໃນໄລຍະຝຶກອົບຮົມຄູ |
| *"ວິທີສິດສອນການສຶກສາຮຽນຮ່ວມຕ້ອງການການຝຶກອົບຮົມວິທີການສອນການສຶກສາຮຽນຮ່ວມສະເພາະເຊັ່ນ: ການຊ່ວຍເຫຼືອນັກຮຽນພິການ, ການສົ່ງເສີມຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ,ການສອນຫ້ອງຄວບ ແລະ ການສອນທີ່ມີການໃຊ້ຫຼາຍພາສາ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ | ຝຶກອົບຮົມຄູກ່ຽວກັບວິທີການສອນການສຶກສາຮຽນຮ່ວມ |
| *"ນັກຮຽນຄູຕ້ອງການໃຫ້ມີການເສີມສ້າງກຳລັງແຮງ, ການຝຶກອົບຮົມ ແລະ ການສະໜັບສະໜູນໃນການດັດປັບ ແລະ ການສ້າງຫຼັກສູດ ແລະ ອຸປະກອນຕ່າງໆເພື່ອໃຫ້ເໝາະສົມກັບສະພາວະຄວາມເປັນຈິງຂອງຫ້ອງຮຽນ ແລະ ຊຸມຊົນໃນທ້ອງຖິ່ນຂອງພວກເຂົາ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານ ແລະ ສະມາຊິກຂອງໃນໂຮງຮຽນ<br>• ສະມາຊິກໃນຊຸມຊົນ | ຈັດຝຶກອົບຮົມ ແລະ ແນະນຳນັກຮຽນຄູກ່ຽວກັບບັນຫາດັ່ງກ່າວກ່ອນລົງຝຶກຫັດສອນ |

*ໃຫ້ຂຽນຄຳຄິດເຫັນຂອງທ່ານໃສ່ໂດຍອີງໃສ່ຄຳແນະນຳຈາກປຶ້ມຄູ່ມືທີ່ 1

| ຂໍ້ຄວາມຂອງການໂຄສະນາ ສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດ ເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *"ນັກຮຽນຄູຕ້ອງການການຝຶກອົບຮົມ ເພື່ອໃຫ້ເຂົ້າໃຈ ແລະ ນຳໃຊ້ການປະເມີນຜົນການຮຽນຂອງນັກຮຽນ, ກວມເອົາການປະເມີນເພື່ອປັບປຸງ, ການປະເມີນແບບຕໍ່ເນື່ອງ ແລະ ການປະເມີນທີ່ແທ້ຈິງ (ກໍຄືການປະເມີນໃນເວລາຮຽນຈົບຫຼັກສູດ). ສະຖາບັນສ້າງຄູຕ້ອງນຳໃຊ້ວິທີການປະເມີນຜົນການຮຽນຂອງນັກຮຽນຄູໃນຮູບແບບທີ່ຄ້າຍຄືກັນນີ້ເຊັ່ນດຽວກັນ."* | • ພະນັກງານກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະຜູ້ທີ່ມີສ່ວນກ່ຽວຂ້ອງກັບການປະເມີນໂຮງຮຽນ, ການປະເມີນ ແລະ ກວດກາ<br>• ພະນັກງານສຶກສາເມືອງ/ແຂວງຜູ້ທີ່ມີສ່ວນກ່ຽວຂ້ອງກັບການປະເມີນໂຮງຮຽນ, ການປະເມີນ ແລະ ການກວດກາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ | ຈັດຝຶກອົບຮົມນັກຮຽນຄູກ່ຽວກັບບັນຫາດັ່ງກ່າວກ່ອນລົງຝຶກຫັດສອນ |
| *"ນັກຮຽນຄູຕ້ອງໄດ້ຮັບການສະໜັບສະໜູນເພື່ອຄຳນຶງເຖິງຄວາມຕ້ອງການຂອງນັກຮຽນແຕ່ລະຄົນໂດຍຜ່ານການສ້າງແຜນໃນການຮຽນຂອງແຕ່ລະຄົນແຕ່ໃນເວລາດຽວກັນນັ້ນຕ້ອງຮູ້ລະບົບອຸປະສັກຕ່າງໆທີ່ມີຕໍ່ການສຶກສາຮຽນຮວມ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານແລະສະມາຊິກຂອງໂຮງຮຽນໃນຊຸມຊົນ (ເຊັ່ນ: ພໍ່ແມ່ນັກຮຽນ) | ຈັດຝຶກອົບຮົມນັກຮຽນຄູກ່ຽວກັບບັນຫາດັ່ງກ່າວກ່ອນລົງຝຶກຫັດສອນ |
| *"ນັກຮຽນຄູຕ້ອງການໂອກາດໃນຊ່ວງໄລຍະເວລາລົງປະສົບການໃນການສິດສອນຕົວຈິງເຊິ່ງເປັນພາກສ່ວນໜຶ່ງຂອງຫຼັກສູດການສ້າງຄູຂອງພວກເຂົາ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ໃຫ້ຄຳປຶກສາແກ່ນັກຮຽນຄູໃນໄລຍະລົງຝຶກຫັດ<br>• ພະນັກງານຢູ່ໃນໂຮງຮຍຮຽນທີ່ມີການລົງຝຶກຫັດ | ຈັດໃຫ້ນັກຮຽນຄູໄດ້ລົງຝຶກປະສົບການໃນໂຮງຮຽນ |

*ໃຫ້ຂຽນຄຳຄິດເຫັນຂອງທ່ານໃສ່ໂດຍອີງໃສ່ຄຳແນະນຳຈາກປຶ້ມຄູ່ມືທີ 1

| ຂໍ້ຄວາມຂອງການໂຄສະນາສົ່ງເສີມແມ່ນຫຍັງ? | ແມ່ນໃຜທີ່ຈະຕ້ອງຮັບຟັງ? | ທ່ານຄວນເຮັດແນວໃດເພື່ອສົ່ງຂໍ້ຄວາມນີ້ໃນສະພາບການຂອງທ່ານເອງ?* |
|---|---|---|
| *"ຄູໃນສະຖາບັນສ້າງຄູຕ້ອງສ້າງສາຍພົວພັນທີ່ດີກັບໂຮງຮຽນ ແລະຊຸມຊົນແລະ ຕ້ອງມີຜົນປະໂຫຍດທີ່ໄດ້ຮັບຈາກປະສົບການສອນຢູ່ໃນໂຮງຮຽນ."* | • ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ໃຫ້ຄຳປຶກສາແກ່ນັກຮຽນຄູໃນໄລຍະລົງຝຶກຫັດ<br>• ພະນັກງານຢູ່ໃນໂຮງຮຍຮຽນທີ່ມີການລົງຝຶກຫັດ | ຈັດໃຫ້ຄູໃນສະຖາບັນສ້າງຄູລົງ ຕິດແທດ ຫຼື ສິດສອນໃນໂຮງຮຽນສາມັນ ຫຼື ໃນໂຮງຮຽນສາທິດຂອງຕົນ |
| *"ນັກຮຽນຄູຕ້ອງການ ການສະໜັບສະໜູນ ແລະ ການໃຫ້ຄຳປຶກສາແບບສ້າງສັນ ແລະ ຕໍ່ເນື່ອງຈາກຄູສອນຢູ່ສະຖາບັນສ້າງຄູ ແລະຄູ ທີ່ປຶກສາໃນເວລາລົງຝຶກຫັດຢູ່ໂຮງຮຽນ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານແລະສະມາຊິກຂອງໂຮງຮຽນໃນຊຸມຊົນ (ເຊັ່ນ: ພໍ່ແມ່ນັກຮຽນ) | ຈັດໃຫ້ຄູໃນສະຖາບັນສ້າງລົງຕິດຕາມຂະບວນຝຶກຫັດ ຂອງນັກຮຽນຄູ |
| *"ນັກຮຽນຄູຕ້ອງມີທັກສະໃນການຖອດຖອນບົດຮຽນຕົວຈິງທີ່ພົວພັນກັບວົງຈອນການວິໄຈພາກປະຕິບັດ."* | • ພະນັກງານກະຊວງສຶກສາທິການ ແລະກິລາ<br>• ຜູ້ອຳນວຍການສະຖາບັນສ້າງຄູ<br>• ພະນັກງານຢູ່ສະຖາບັນສ້າງຄູຜູ້ທີ່ຮັບຜິດຊອບການສອນ ແລະ ສ້າງຫຼັກສູດຝຶກອົບຮົມ<br>• ພະນັກງານແລະສະມາຊິກຂອງໂຮງຮຽນໃນຊຸມຊົນ | ຈັດໃຫ້ນັກຮຽນຄູມີການຖອດຖອນບົດຮຽນເຊິ່ງກັນແລະກັນພາຍຫຼັງສອນຕົວຈິງ |

*ໃຫ້ຂຽນຄຳຄິດເຫັນຂອງທ່ານໃສ່ໂດຍອີງໃສ່ຄຳແນະນຳຈາກປຶ້ມຄູ່ມືທີວທີ 1

# ການສົ່ງເສີມການສຶກສາຮຽນຮ່ວມໃນການສ້າງຄູ ເປັນຊຸດປື້ມຄູ່ມືໃນຈຳນວນທັງໝົດ 5 ເຫຼັ້ມ




## ປື້ມຄູ່ມືເຫຼັ້ມທີ 1: ພາກສະເໜີ

ຢູ່ພາກສະເໜີນີ້ໄດ້ອະທິບາຍ ກ່ຽວກັບເນື້ອໃນຂອງບັນດາປື້ມຄູ່ມື ແລະ ປະຫວັດຄວາມເປັນມາຂອງປື້ມຄູ່ມືດັ່ງກ່າວ. ນອກນັ້ນ ຍັງໄດ້ນຳສະເໜີ ກ່ຽວກັບການສຶກສາຮຽນຮ່ວມຂອງຄູ ແລະ ການແກ້ໄຂວຽກງານໂຄສະນາສົ່ງເສີມໃຫ້ມີປະສິດທິຜົນ, ໃຜທີ່ສາມາດເຮັດໄດ້ ແລະ ຈະເຮັດດ້ວຍວິທີໃດ. ພ້ອມກັນນັ້ນ ຢູ່ໃນພາກສະເໜີນີ້ ຍັງໄດ້ສະໜອງເນື້ອໃນສະຫຼຸບຫຍໍ້ ຂອງບັນດາປື້ມຄູ່ມື ກ່ຽວກັບນະໂຍບາຍ, ຫຼັກສູດ, ອຸປະກອນ ແລະ ວິທີການສິດສອນຕ່າງໆພ້ອມນຳ.




## ປື້ມຄູ່ມືເຫຼັ້ມທີ 2: ນະໂຍບາຍ

ປື້ມຄູ່ມືເຫຼັ້ມນີ້ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກຕ່າງໆທີ່ມີຢູ່ໃນນະໂຍບາຍການສ້າງຄູ. ພ້ອມກັນນັ້ນ ກໍ່ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍການສຶກສາຮຽນຮ່ວມ.




## ປື້ມຄູ່ມືເຫຼັ້ມທີ 3: ຫຼັກສູດ

ປື້ມຄູ່ມືເຫຼັ້ມນີ້ ແມ່ນເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກຕ່າງໆທີ່ມີຢູ່ໃນຫຼັກສູດການສ້າງຄູກ່ອນປະຈຳການ ແລະ ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະການຈັດຕັ້ງປະຕິບັດຫຼັກສູດໃນການສຶກສາຮຽນຮ່ວມ.




## ປື້ມຄູ່ມືເຫຼັ້ມທີ 4: ວັດຖຸອຸປະກອນ

ປື້ມຄູ່ມືເຫຼັ້ມນີ້ ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກທີ່ມີຢູ່ໃນອຸປະກອນການຮຽນ/ການສອນທີ່ນຳໃຊ້ໃນການສ້າງຄູ. ນອກນັ້ນ ກໍ່ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆ ທີ່ມີສ່ວນກ່ຽວຂ້ອງກັບ ການສຶກສາໃນການໂຄສະນາສົ່ງເສີມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດບັນດາວັດຖຸອຸປະກອນການຮຽນ/ການສອນ ສຳລັບການສຶກສາຮຽນຮ່ວມ.




## ປື້ມຄູ່ມືເຫຼັ້ມທີ 5: ວິທີສິດສອນ

ປື້ມຄູ່ມືເຫຼັ້ມນີ້ໄດ້ເນັ້ນໜັກໃສ່ບັນຫາທ້າທາຍ ແລະ ອຸປະສັກທີ່ມີຢູ່ໃນວິທີສິດສອນທີ່ນຳໃຊ້ຢູ່ບັນດາສະຖາບັນສ້າງຄູ. ພ້ອມນີ້ ຍັງໄດ້ສະໜອງຍຸດທະສາດ ແລະ ວິທີແກ້ໄຂໃຫ້ແກ່ສະຖາບັນສ້າງຄູ, ກະຊວງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນໆທີ່ມີ ສ່ວນກ່ຽວຂ້ອງກັບການສຶກສາໃນການໂຄສະນາປູກລະດົມ ແລະ ເພື່ອສົ່ງເສີມຄວາມຍືດຍຸ່ນ, ການພັດທະນາ ແລະ ການຈັດຕັ້ງປະຕິບັດວິທີສິດສອນສຳລັບການສຶກສາຮຽນຮ່ວມ.

**UNESCO Bangkok Office**
Asia and Pacific Regional Bureau for Education

Mom Luang Pin Malakul Centenary Building
920 Sukhumvit Road, Prakanong, Klongtoey
Bangkok 10110, Thailand
Email: appeal@unesco.org
Website: www.unesco.org/bangkok
Tel: +66-2-3910577 Fax: +66-2-3910866